# ນິທານພົກຈອກ

ຂອງ

## ຣາຊບັນດິດສະພາລາວ

ພິມເທື່ອທີ ໑ ຈຳນວນ ໑.໐໐໐ ເຫຼັ້ມ

ທີ ໑ ເດືອນ ກະຣະກະດາ ພ. ສ. ໒໕໑໓

໑໙໗໐

# ຄຳນຳ

ພື້ນນົກຈອກຄຳກອນສະບັບນີ້ ທ່ານມະຫາຈູມ ຈິນຕາພິດ ແຫ່ງກອງວັນນະຄະດີ ໄດ້ຕົ້ນສະບັບມາແຕ່ວັດນາຊັຍ ເຊິ່ງຂຽນໄວ້ໃນໃບລານເປັນຕົວລາວສມັຍເກົ່າ ອ່ານຍາກເຕັມທີ ທັງໃບລານກໍຂາດເຫັຽນ ເຖິງດັ່ງນັ້ນກໍດີ ຜູ້ຊຳຮະກໍໄດ້ໃຊ້ວິຣິຍະພາບກ່າຍອອກພ້ອມກັບເຮັດເປັນອັກຕອນໃຫ້ອ່ານງ່າຍ, ນັບໄດ້ວ່າທ່ານມີຄວາມຮູ້ ແລະ ຊຳນານໃນກະບອນກອນ ແລະພາສາວັນນະຄະດີຂອງຊາດເປັນຢ່າງດີຜູ້ນຶ່ງ ດັ່ງຈະເຫັນໄດ້ຈາກຂັ້ນຕົ້ນ ແລະ ໃນບາງແຫ່ງທີ່ເຫັນວ່າເນື້ອຄວາມບໍ່ພໍ ຫຼື ກອນບໍ່ພໍບາດ ຜູ້ຊຳຮະກໍໄດ້ໃຊ້ປະຕິພານຂອງຕົນເຮັດໃຫ້ຄວາມໃນທີ່ນັ້ນໆບໍຣິບູນ.

ໜັງສືພື້ນນົກຈອກຄຳກອນສະບັບນີ້ ກໍເຊັ່ນດຽວກັບໜັງສືເຣື່ອງອື່ນໆຂອງລາວເຮົາ ເຊິ່ງໂດຍມາກຜູ້ແຕ່ງບໍ່ໄດ້ລົງນາມ, ວັນ, ເວລາ ແລະ ທີ່ຢູ່ໄວ້ ຈຶ່ງບໍ່ອາດຊາບໄດ້ວ່າຜູ້ແຕ່ງຊື່ຫຍັງ ແລະ ແຕ່ງວັນ, ເດືອນ, ປີ, ສມັຍ ແລະ ທີ່ໃດ? ຊາບໄດ້ແຕ່ວ່າ ຜູ້ແຕ່ງໄດ້ຍົກເອົາເຣື່ອງໃນອັຖກະຖາຊາດົກມາແຕ່ງເປັນຄຳກອນ ຕັ້ງຕົ້ນແຕ່ນົກຈອກສອງຜົວເມັຽເຮັດຮັງໃສ່ໜອດອັດສີສິງ ເຊິ່ງມີໃນອິສີສິງຄະຊາດົກ ແລ້ວຍ້າຍໄປເຮັດຮັງຢູ່ກໍເລົາໃນປ່າເລົ່າ. ເມື່ອໄຟໄໝ້ປ່າລາມມາ ເມັຽຍອມຕາຍຄາຮັງຢູ່ກັບລູກນ້ອຍສ່ວນຜົວບິນໜ່າຍ. ຈາກຊາດນັ້ນ ບາງນົກຈອກໄດ້ມາເກີດເປັນລູກສາວພຍາ--ເມືອງນຶ່ງ ບໍ່ປາກນຳຜູ້ຊາຍຕັ້ງແຕ່ຮູ້ພາວະ.....................

ເວົ້າຮອດກະບວນກອນ ຜູ້ແຕ່ງໄດ້ໃຊ້ສັບທັມມະດາບໍ່ມີສັບສູງ ເກີນ

ໄປເປັນອັນວ່າອ່ານຟັງງ່າຍ ແລະ ຮູ້ເຣື່ອງດີ.

ໜັງສືຄຳກອນເຣື່ອງນີ້ ເປັນວັນນະຄະດີທີ່ຫາຍາກເຣື່ອງນຶ່ງ ທາງກອງວັນນະຄະດີຈຶ່ງໄດ້ຈັດຕີພິມອອກເຜີຍແຜ່ ເພື່ອຮັກສາວັນນະຄະດີປະເພດຮ້ອຍກອງນີ້ໄວ້ສືບໄປ.

ວຽງຈັນ, ວັນທີ່ ໑໐ ມິຖຸນາ ໑໙໗໐

ປະທານຄນະກັມມະການວັນນະຄະດີ

ສິມຈິນ ງິນ

## ພື້ນນິກາຈອກ

ສິສຸມັງຄະລະນ້ອມ    ກົ້ມເກດກອນຖວາຍ
ຂ້າຂໍຍໍມືແປະ    ໃສ່ສຽນຖວິນໄຫວ້
ໄຕທະວານພ້ອມ    ເອງຊຸລີນຳນ່ຽອ
ຄຸນຍ່ອມຍົກໃສ່ເກົ້າ    ປະນົມໄຫວ້ປາຖນາ    ກ່ອນແລ້ວ
ອະທັງອັນວ່າຂ້າພະເຈົ້າ ຜູ້ຊື່ຈິນຕາພົດ
ປາກົດມີໃນນາມ    ອາຊການກຽນກວ້າງ
ສຶກສາທີການຫ້ອງ    ຂອງລາວອັນສະອາດ
ເປັນທີ່ອາວາດຢັ້ງ    ປະສົງສ້າງສ່ອນບຸນ
ຍີຈັກຮຽນໃຫ້ແຈ້ງ    ຕຳແໜ່ງອາຊການ    ອັນນັ້ນ
ຊື່ວ່າກອງອັນນະຄະດີເດີມ    ດັ່ງອັນເອົາອ້າງ
ເປັນບ່ອນເນົາສະຖຽນສ້າງ    ຄຸນທັນເກື້ອກໍ່
ເປັນຕູ້ເສາະແຫຼ່ງເລື່ອງ    ຕຳອາເຄົ້າເກົ່າເດີມ
ມີຄນະພວກພ້ອງ    ພ້ອມເພື່ອນສະມາຊິກ
ລ້ວນແຕ່ເມທາຊົນ    ປາດເປືອງປຽວຮູ້
ໃນແງ່ທາງທັນເທົ້າ    ຄອງຄຸນພຸທສາດ
ສ້າງວາດໂຮມຮ່ອມເຮົ້າ    ເນົາຫັ້ນຮ່ອມກັນ    ເຈົ້າເອີຍ
ບັດນີ້ຂ້າຂໍອັນທາເທົ້າ    ທຸກທີ່ເອງຊຸລີ

ພຸທຄຸນທັມສົງ ໝູ່ສາງແສງກ້າ
ບິດາມາດາພ້ອມ ອຸປັດຊາອາຈານສູດ
ຕລອດທັງເທພໄທ້ ສວາງເສື້ອຊູ່ແດນ
ກັບທັງຄຸດນາກນ້ຳ ນາງນາດທໍຣະນີ
ອິສຸນນາງ ເມຄລາອິນຟ້າ
ຈະຕຣາທ້າວ ຍົມພິບານທັງ ໔
ຜູ້ເພີ່ນມີໂສດແຈ້ງ ຕາເຫຼື້ອມເຫຼືອດໄກ
ຂໍໃຫ້ມາປີ່ນປ້ອງ ປາງຂນາດເທອນທັນ ແດ່ເນີ
ດຳເນີນການສຳອະ ກອດກອນກອຍແກ້
ຝູງໝູ່ໂພຍໄພແພ້ ພານສູນເສັງສວ່າງ
ປ້ອງເຄາະເຂັນຢ່າຕ້ອງ ຜອງຕັງບຊູ່ປະການ ແດ່ທ້ອນ
ກີຣະການລ່ວງແລ້ວ ຫຼາຍຂອບພັນອະສາ ນາບັ້ນ
ບໍ່ອາດຄະນະນານັບ ອ່ານຄອງເຖິງໄດ້
ມີຢູ່ໃນທັມເຈົ້າ ພຣະໂຄດົມແກ້ກ່າວ
ຄາວເມື່ອພຸທບາດໃຊ້ ເສັງຊ້ຳສິ່ງເອນ
ຍັງມີນິກຈອກນ້ອຍ ເປັນຄູ່ຜິວເມັງ
ສອງກໍແປງຮັງແຂວນ ໝອດຄາງອັດສີເຈົ້າ
ກໍຫາກຫຼາຍອັນເຂົ້າ ຫຼາຍຄືນເລີຍລ່ວງ ນາແລ້ວ
ນິກຈິ່ງໄດ້ລູກນ້ອຍ ພຽງພ້ອມຮ່ວມຮັງ
ມັນກໍພຽນພ່ຳລ້ຽງ ລູກອ່ອນສາຍໃຈ

ຂອບເນື້ອອາຣຸນໃສ ສ່ອງມາເປັນສີ
ຜົວກໍເອົາຕີນຜ້າຍ ບິນໄປຫາເຫື່ຽອ
ທ່ຽວຊອກໃຊ້ ແມງໄມ້ມົດໄຮ
ໄດ້ເຫື່ຽອແລ້ວ ເຮວຮີບຄືນມາ
ເຖິງບຸດຕາ ຍື່ນຍໍແຍງໃຫ້
ອັນວ່າບຸດຕາໄທ້ ເມັງແພງຮັບຮີບ
ກິນອີ່ມແລ້ວ ຫົວທ້ອນຊື່ນຊົມ
ວັນນື່ງນົກຈອກນ້ອຍ ຕົວທີ່ເປັນຜົວ
ບິນໄປຫາອາຫານ ຢູ່ໃນສະນ້ຳ
ເອົາຕີນເຂົ້າ ບົວບານຄວັດເຄັ້ງ
ໃນໄກສອນດອກໄມ້ ບົວແກ້ວກີບບານ
ມັນກໍຊອກນັ້ນນີ້ ໃນດອກດວງຫອມ
ເວລາເລີຍ ລ່ວງກາຍເກີນຊ້າ
ພໍເມື່ອຕາວັນຂື້ນ ພົງວາຍແດດແກ່ ມາແລ້ວ
ບົວເລົ່າຫຸບຫໍ່ໄວ້ ຜົວນັ້ນກໍຈິ່ງຄາ
ກໍຈິ່ງອອກບໍ່ໄດ້ ຂັງຢູ່ໃນບົວ ຫັ້ນແລ້ວ
ຕົວເມັງຄອຍ ຢູ່ຮັງຄອງຖ້າ
ກໍບໍ່ເຫັນຜົວແກ້ວ ຄອຍດາຍເຫົ້າຄ່ຳ
ກໍຈິ່ງອິດເຫື່ຽອແທ້ ວັນນັ້ນຄ່ຳດາຍ
ມັນກໍພຸມໆເວົ້າ ສັກຸນາລູກອ່ອນ

(ສະຊ່ອນໜ້າ    ຈາແກ້ວລູກຕົນ)

ວັນນີ້ພີ່ເຈົ້າໄປທ່ຽວກໍ້    ຫົນແຕ່ງທາງໃດ    ແມ່ເດ

ປະໃຫ້ສອງເອົາອຶດ    ເຕື່ຽວກິນວັນນີ້

ພີ່ເຈົ້າຈັກວ່າໄປຫົນກໍ້    ທາງໃດບໍ່ຮູ້ແຕ່ງ    ແມ່ແລ້ວ

ຈັກວ່າກາແລະແຮ້ງ    ງູຊ້ໍຕອດກິນ    ແມ່ລື

    ຫຼືວ່າພີ່ເຈົ້າໄປມີຊູ້    ຊິມສອງເສັ້ຽຈາກ    ແມ່ນໍ

ກິຈິ່ງຮັກເພີ່ນພຸ້ນ    ຊັງແກ້ວລູກເນັ້ຽ    ແມ່ເດ

ຈັກຊິໄປຫາລື    ທາງໃດບໍ່ຮູ້ແຕ່ງ

ຢ້ານແຕ່ປະລູກນ້ອຍ    ກາຊ້ໍຊິຈິກກິນ    ແລນໍ

ທີ່ນີ້ກູຈັກຕາຍຄາໜີ້    ໃນຮັງນໍາລູກ    ກູແລ້ວ

ຕາງໃຫ້ດັບຊື່ອມ້ຽນ    ເມື່ອຟ້າສວ່າງເວນ    ຫັ້ນແລ້ວ

    ບັດນີ້ຈັກກ່າວເຖິງຕົວອົວພຸ້ນ    ຊັງຢູ່ໃນບົວ    ກ່ອນແລ້ວ

ຄຶດຄະນຶງພາຍຫຼັງ    ລູກເນັ້ຽຄອຍຖ້າ

ໂອ໌ປານນີ້ເນັ້ຽແພງແກ້ວ    ຄອຍຫາກິນເຕື່ຽອ    ນໍາແລ້ວ

ກູກິນາຢູ່ຄ້າງ    ຄາໜີ້ດັ່ງລື    ນີ້ເດ

    ກູກິຊັງຢູ່ນີ້ .    ເປັນກໍາອັນຍິ່ງ    ຈິງແລ້ວ

ກິຈິ່ງອອກບໍ່ໄດ້    ເປັນເວທນາຈິດ    ແທ້ນໍ

ປານນີ້ສາຍໃຈກູ    ຢູ່ຮັງຄອງຖ້າ    ພີ່ລື

ໂອນໍປານໃດເດ    ບົວຫອງຊິໄຂກາບ    ເສັ້ຽນໍ

ກູກິນາຢູ່ຄ້າງ    ຄາໜີ້ສແມ່ງຕາຍ    ແລນໍ

ຄ້ອນວ່ານົກຮ່ຳແລ້ວ　　ມັນເລົ່ານອນຫຼັບ
ເດິກພໍດີ　　ໝອກຮວາຍຮ່ຳກ້ານ
ແຕ່ນັ້ນບົວທອງແກ້ວ　　ເລີຍໄຂຂົວະກາບ
ກໍຈຶ່ງບິນອອກໄດ້　　ຜັນຜ້າຍເຜີ້ນໜີ
ມັນກໍສັບເອົາໄດ້　　ໄກສອນເຕັມປາກ
ບິນລ່ອງຜ້າຍ　　ໄປແຫ້ບໍ່ນານ
ກໍຈຶ່ງເມືອເຖິງແກ້ວ　　ເມັ້ຽຕົນທັງລູກ
ເອົາເຕື່ຽອໃຕ້　　ເມັ້ຽແກ້ວເລົ່າຊັງ
ແຕ່ນັ້ນຕົວເມັ້ຽຢ້ຽນ　　ເຫັນຜົວມາຮອດ
ຍໍເຕື່ຽອໃຕ້　　ເມັ້ຽຊ້ຳບໍ່ກິນ
ຍາມນັ້ນຜົວກ່າວຕ້ານ　　ລົມເມັ້ຽເວົ້າຕໍ່
(ເວົ້າຕໍ່ນ້ອງ　　ເມັ້ຽແກ້ວກ່າວຈາ)
ເປັນໃດແກ້ວ　　ສາຍສມອນເມັ້ຽນິ່ງ　　ຮຽນເອີຍ
ເຈົ້າບໍ່ປາກບໍ່ເວົ້າ　　ອັນນີ້ສິ່ງໃດ　　ນໍ້ເດ
ພີ່ກໍຍໍເຕື່ຽອໃຕ້　　ຈອມນີ່ງມິກິນ
ສາຍໃຈກູ　　ສິ່ງໃດອັນນີ້
ຊູ່ລື້ເຈົ້າຮັບຟ້າວ　　ກິນເຕື່ຽອນຳຮຽນ　　ພີ່ນາ
ອັນນີ້ເຈົ້າກໍໂຊງໂນງຄຶດ　　ດັ້ງລືມີຕານ
ພີ່ກໍຫຼິງໂສມໜ້າ　　ກະບອນເມັ້ຽຄືຊີຄຽດ
ສີແຈ່ມເຈົ້າ　　ກະບອນໜ້າບໍ່ຄອຍ　　ພີ່ເດ

| | | |
|---|---|---|
| ເມື່ອນັ້ນສັກກູນາແກ້ວ | ເນັ້ງແພງຂານຕອບ | |
| ຊິກຊາກໃຫ້ | ຜົວແກ້ວແຕ່ງຕົນ | |
| ເຈົ້າກໍລະຂ້ອຍໄວ້ | ອົດເທື່ຽວຫິວຕາຍ | ໜີ້ແລ້ວ |
| ເຈົ້າກໍໄປຫາກິນ | ຊູດງອນມີເຂື້ອ | |
| ຕັ້ງວ່າໄລລາຂ້ອຍ | ທັງສອງແມ່ລູກ | |
| ໄປທ່ຽວຫຼິ້ນ | ມີຊູ້ບໍ່ຄອຍວ່າລື? | |
| ເມື່ອນັ້ນສັກກູນາແກ້ວ | ຕົນຜົວເລີຍກ່າວ | |
| ນັ້ນບໍ່ເປັນດັ່ງນັ້ນ | ຢ່າເວົ້າສຽດດູ | ພີ່ຫ້ອນ |
| ພີ່ກໍບິນຜັນຜ້າຍ | ສແວງໄປຫາເຫື່ຽອ | |
| ກໍເລົ່າເລີຍບໍ່ໄດ້ | ສັງແທ້ທ່ຽວໄປ | |
| ກໍຈຶ່ງເຫັນຜົວແກ້ວ | ໃນສະບາຍຢູ່ | |
| ຂ້ອຍກໍບິນລ່ອງເຂົ້າ | ໄປແທ້ຊອກກິນ | |
| ພໍຄາວແລ້ວ | ບົວບານຫຸບທີ່ | |
| ພີ່ກໍອອກບໍ່ໄດ້ | ຄາຫັ້ນຄ່ຳດາຍ | ພີ່ແລ້ວ |
| ພໍເມື່ອເດິກໆແລ້ວ | ຮາຕີໃກ້ຊິຮຸ່ງ | ມານັ້ນ |
| ໝອກຈຶ່ງລົງຢາດຍ້ອຍ | ຮ່ຳກ້ານສຸ່ມເລີງ | |
| ແຕ່ນັ້ນບົວທອງຊ້ຳ | ເລີຍບານໄຂກາບ | |
| ພີ່ກໍບິນອອກໄດ້ | ຄະນຶງນ້ອງດ່ວນມາ | ໜີ້ແລ້ວ |
| ຂ້ອຍບໍ່ໄດ້ຄິດໂລບລ້ຽວ | ໜີຈາກຊິນສອງ | ນ້ອງເອີຍ |
| ເປັນຍ້ອນບົວທອງຫຸບ | ທີ່ເອົາຮຽນໄວ້ | |

| | | |
|---|---|---|
| ເມື່ອນັ້ນຕົວເມັຽດ້ານ | ມີຟັງຍັງກ່າວ | |
| ຂ້ອຍບໍ່ມີເຊື່ອແທ້ | ໃຈລ້ຽວແຕ່ງໃຍ | |
| ຊາດທີ່ຕົວເມັຽນີ້ | ຫາກິນໄກເຂດ | |
| ໃຍບໍ່ມີເຊື່ອແທ້ | ໃຈລ້ຽວຊຸ່ຄືນ | ທ່ານເອີຍ |
| ເຈົ້າຫາກໄປມີຊູ້ | ມີເມັຽໜີຈາກ | |
| ປະຂ້ອຍຕຸ້ມລູກນ້ອຍ | ໃນໜີ້ແຄ່ຮ້າງ | ບໍ່ຢ່າແລ້ວ |
| ແຕ່ນັ້ນຕົວຜົວຮ້າຍ | ໂຕ້ຕອບຄຳເມັຽ | |
| ໃນໃຈຄຶດ | ຄຽດພູນຂຶ້ນຄ້ອຍ | |
| ມັນກໍວາຈາເວົ້າ | ຄຳຈິງສາບົດຕໍ່ | ກັນນັ້ນ |
| ຄັນວ່າຂ້ອຍຫາກຄຶດໂລບລ້ຽວ | ມີຊູ້ຈາກເມັຽ | ດັ່ງນັ້ນ |
| ໃຫ້ຂ້ອຍໄດ້ບາບຮ້າຍ | ຕົວທີ່ຮັດສີສິນ | ນີ້ທ້ອນ |
| ຂໍໃຫ້ຈົມອະເວຈີ | ຢູ່ເມືອງໃນພື້ | |
| ຝູງໝູ່ສັດບາບຮ້າຍ | ຕົວຈູ່ມນາຮົກ | ກໍດີ |
| ຂ້ອຍຂໍເອົາຕົວຜັດ | ຢ່ຽນເຂົາຝູງນັ້ນ | |
| ເມື່ອນັ້ນອົງຮັດສີເຈົ້າ | ໄດ້ຍິນຄຳດູຖາກ | |
| ອັນວ່ານົກນ້ອຍນີ້ | ມາປ້ອຍແສ່ງກູ | ນີ້ແດ |
| ກູກໍເອົາສູໄວ້ | ຂົນຄາງຊື່ນຮື່ນ | ດີນາ |
| ເມື່ອວ່າກູຈັກປົດອອກກົ້ນ | ກໍຍັງຊ້ຳອຶດູ | ແທ້ແລ້ວ |
| ສູກໍບໍ່ມີຄູນແທ້ | ພາຍກູປ້ອຍແສ່ງ | ສັນນີ້ |
| ສັງຊິມາວ່າກູບາບຮ້າຍ | ຕົກພື້ນແຜ່ນແດງ | ນີ້ແດ |

| | | |
|---|---|---|
| ກູກໍມາບອກສ້າງ | ທົງເພດຖືສິນ | |
| ກູກໍພາອະນາຄຸນ | ຢູ່ເນີນນານລ້ຳ | |
| ສູກໍມາຢູ່ຍັ້ງ | ໃນໝອກຂົນຄາງ | ນີ້ແລ້ວ |
| ສັງຊິມາຈາຂັດ | ເບື່ອງຄວາມຄຳຮ້າຍ | |
| ເມື່ອນັ້ນນິກກ່າວຕ້ານ | ຂານແຕ່ງຮັດສີສິນ | |
| ຢ່າໄດ້ເຄືອງໃຈສັງ | ແຕ່ງອົງເປັນເຈົ້າ | |
| ຂ້າກໍວາຈາຕ້ານ | ຜິດກັນຄຳອື່ນ | |
| ບໍ່ໄດ້ປ້ອຍແສ່ງເຈົ້າ | ຈອນໃຫ້ຢ່າເຄືອງ | ທ່ານເອີຍ |
| ຂ້າກໍຖຽງກັນດ້ອຍ | ພາສາສັດສິ່ງ | |
| ບໍ່ໄດ້ປ້ອຍ | ຄຳຮ້າຍສຽດພຣະອົງ | ທ່ານເອີຍ |
| ແຕ່ນັ້ນອົງຮັດສີເຈົ້າ | ຍັງຟຸນຕ້ານກ່າວ | |
| ຄາວເມື່ອສູດ່າປ້ອຍ | ຮ້ອງວ່າຫາກູ | ນີ້ແດ |
| ສັງຊິມາຈາຫຼີບ | ລ່າຍຄວາມຄຳລ້ຽວ | |
| ດຽວນີ້ສູວ່າກູບາບຮ້າຍ | ຕົວທີ່ຮັດສີສົມ | ນັ້ນແດ |
| ມັນຈັກເປັນສັນໃດ | ແຕ່ງພຣະອົງຮຽນຮູ້ | |
| ເມື່ອນັ້ນນິກກໍພາທີຕ້ານ | ບິນບອກອົງຮັດສີ | |
| ມັນຊິເປັນກຳເວນ | ບາບໜາຈິງແທ້ | |
| ທ່ານກໍໄດ້ບອກສ້າງ | ທົງເພດເປັນສົມ | |
| ຍັງໃປ່ມີບຸດຕີ | ສືບແນວແທນເຊື້ອ | |
| ເໝືອນດັ່ງຕານປາຍດ້ອນ | ໂກນໂກຕາຍເປົ່າ | |

ລູກບໍ່ເຕົ້າ ໃບຊີຕຸ້ມບໍ່ມີ
ເມື່ອນັ້ນອິງອັດສີເຈົ້າ ໄດ້ຍິນຄຳນົກກ່າວ
ພຣະກໍຄຶດຮ່ຳຮູ້ ເຫັນແທ້ຊິແມ່ນຄວາມ ແລນໍ
ແຕ່ນັ້ນພຣະບາດເຈົ້າ ຄະນຶງທີ່ໃນໃຈ
ຄືດັ່ງສັກກຸນານົກ ກ່າວຈາຈິງແທ້
ອັນນີ້ກູກໍບອດແຕ່ນ້ອຍ ບໍ່ໄດ້ຈອບຄອງຍິງ
(ການສົງສານ ໄປ່ເຄີຍຄອງຮູ້
ລອນທີ່ຮຽນເຫັນແຈ້ງ ໃນທັມດາຍເປົ່າ)
ກູນີ້ລູກບໍ່ເຕົ້າ ຊາຍຊ້າຜູ້ດຽວ ປີ໑໑
(ຄອນກູກັບຕ່າວພ້າ ຄາຣະວາດວິສັຍ
ຄືນຄອງເຮືອນ ຮ່ອນຍິງເອົາຊ້ອນ)
ແລ້ວຈຶ່ງສະເນັ່ງໃຫ້ ເປັນທານໄປບອດ
ໃນປ່າໄມ້ ເນືອຖ້ຳດັ່ງຫຼ້າ ຊອບແລ້ວ.
ແຕ່ນັ້ນພຣະກໍຂັບນົກໃຫ້ ທັງສອງພີຊີບ
ສູຈຶ່ງຂົນລູກເຕົ້າ ໜີທ້ອນຢ່ານານ
ໃຫ້ສູໄປຢູ່ຊຸ້ນ ດອນເລົາໃນຖ້ຳ ພຸ້ນທ້ອນ
(ສູຄ່ອຍລ້ຽງລູກເຕົ້າ ຊານໃຫ້ໃຫຍ່ສູງ ນັ້ນເນີ
ເທື່ອນີ້ກູກໍຢູ່ບໍ່ໄດ້ ໃນເພດພົມມະຈັນ
ກູຈັກສຶກໄປຫາ ຕໍ່ແຍສາວນ້ອຍ
ຫາເອົາແກ້ວ ພຣິຍາຮຽງຮ່ອມ

| | | |
|---|---|---|
| ສິນຕັ້ງຄວາມປາກເອົ້າ | ສູ້ບັ້ນຫ່ຽງຈິງ | ກ່ອນແລ້ວ) |
| ແຕ່ນັ້ນນິກາຈອກຟ້າວ | ເຮວຮີບແອບພະລັນ | |
| ສອງກໍເອົາບຸດຕີ | ຄາບໜີມີຊ້າ | |
| ເຂົາກໍພາກັນເຂົ້າ | ດົງເລົາກາງເຖົ່າ | |
| ເອົາລູກເຕົ້າ | ໄປສັຽງບໍ່ຍັງ | |
| ແລ້ວແຕ່ງຕັ້ງ | ຮັງໃໝ່ໃນດອນ | |
| ດາດີແຂວນ | ງ່າເລົາຕອນແຕ້ນ | |
| ສອງກໍພາກັນລັຽງ | ບຸດຕານ້ອຍອ່ອນ | |
| ຍິນສະອອນແດດກ້າ | ໃບຫຽ້າຫ່ຽວເຫຼືອງ | ແຫ້ແລ້ວ. |
| ບັດນີ້ຈັກກ່າວເຖິງອິງອັດສີເຈົ້າ | ແຄຫົວໂກນໝວດ | ກ່ອນແລ້ວ |
| ເຈຕນາເບັ້ງນ້ອມ | ຊີລາແກ້ວຍອດຫັນ | |
| ພຣະກໍລົງອາບນ້ຳ | ລ້າງເຫື່ອສີໃຄ | |
| ຄັນວ່າບໍຣະບວນຈົບ | ຊູ່ອັນເລີຍແລ້ວ | |
| ພຣະກໍປາຍເອົາຜ້າ | ຊີນເຫຼືອງສົບເສກ | |
| ເປັນຜ້າລາຍພອກພ້ອຍ | ອາຈານເຈົ້ານຸ່ງຫົງ | |
| ອັນວ່າໂສມສເລົາໜ້າ | ອາຈານສິກໃໝ່ | |
| ຫົງເຄື່ອງຍ້ອງ | ດູຣະຫ້ອຍຊູບງາມ | |
| ພຣະຈິ່ງປົງສິນໄວ້ | ໃນອາສິນຂ່ອງເຂດ | |
| (ລະເພດແລ້ວ | ສິນແກ້ວເລົ່າລາ | |
| ເຈົ້າກໍຕັ້ງຕໍ່ໜ້າ | ຖືເພດຄອງຄະຫັດ | |

ຈົງໃຈຈັກ ສືບແປງເຮືອນຢ້າວ
ກໍຈຶ່ງຍໍມືນ້ອມ ອຳລາຊີງເຂດ
ວິເສດເຈົ້າ ວອນໄຫວ້ທົ່ວທິສາ
ປະທັກຂີນອ້ອມ ສາລາສານເລົ່າ
ແລ້ວຈຶ່ງເຂົ້າສູ່ບ້ານ ເມືອງກວ້າງຄວ່າງແສງ
ຫຼາຍເຂດບ້ານ ເດີນທ່ຽວທາເມັ້ງ
ບຸບເພເຄີງ ຊ່ອນຊຽງນຳໃຫ້
ເຈົ້າກໍປຸນມີໄດ້ ເມັ້ງແພງຊູປະເສີດ
ຕົກແຕ່ງສ້າງ ເຮືອນຢ້າວນັ້ງມີ
ກໍບໍ່ມີທຸກຮ້ອນ ອີມຍິ່ງປະການໃດ
ຢູສະບາຍບານ ຢູ່ກິນສົມສ້າງ
ຫຼາຍຮະດູຕັ້ງ ປີແຄມເຄີງຂນາດ
ກໍຈຶ່ງມີລູກເຕົ້າ ຫຼານຫຼ້າເກີດດອນ
ຈົນວ່າອາຍຸເຈົ້າ ເຂົ້າເຂດປັດສີມາ
ເຈົ້າກໍລາຄອງຄົນ ສັ່ງເສັ້ງເມັ້ງແກ້ວ
ເອົາຕົນເຂົ້າ ຖືສິນນັກບວດ
ໃນຖ້ຳກວ້າງ ພຽນສ້າງຕັ້ງຫຼ້າ ເຈົ້າເອີຍ.
ບັດນີ້ຈັກຕ່າວຕັ້ງ ແຕ້ມຕໍ່ນິທານ ກ່ອນແລ້ວ
ແປງຕຳນານຄຳສອນ ເທສນາໄປໜ້າ
ຍາມນັ້ນສັກກູນາບ້ອຍ ຟັງເມັ້ງທັງຄູ່

ໄປຢູ່ລ້ຽງລູກເຕົ້າ ດອນຫຍ້າປ່າຄາ

ສອງກໍອຸສາຫາລ້ຽງ ບຸດຕາຕາມຮີດ

ມື້ສິບມື້ ຫຼາຍເຂົ້າຂອບອັນ

ອັນວ່າລູກອ່ອນນ້ອຍ ມີປີກຂົນຫາງ

ມືນຕາໃສ ຊ່າງຂໍແອຮ້ອງ

ເປັນທີ່ເພິ່ງໃຈເຈົ້າ ສັກກຸນາສອງອ່ອນ

ຮັກອື່ນອ້ອຍ ແພງພຽງໜ່ອຍຕາ ແທ້ແລ້ວ

ແຕ່ນັ້ນຄືນຫາຮ້ອນ ຣະດູເດືອນດັບຖ່າຍ ມາແລ້ວ

ແດດເຮື່ອງຮ້ອນ ໃບຫຍ້າຫ່ຽວຕາຍ

ຫຸກຂອກຄ້າຍ ຄືອີເວດວົງກົດ

ໄພພະນອນທັງ ທົ່ງດິນແດນຫຍ້າ

ປັດຕາແທ້ງ ໃບເຫຼືອງຊຸຫຼົ່ນ

ລາງບ່ອນແຫ້ນ ໄຟລ້ອງລວາບເຜົາ

ອັນວ່ານົກຈອກເຈົ້າ ນ້ອຍອ່ອນຜົວເມັຽ

ປີເນັຽຈາ ຕໍ່ກັນຄຳອະຫ້ອຍ

ຜົວກໍວາຈາເວົ້າ ດອນເມັຽຄຳຊື່

ເວົ້າຈ້ອຍໆ ດອນນ້ອງນາຖແພງ

ໂອນໍຄຳເອີຍຮານີ້ລອນທີ່ມາແປງທາງ ຮອງຮັງໃນເຫຼົ່າ ສັນນີ້

ມີແຕ່ເຈົ້າແລະຂ້ອຍ ພຽນນ້ອຍລູກຕົນ

ຄັນວ່າອຸບາດຕ້ອງ ໄຟປ່າລາມມາ

ຮາຈັກທຳສັນໃດ　　ຊິຫ່າຍໄພໜີໄດ້
ອັນວ່າບຸດຕາໄທ້　　ສອງຮາກໍຍັງອ່ອນ
ຄືວ່າເຮົາຈັກທ້ອນດູກນ້ຽນ　　ດອມແກ້ວລູກຮາ　　ນັ້ນເດ?
　　ແຕ່ນັ້ນນາງນົກຕ້ານ　　ຈາຕອບຄຳຜົວ
ຖືວ່າບັງເອີນເປັນ　　ດັ່ງຄຳຈອມເຈົ້າ
ຂ້ອຍຂໍເອົາຕີນນ້ຽນ　　ໃນຮັງດອມລູກ　　ອອນແລ້ວ
ສ່ອນວ່າຕີນພີ່ເຈົ້າ　　ທາງນ້ອງບໍ່ເຊື່ອໃຈ　　ໄດ້ແລ້ວ
　　ແຕ່ກ່ອນພີ່ຍັງປະນ້ອງໄວ້　　ຂຶດເຕື່ຽວທັງວັນ　　ນັ້ນເດ
ໄປຫາຊິນສາວສີ　　ທີ່ໃດມີຮູ້
ເຈົ້າຫາກໄປມີຊູ້　　ວາງເນັ້ຽທັງລູກ
ບາດວ່າຄຳປາກເຈົ້າ　　ໝາຍນ້ຽນກະດູກດອມ
ຊາດທີ່ໃຈຜູ້ຊາຍນີ້　　ຄືກອຍຕາແຫຼວທ່າງ
ກິ້ນໃສ່ນ້ຳ　　ຈົມປັ້ງບໍ່ທ່ອນຟູ　　ເຈົ້າເອີຍ.
　　ຄ້ອນວ່າເນັ້ຽກ່າວແລ້ວ　　ຜືວຄຽດຄຸງໃຈ
ມັນກໍໂມທັງຫານ　　ຕອບຄືນມີຊາ
ສັດຈະວາຈາແມ່ຍິງນີ້　　ແປງແປຮ້ອຍແງ່　　ຈິງແລ້ວ)
ຄຳປາກເວົ້າຍັ່ງນີ້　　ບໍ່ມີບັ້ນບ່ອນຊິເອົາ
　　ອັນວ່າໃຈຊາຍນີ້　　ຄືທີນໝັກເໝື່ນ
ນ້ຳຮ້ອຍກ້ອນ　　ຕີໄດ້ກໍບໍ່ຕິງ　　ພີ່ແລ້ວ
ເມື່ອນັ້ນສັກກຸນີຕ້ານ　　ຈາຜົວກອຍກ່າວ

ໃຜຜູ້ອອກກ່ອນແທ້ ເມືອໜ້າທາກຊິເຫັນ ເຈົ້າເອີຍ
ກົວແຕ່ຕົວຜົວຢ້ານ ບິນໜີເສັຽກ່ອນ
ປະລູກນ້ອຍ ທັງຂ້ອຍບໍ່ຄອຍ ນັ້ນເດ
ຂ້ອຍກໍຫຼິງເຫັນຂໍ້ ໃຈຊາຍທຸກສິ່ງ
ແມ່ນວ່າເຈົ້າຊິເວົ້າທີ່ຊ້າງ ບໍ່ມີຮູ້ຮ່ອມຟັງ ໄດ້ແລ້ວ.
ແຕ່ນັ້ນໄຟລາມໄໝ້ ດອນເລົາເຜົາປ່າ ມາແລ້ວ
ສອງກໍບິນຍ່ອນຢ້ານ ໄຟໄໝ້ຊີບຊີວັງ
ເມື່ອນັ້ນສອງກໍປາຖນາໃຫ້ ເປັນຄົນຊາດໃໝ່
ຢ່າໃຫ້ເປັນນົກນ້ອຍ ພາຍໜ້າສືບໄປ ແດ່ທ້ອນ
ສອງກໍໝາຍມາດໄວ້ ຫວັງທີ່ນໍຂະນາ
ດອນບຸດຕາ ຮ່ວມກັນກອຍໝັ້ນ
ຝ່າຍວ່າຕົວເມັຽນັ້ນ ໃຈເບົາເວົ້າກ່ອນ
ຄັນວ່າຜົວທາກອອກກ່ອນແທ້ ໄລແກ້ວລູກເມັຽ ດັ່ງນັ້ນ
ຊາດໜ້ານັ້ນ ບໍ່ມີປາກນໍາຊາຍ ແທ້ແລ້ວ
ໃຜຈັກມາຈາຖາມ ປາກນໍາຄໍາແລ້ວ
ໄດ້ວ່າເປັນຊາຍນີ້ ບໍ່ມີຈາຕ້ານຕໍ່ ໃຜນັ້ນ
ແສນວ່າເປັນພໍ່ແທ້ ຄໍາແລ້ວກໍບໍ່ຈາ ດອກນາ
ແຕ່ນັ້ນນົກກູນາແກ້ວ ຕົວຜົວຂານຕອບ
ຂ້ອຍບໍ່ເປັນດັ່ງນັ້ນ ຢ່າເວົ້າສຽດທູ ພີ່ທ້ອນ
(ພີ່ນີ້ຊາຍຂນາດກ້າ ກາງທາດຊາຍຂອງ

ບໍ່ໃຊ່ຊາຍແກມຕົນ ຢ່າລອນມາຕ້ານ
ນ້ອງຢ່າຖືສາຖ້ານ ຫົວພຽງພິມໂລກ ນາງເອີຍ
ຊາຍກໍຍັງຕ່າງເຊື້ອ ເຊີນສິ້ງແນ່ນອນ ກ່ອນທ້ອນ
ແຕ່ນັ້ນໄຟລາມໄໝ້ ມາປະຈົບຮ້ອນເຮົ່າ
ຜົວກໍຫົນບໍ່ໄດ້ ບິນຜ້າຍອອກໜີ
ໄຟລົນໄໝ້ ຕົນຕາຍດັບຊາດ ເສັ້ງແລ້ວ
ສ່ວນວ່ານາງນາດນ້ອຍ ເມັ້ງແກ້ວບໍ່ໜີ
ໄຟລົນໄໝ້ ຕົນຕາຍທັງລູກ
ແມ່ນວ່າລູກນ້ອຍໆ ໄຟໄໝ້ບໍ່ຫຼີ ເຈົ້າເອີຍ.
ຟັງເປີສາວໜຸ່ມນ້ອຍ ທັງແກ່ປານກາງ ພີ່ເອີຍ
ຍາມເມື່ອຟັງນິທານ ຢ່າຈາຫົວຈົ້ນ
ມັນຈັກເປັນເວນຮ້າຍ ອະຫິກັມໃຊ້ຊາດ ຈິງແລ້ວ
ດີທີ່ຕັ້ງເຈດນ້ອມ ຍໍນິ້ວນັ່ງຟັງ ພີ່ຫ້ອນ
ແຕ່ນັ້ນນົກຈອກນ້ອຍ ສອງຜົວເມັ້ງລົດຊື່ວ ເສັ້ງແລ້ວ
ທັງລູກນ້ອຍ ນິຣະມັງນພ່ຳກັນ
ສອງກໍໄປເກີດກ້ຳ ພຍາໃຫຍ່ເມືອງໄກ
ສຸຂເວີຍຄວາມສຸກ ສຳຣານມີຮ້ອນ
ສອງກໍພັດຄູ່ແກ້ວ ໄປເກີດຄົນເມືອງ
ຫົວຜົວເປັນ ຜູ້ຊາຍງາມຍ້ອຍ
ອັນວ່າຫົວເມັ້ງນັ້ນ ເປັນຍິງງາມຍິ່ງ

ໂສມສິ່ງໜ້າ ງາມຍ້ອຍດັ່ງທອງ

ສອງກໍພົດກັນແລ້ວ ເປັນຄົນງາມຍິ່ງ

ພີ່ແມ່ເຈົ້າ ຖນອມລ້ຽງໃຫຍ່ສູງ.

ແຕ່ນັ້ນພີ່ກໍຫາຊື່ນ້ອຍ ເຈົ້າອ່ອນນາງແພງ

(ຕາມເກນກົງ ອີກນາງແພງລ້ານ)

ຊື່ວ່າຈັນທະຈອນນ້ອຍ ບຸດຕິສເມີຖີ່

ເປັນລູກເຈົ້າລຸ່ມຟ້າ ບຸນກວ້າງທີ່ເຊົາ ເຈົ້າເອີຍ.

ອັນວ່າຕົວຜົວນັ້ນ ຕົກໄກຕ່າງປະເທດ

ວິເສດຫ້າວ ໄກນ້ອງພຣະຍອດນາງ

ຫ້າວເກີດກ້ຳ ສະກຸນຣາດຣາຊາ

ເປັນບຸດຕາ ພຣະຍອດເມືອງເປັນເຈົ້າ

ຊື່ວ່າວໍຣະຈິດຫ້າວ ກຸມານນ້ອຍອ່ອນ

ພຣະພີ່ເຈົ້າ ຖນອມຫ້າວຈູບຊົມ

ພໍເມື່ອຫຼາຍວັນໄດ້ ຫຼາຍເດືອນເປັນຂວບ ມາແລ້ວ

ສີແຈ່ມເຈົ້າ ບາຫ້າວປາກຈາ

ວໍຣະນ່ອຍເນື້ອ ສົມສິ່ງອິນແປງ

ຝູງສາວເຫັນ ຫຼູດໃຈນຳຫ້າວ

ເຂົາກໍຊິງກັນອຸ້ມ ຜັດກັນຊົມຈູບ

ເອົາອື່ນກັ້ງ ລົງນ້ຳອາບສີ

ອັນວ່າບຸນມີຫ້າວ ວໍຣະຈິດຊົມຊື່ນ

ສາວກໍເອົາເຂົ້າແປ້ງ　　ທາເນື້ອລູບຄີງ
ອັນວ່າໂສມຮູບທ້າວ　　ງາມຍິ່ງແອບຖບັດ
ອັນວ່າຝູງທາສາ　　ໝູ່ສາວຂີ່ຣະອີ້ງ.

ບັດນີ້ຈັກກ່າວເຖິງຈັນທະຈອນນ້ອຍ　ນາງແພງສອນໃຫຍ່ ມາແລ້ວ

ພໍເມື່ອຫຼາຍຂວບເຂົ້າ　　ງາມຍ້ອຍດັ່ງຂຽນ
ອັນວ່ານາງນາດໃຫ້　　ບໍ່ມີປາກນຳຊາຍ
ແມ່ນວ່າບິດາຖາມ　　ກໍບໍ່ຈາຈິງເອື້ອ
(ໂສມສນິດໜ້າ　　ຕາຄົນໄອອາດ)
ເປັນທີ່ຮັກປອດຕີບ　　ດອນນ້ອຍຊູ່ຊາຍ
ແຕ່ວ່ານາງນາດນ້ອຍ　　ບໍ່ມີປາກນຳຊາຍ
ໃຜເປັນຊາຍ　　ກໍບໍ່ຈາຈິງຕ້ານ
ຫຼາຍປີແລ້ວ　　ເປັນສາວຂື້ນໃຫຍ່　ມາແລ້ວ
ນາງນາດນ້ອຍ　　ໂສມໜ້າຮູບງາມ
ນົມຕຸ່ມຕັ້ງ　　ສິບສີ່ເປັນສາວ
ຄີງແພງງາມ　　ດັ່ງອິນລົງແຕ້ມ
ໃຜຜູ້ມາເຫັນນ້ອຍ　　ກະສັດຕິໃຈຊີຂາດ　ຕາຍແລ້ວ
ຄົນຢູ່ໃຕ້ລຸ່ມຟ້າ　　ເຂົາຍ້ອງຊູ່ຄົນ
ອັນວ່າບິດາໃຫ້　　ຄະນຶງໃຈຄຶດຮ່ຳ
ອັນວ່າລູກອ່ອນນ້ອຍ　　ກູບໍ່ຮູ້ສິ່ງໃດ　ນີ້ເດ
ນາງກໍເກີດແຕ່ນ້ອຍ　　ບໍ່ຕ້ານປາກນຳຊາຍ　ດັ່ງນີ້

ກູກໍເປັນປິຕາ ບໍ່ອາດຈາດອນແທ້

ອັນວ່າໃຍຊູ້ມາຈາຕ້ານ ນາງແພງປາກຕໍ່ ດອນນັ້ນ

ກູຈັກຍໍນອບໃຫ້ ຄົນນັ້ນບໍ່ຂືນ ເຈົ້າເອີຍ

ເມື່ອນັ້ນພຣະກໍທັນເອົາທ້າວ ເສນາທັງໄພ່

ເຂົາກໍໄຫຼລົ້ງເຂົ້າ ມາພ້ອມຊູ່ພາຍ

ແຕ່ນັ້ນພຍາເມືອງເຊົ້າ ຕັດຄວາມກອບກ່າວ

ບອກສ່ຳທ້າວ ທັງຄ້າຍຊູ່ຄົນ

ຄັນວ່າໃຍຊູ້ມີຍຍາແທ້ ຈານາງຕ້ານປາກ ດອນນັ້ນ

ຂ້ອຍຊິຍໍໃຫ້ເຈົ້າ ແທນສ້າງສືບເມືອງ ເຈົ້າເອີຍ

ອັນວ່າຈັນທະຈອນນ້ອຍ ບຸດຕາເປັນລູກ ເຮົານີ້

ນາງກໍເກີດແຕ່ນ້ອຍ ບໍ່ຕ້ານປາກນຳຊາຍ ແທ້ແລ້ວ

ແມ່ນວ່າປິຕາຖາມ ກໍບໍ່ຈາດອນແທ້

ທີ່ນີ້ໃຍຊູ້ໄປຈາຕ້ານ ດອນນາງປາກຕໍ່

ກໍຈັກຍໍຍົກໃຫ້ ຄົນນັ້ນບໍ່ຂືນ ເຈົ້າເອີຍ

ເມື່ອນັ້ນເສນາເຈົ້າ ພຍາວັງຊົມຊື່ນ

ຂ້ອຍຈັກໄປກ່າວຕ້ານ ດອນນ້ອຍບໍ່ຂືນ

ເມື່ອນັ້ນເສນາເຈົ້າ ບັງຄົມລາເລີກ

ຕົກແຕ່ງເນື້ອ ດາທ້າງເຄື່ອງເຄົາ

ເຈົ້າກໍຫວັງຈັກໄດ້ ທິພຂື່ນໃຈເມືອງ

ພຍາວັງຕົກ ແຕ່ງຕົນມີຊ້າ

ເຈົ້າກໍຂຶ້ນສູ່ຫ້ອງ ຫໍຮາດນາງແພງ
ຄະນຶງໃນໃຈ ວ່າຕົວຈັກໄດ້
ແຕ່ນັ້ນພຣະກໍໃຫ້ເພັຊຄາດພ້ອມ ຢູ່ໝູ່ໄທຊັ້ນ
ສູຈິ່ງໄປລອງດູ ພຣະຍອດນາງຈາຕ້ານ
ໃຫ້ສູຖືໄປພ້ອມ ສວານໄລທັງປີ່
ຕະໂພນພ່ໍາພ້ອມ ກອງຄ້ອງພາດພິນ
ຄັນວ່ານາງກ່າວຕ້ານ ຈາຕໍ່ພຍາໃດ
ສູຈິ່ງພາກັນຕີ ເສບກອງທັງຄ້ອງ
ສູຈິ່ງພາກັນຮ້ອງ ມ ຫືຮ້ອງໂຫ່
ຄັນວ່ານາງບໍ່ປາກເອົ້າ ສູເຈົ້າຢ່າຕີ ວ່າເນີ.
ແຕ່ນັ້ນເພັຊຄາດຟ້າວ ໂດຍອາດພຍາເມືອງ
ເຂົາກໍຫາມເອົາກອງ ປີ່ຊໍໄປພ້ອມ
ເຂົາກໍໄປຊ່ອນລີ້ ບັງຝາມອຍເບິ່ງ
ອັນວ່ານາງໝໍ່ໄຫ້ ອີງເທົ້າທອດໝອນ
ຍາມນັ້ນພຍາອັງເຈົ້າ ໄປຈາອ້ອຍອື້ນ
ຈາຈ້ອຍໆ ຄໍາໝ້າກໍບໍ່ຫຼັງ
ນາງຂໍຂັງຈິດໄວ້ ໃນໃຈບໍ່ປາກ ເສັງແລ້ວ
ພີ່ກໍມາບັ້ງເອົ້າ ປະສົງໃຫ້ປາກຈາ ພີ່ຫ້ອນ
ເຈົ້າຢ່າຂັງຈິດໄວ້ ໃນໃຈທູຂາວຸດ ນາງເອີຍ
ຝົນບໍ່ຟ້າ ລົມແລ້ງເປົ່າດາຍ ພີ່ແລ້ວ

ແຕ່ນັ້ນນາງກະສັດໄຫ້ ຄະນຶງໃຈມີມາກ
ນາງບາດນ້ອຍ ນິດຢູ່ມີຕຶງ
(ພຍາເມືອງຈາ ຕໍ່ນາງຈີໃຈວ້
ເຈົ້າກໍໄຂໄຍເວົ້າ ໂອນອອຍເວົ້າຄ່ອຍ)
ນາງບໍ່ອື້ ພຍາເວົ້າຊູ້ດຽວ.
        ບັດນີ້ຮຸນແຮງແລ້ວ ພຍາວັງລາເລີກ
ລີງຈາກຫ້ອງ ປາງແກ້ວອີບເມືອ
ໂອນໍເຈັບອົກປານໄຟໄໝ້ ເຈັບໃຈປານຟ້າຜ່າ ພຍາເອີຍ
ຢາກໄດ້ນາງພີ່ຫຼ້າ ມາລ້າເປົ່າດາຍ ແລນໍ
        ເຈົ້າກໍເມືອທຸນໂຫ້ວ ພຍາເມືອງກົ້ນຂາບ
ຖວາຍເຫດໃຫ້ ຈອມເຈົ້າຊູ່ປະກາບ
ບັດນີ້ຂ້າກໍໄປຈານ້ອຍ ນາງງາມບໍ່ເວົ້າຕໍ່ ເສັ້ງແລ້ວ
ຂ້າກໍເວົ້າຈ້ອຍໆ ນາງນ້ອຍກໍບໍ່ຈາ ພຣະເອີຍ.
        ແຕ່ນັ້ນພຣະນາດທ້າວ ຈັດຂຸນໄປຮີບ
ເຂົາກໍໄປບໍ່ຊ້າ ໂດຍເຈົ້າຂາບລີງ
ຂຸນກໍດີໃຈແມ້ງ ປະດາຕົບທົງເຄື່ອງ
ຂຶ້ນສູ່ຫ້ອງ ປາງແກ້ວບໍ່ນານ
        ຂຸນກໍແລເຫັນນ້ອຍ ກະສັດຕຶງງາມຍິ່ງ
ເປັນທີ່ອົກພີ່ຜັ້ງ ໃຈຫຼົ້ນຫຼູດດາຍ
ຂຸນກໍຍໍມືໄຫ້ວ ກະສັດຕີເລີຍກ່າວ ນາງເອີຍ

ອິດຄ່ອຍເອື້ອນ ຟັງຂ້ອຍກ່າວຈາ ແດ່ທ້ອນ
ບັດນີ້ພຣະອໍຣະບິດາເຈົ້າ ຍິນກະສັນແຄ້ນຄັ່ງ
ຄິດຕໍ່ເຈົ້າ ຈອນສ້ອຍຜູ້ດຽວ
ເຈົ້າມາເປັນກືກໃບ້ ບໍ່ມີປາກດອນຊາຍ ສິ່ງນີ້
ແລງງາຍພຣະ ບໍ່ສເອີຍຍັງເຂົ້າ
ພຣະກໍຂວາງອົກແຄ້ນ ໃນຫອງນໍາອ່ອນ ນາງແລ້ວ
ຄ້ອນວ່າຂຸນກ່າວແລ້ວ ນາງນ້ອຍກໍບໍ່ຈາ
ໂອນໍນາງເອີຍທີ່ນີ້ພຣະບາດໃຊ້ ເອົາອີບແອບພະລັນ
ໃຫ້ພີ່ຫູບຈອມນາງ ສິ່ງໃດພໍຮູ້
ສັນໃດແທ້ ນີງຄານໄຂຂ່າວ ມາທ້ອນ
ອິດຖືກແທ້ ຈອມເຈົ້າຢ່າເຄືອງ
ພຣະບາດໃຫ້ຂ້າອ້າຍ ຫຸນບາດໃຈເມືອງ
ບຸນເຮືອງເອີຍ ປາກຈາດຽວນີ້
ຣາຊາເຈົ້າ ພູມີຄິດໂສກ
ພຣະບາດໃຊ້ ທັນຂ້າອີບມາ ໜີແລ້ວ
ພຣະຍາກຮູ້ ໃຈອ່ອນນາງແພງ
ເປັນປະການໃດ ຢ່າອໍາເຊືອງໄວ້
ຂໍແກ່ກະສັດຕີແກ້ວ ນາງແພງອີງອາດ
ພໍແຕ່ໄຂປາກຕ້ານ ຈາເອົ້າຖອງຄວາມ ແດ່ທ້ອນ
ເຈົ້າກໍເກີດແຕ່ນ້ອຍ ບໍ່ຕ້ານປາກນໍາຊາຍ ນີ້ແດ

ມັນຈັກເປັນສັນໃດ    ເຫດລາງໃນເບື້ອ?

ເມື່ອນັ້ນນາງກະສັດໄທ້    ຟັງຄຳຂຸນກ່າວ

ປາກບໍ່ເວົ້າ    ພໍແຍ້ມແຕ່ຫົວ

ນາງກໍຍໍຂັນນ້ຳ    ຂັນພູມາຍື່ນ

ຂຸນບໍ່ຊ້າ    ປະນົມມື້ອຮັບເອົາ

ເມື່ອນັ້ນອໍຣະມ່ອຍໜ້າ    ຊື່ນນ້ຳຮຽງພອນ

ຂຸນກໍຕາຊອນຫຼຽວ    ເຫຼືອດນຳໃຈສະບັ້ນ

ແຕ່ນັ້ນຂຸນກໍໄຂຄວາມຕ້ານ    ລົມນາງຫຼາຍສິ່ງ

ເວົ້າອິ່ນອ້ອຍ    ນາງນ້ອຍກໍບໍ່ຈາ

ບັດນີ້ຕາອັນຄ້ອຍ    ພໍແລງໃກ້ຄ່ຳ    ມາແລ້ວ

ຂຸນກໍເວົ້າຈ້ອຍໆ    ນາງນ້ອຍບໍ່ປາກດອມ

ແຕ່ນັ້ນຂຸນກໍລານາງນ້ອຍ    ຈອມແພງເລີຍຕ່າວ    ເມືອແລ້ວ

ລົງຈາກຫ້ອງ    ປາງແກ້ວຮີບໜີ

ຂຸນກໍຍືນອາຍໜ້າ    ເດີນທາງເລີຍແລ່ນ

ຂຶ້ນຂາບໄຫວ້    ຈອມເຈົ້າພຣະຍອດເມືອງ

ບັດນີ້ຂ້າກໍລົມນາງນ້ອຍ    ສາມທີອີດອ່ອນ    ເສັງແລ້ວ

ປາກບໍ່ເວົ້າ    ສຸດຂ້າເລົ່າລົມ    ເຈົ້າເອີຍ

ແຕ່ນັ້ນຣາຊາເຈົ້າ    ຈັດຂຸນໄປອີກ

ຂຸນກໍໂດຍອາດເຈົ້າ    ໄປສັ່ງຊູພາຍ

ອັນແຕ່ໃນເມືອງນັ້ນ    ມົນຕີນ້ອຍໃຫຍ່

ເຂົາກໍໄປກ່າວຕ້ານ ລິນນ້ອຍຊູ່ຊົນ
    ນາງບໍ່ມີຈາຕ້ານ ນຳໃຜຈັກແຕ່ງ
ອັນວ່າພຣະບາດເຈົ້າ ຍິນແຄ້ນຄັ່ງໃນ
ໂອນບໍ່ຈັບທະຈອນນ້ອຍ ບຸດຕີລູກອ່ອນ ກູບໍ່
ກູກໍເຕີນສ່ຳທ້າວ ໄປຕ້ານປາກຈາ
    ກໍຫາກຣຸນແຮງແລ້ວ ຈາບາງທຸກພູ່
ນາງບາດນ້ອຍ ບໍ່ມີຕ້ານຕໍ່ໄປ ແລບໍ່
ທີ່ປີ້ກູຈັກເຕີນຟູງຂ້າ ຊາວເມືອງພອກໄພ່
ນາກ່າວຕ້ານ ນາງນ້ອຍຕື່ນແຄນ ກ່ອນແລ້ວ
    ແຕ່ນັ້ນພຣະກໍເຕີນຟູງຂ້າ ຊາວເມືອງທຸກສ່ຳ
(ຂຸນປ່າວຮ້ອງ ທັງຄ້າຍບອກການ
ຊອ່າງໆພ້ອມ ຟູງບ່າວຊາວເມືອງ
ຊາຍຮານທັງ ແກ່ກາງຟູງເຖົ້າ)
ເຂົາກໍທັງຍັງຕ້າ ຄືນດີປະສົງແຕ່ງ
ຂໍໃຫ້ໄດ້ ນາງແກ້ວໜໍ່ເມືອງ
    ເຂົາກໍດີໃຈແທ້ ຈາກັນຊົມຊື່ນ
ບຸນເຮົາຍັງຊີໄດ້ ນາງນ້ອຍແນ່ນຫູໃດ ເດບໍ່
ແຕ່ນັ້ນເຂົາກໍຍໍມືໄຫ້ວ ເທວະດາຊູຊ່ອຍ
ບາງພ່ອງແປະແຜ່ນພື້ນ ທໍຣະນີເຈົ້າໃສ່ຫົວ
    ບາງພ່ອງຍໍມືໄຫ້ວ ອິນພົມຈະຕຸໂລກ

ຂໍໃຫ້ໄດ້     ນາງນ້ອຍປາກດອມ     ແດ່ທ້ອນ
ບາງພ່ອງປະຜີເຊື້ອ     ຕານາຍພໍ່ແມ່
ກັບທັງຜີປູ່ດຳ     ແດນຊັ້ນຊື່ລາງ
      ປະທັງຜີສວາງເສື້ອ     ແສນປານລ້ານສ່ຳ
ຂໍຈົ່ງຊູຊ່ອຍຄ້ຳ     ນາງນ້ອຍປາກນຳ     ແດ່ທ້ອນ
ບາງພ່ອງປະສານເຈົ້າ     ຜີເມືອງລັຽງໄກ່
ຂໍໃຫ້ໄດ້     ນາງນ້ອຍຜູ້ແພງ
      ບາງພ່ອງຖືຂັນເຂົ້າ     ໄປໃນວັດໃຫຍ່
ປະພຣະພຸທເຈົ້າ     ໄປຄຸ້ມຊ່ອຍຊູ     ແດ່ທ້ອນ
ຂໍໃຫ້ນາງນາດໄຫ້     ໃຂປາກຈານຳ
ຂ້າຈັກຂໍກິນທານ     ຊູ່ວັນຍາມເຊົ້າ
      ຂໍແຕ່ໄດ້ນາງນາດນ້ອຍ     ທີພຶ່ງໃຈເມືອງ
ຂໍໃຫ້ນາງຄານຈາ     ປາກນຳວັນນີ້
ຄ້ອນວ່າແລ້ວ     ດາດິນຕິກແຕ່ງ
ປະສົງນຸ່ງຜ້າ     ຜືນກັ່ງງນ່ອງລາຍ
      ທັງເລົ່າເກັບດອກໄມ້     ແຊມເກດເກສາ
ນາໆດວງ     ດອກງາມຫອມເຮົ້າ
ມີທັງສີເຫຼືອງແຫຼ້     ຂາວອອນອີດອ່ອນ
ບາງພ່ອງພໍແຕ່ໄດ້     ແພຫຸ້ມທີ່ມຄີງ
      ເຂົາກໍລືລາຍ້າຍ     ຕາມກັນເປັນໝູ່

ສະເພືອກພ້ອມ　　ທັງຊ້າເຄື່ອງດີ

ແຕ່ນັ້ນຝູງສາວໂອ້　　ນຳຊາຍສອຍສຽດ

ໂອນໍອ້າຍພີ່ຊາຍເອີຍ ເຈົ້າກໍໄປຊົມຫ້ອງ ປາງທອງທິພອາດ　　ພາຍພຸ້ນ

ນ້ອງຂໍໄປພ່າງຂ້າງ　　ເປັນນ້ອຍປີດປາຍ　　ແດ່ທ້ອນ

　　ອ້າຍພີ່ຊາຍເອີຍເຈົ້າກໍໄປຢູ່ຊ້ອນ　　ຜາສາດຮຽງນາງ　　ທີ່ພຸ້ນ

ນ້ອງຂໍເປັນຄົນປັດ　　ບ່ອນນອນຮຽງຊ້ອນ　　ແດ່ທ້ອນ

ໂອນໍພີ່ຊາຍເອີຍຍາມເມື່ອປາງກ່ອນນັ້ນ　　ນ້ອງໄດ້ຮ່ອມຮຽງສອງ　　ພີ່ເອີຍ

ເທື່ອນີ້ເຈົ້າກໍໄປທັງເມືອງ　　ຢ່າໄດ້ລືມທາງນ້ອງ　　ແດ່ເນີ

　　ຄ້ອມວ່າສາວສັ່ງແລ້ວ　　ເຂົາຂີບກາຍໄປ

ເຂົາກໍຍິນວາຍສາວ　　ຂີບເດີນໄປໜ້າ

ເລີຍເລົ່າໄປເຖິງຄຸ້ມ　　ວັງຫຼວງພົ້ນບາດ

ຝູງສ່ຳທ້າວ　　ເມືອໄຫວ້ພຣະຍອດເມືອງ

　　ພຣະກໍໄຂປາກຕ້ານ　　ຕັດຮາຊໂອງການ

ແໜຄຳຄອນ　　ແກ່ເສນາທ້າວ

ທ່ານຈິ່ງຈຳເຂົາໃຫ້　　ເອ້ອພະລັນໄປກ່າວ

ຕ້ານຕໍ່ນ້ອຍ　　ແຜງລ້ານເທື່ອລະຄົນ　　ຫັ້ນທ້ອນ

　　ຄັນວ່ານາງຈາຕ້ານ　　ນຳໃຍເອົ້າຕໍ່　　ດັ່ງນັ້ນ

ໃຫ້ເຂົາຕີພາດຄ້ອງ　　ແຄນໃຄ້ເສບເມືອງ　　ຫັ້ນທ້ອນ

ເຮົາຈັກອຸພິເສກນ້ອຍ　　ທິພເນດແທນເມືອງ

ໃຜຜູ້ບຸນຍັງເຖິງ　　ຮອດນາງເຄີຍໄດ້

ห้ามจำหน่าย

ຄັນວ່ານາງຈາຕ້ານ　　ດອມໃຍປາກຕໍ່

ຂ້ອຍຈັກເອົາຜູ້ນັ້ນ　　ແທນລ້າງສືບເມືອງ　ເຈົ້າເອີຍ.

　　ເຕີນທາສາ　　ໄພ່ເມືອງຢາມນ້ອຍ

ໃຫ້ຊູໄປຈາຕ້ານ　　ດອມນາງປຸນປ່ຽນ　ກັນທ້ອນ

ໃຍຜູ້ບຸນມາກແທ້　　ນາງນ້ອຍປາກນຳ　ບໍ່ຢ່າແລ້ວ

ພຣະຈັກວາງນາງໃຕ້　　ປຸນປອງເປັນຄູ່

ຢູ່ສືບລ້າງ　　ເປັນເຈົ້າບົ້ງເມືອງ

　　ແຕ່ນັ້ນພຣະກໍເຕີນໄພ່ຂ້າ　　ຝູງໝູ່ຊາວເມືອງ

ມາທູນຖາມ　　ພຣະຍອດນາງແພງລ້ານ

ບັດນີ້ເຂົາກໍຊຸບແຮງແລ້ວ　　ຊາວເມືອງລາເລີກ

ໝົດຊູ່ບ້ານ　　ມາສ້ຽງບໍ່ຫຼື　ເຈົ້າເອີຍ

　　ເຂົາກໍມາຖາມນ້ອຍ　　ນາງງາມບໍ່ປາກຕໍ່　ໃຍແລ້ວ

ເຂົາກໍຄືນສູ່ບ້ານ　　ເຮືອນຢ້າວແຫ່ງເຂົາ

ແຕ່ນັ້ນຝູງສາວຕ້ານ　　ຫົວຂວັນເອີ້ນວ່າ

ພີ່ຊາຍເອີຍເຈົ້າກໍໄປຊິນຊ້ອນ　　ກະສັດຕິຍາສາດ　ພາຍພຸ້ນ

ເຈົ້າກໍລືມຝ່າຍກົ້　　ທາງພີ້ບໍ່ຄອຍ　ແລນໍ

　　ອ້າຍພີ່ຊາຍເອີຍນ້ອງຂໍໄປເປັນຂ້າ　　ທາສາໃຊ້ຊອ່າງ　ພຣະອົງແມ

ແມ່ນວ່າການເຈົ້າມີພື້ນຊັ້ນ　　ຊິດານໃຊ້ຫ່ອງຫຽວ　ແທ້ແລ້ວ

ແຕ່ນັ້ນຝູງຊາຍຕ້ານ　　ຈາສາວຖແລງຕອບ

ພີ່ກໍຢູ່ບໍ່ໄດ້　　ຄະນຶງນ້ອງຕ່າວຄືນ　ພີ່ແລ້ວ

ພີ່ກໍເຫັນສະຖານກວ້າງ ປາງທອງເຂືອງເຂື່ອ ພາຍພຸ້ນ
ພີ່ກໍຫີນບໍ່ໄດ້ ບຸນນ້ອຍບໍ່ເຖິງ ພີ່ແລ້ວ
ບຸນຫົວພີ່ຄາດໄດ້ຢູ່ຊ້ອນ ນຳນ້ອງກໍຈິ່ງຄືນ ອຸ່ນເອີຍ.
ແຕ່ນັ້ນຝູງສາວຕ້ານ ນຳຊາຍຖແລງຕອບ
ນ້ອງບໍ່ສິນກະສັດທ້າວ ອິງອາດຈອນເມືອງອ້າຍພີ່ຊາຍເອີຍ
ນ້ອງນີ້ສິນແຕ່ເປັນທາສາ ທ່ອງທຽວທັນໃຊ້
ຄ້ອນວ່າສາວກ່າວແລ້ວ ເຂົາຂີບກາຍໄປ
ເຂົາກໍຍິນອາຍໜ້າ ສາວຊານເອີ້ນວ່າ
ໜ້າລ່າເປື້ອ ເມືອບ້ານຊູ່ຄົນ ຫັ້ນແລ້ວ
ກໍຫາກຸບານແລ້ວ ອາຊາເດີນປ່າວ
ບອກສ່ຳທ້າວ ມາສ້ຽງຊູ່ພາຍ
ຫຼາຍເມືອງເຂົ້າ ມາຈາຕ້ານກ່າວ
ຮ້ອຍເອັດປະເທດທ້າວ ເກັບສ້ຽງບໍ່ຫຼື
ເຂົາກໍໄຫຼລົ້ງເຂົ້າ ເມືອງຫຼວງທຸກແຫ່ງ
ເຂົາກໍຢຸດຢູ່ຍັ້ງ ເມືອງກວ້າງສຳຣານ
ແມ່ນວ່າຊາວເມືອງພ້ອມ ຝູງຊາຍນ້ອຍໃຫຍ່
ມາສ້ຽງແລ້ວ ເມືອງກວ້າງຊູ່ຄົນ
ກໍບໍ່ມີໄຜຄ້າງ ໃນເມືອງປັດຂອດ
ເຂົາກໍມາກ່າວຕ້ານ ນາງນ້ອຍກໍບໍ່ຈາ
ເທື່ອນີ້ໂຍທິກາບັ້ນ ຈານາງເຂົາກ່ອນ

ແລ້ວທີ່ນີ້ ຖວາຍໃຫ້ພຣະຍອດຄຸນກ່ອນແລ້ວ.

## ບັ້ນທ້າວອໍທະຈິດລາພໍ່ແມ່ໄປຫາຮຽນສາຕສິນອາຄົມ

ບັດນີ້ຈັກກ່າວເຖິງອໍທະຈິດທ້າວ ບາຄານພືອເກົ່າ ກ່ອນແລ້ວ
ຟັງຍິນຄົນກ່າວເວົ້າ ທັງຄ້າຍຊ່າລື
ແຕ່ນັ້ນອໍທະຈິດທ້າວ ຄະນຶງໃຈຮ້ອນເຮ່ງ
ຈັກວ່າບາງນີ້ເປັນນຶ່ງແກ້ວ ກູແທ້ແຕ່ຫຼັງ ແທ້ລື
ໂອນໍຍານເມື່ອເປັນນິກນ້ອຍ ຈິກາຈອກພືອເມັງ ນັ້ນນາ
ສອງຮາເຮົາ ຢູ່ຮ້ວງຮຽງຊ້ອນ
ບາດຕາຍຈາກຊາດນັ້ນ ມາເກີດເປັນຄົນ
ເວນກັມທາຍ ບາບບັງບຸນຍູ້
ສອງຮາໄດ້ ໄກກັນພາກຄູ່
ຢູ່ທີ່ອ້າງ ອິງອ້ອນຫ່າງຮຽມ
ນາງກໍໄປເກີດກ້ຳ ທິນແຫ່ງແດນໄກ ແທ້ນໍ
ສາຍໃຈເອີຍ ກໍເພື່ອເວນພາເອັ້ນ
ທ້າວຮ່ຳແລ້ວ ນ້ຳຕາລົ້ງຮ່ຳໝອນ
ຄອນໆຄຶດ ຮອດບາງແພງລ້ານ
(ໂອນໍແພງຂວັນຂ້ອຍ ສເນີຕາຕົນເນດ ຮຽມເອີຍ)
ຄິດເມື່ອຄາວກ່ອນກີ້ ຮາເຈົ້າຮ່ອມກັນ ແທ້ນາ

ສອງຮາພາກັນລ້າງ    ຮອງຮັງກາງເຫຼົ່າ    ວັນນັ້ນ
ພີ່ກໍພິງປີກຕຸ້ມ    ເອົານ້ອງຮ່ວມຮຽງ    ນັ້ນເດ
ອັນນຶ່ງຍາມເມື່ອຮັດສີເຈົ້າ    ພາວັນນາຍາມຄ່ຳ    ປາງນັ້ນ
ສອງກໍມາຢູ່ຊັ້ນ    ຄາງເຈົ້າຢູ່ເຢັນ    ນັ້ນເດ
ບາດວ່າສາລາກັນມາຮອດແລ້ວ    ເຖິງລະດູເດືອນສີ່?
ໄຟເລົ່າໄໝ້    ເອົາແຫ້ຊື່ອຊີວັງ    ນັ້ນເດ
ຄ້ອນວ່າທ້າວຮ່ຳແລ້ວ    ນ້ຳຕາລັ່ງໄຫຼຕົກ
ບາຄານຄຶດ    ຮອດນາງທັງສະບັ້ນ
ບັດນີ້ຕາວັນຄ້ອຍ    ເມືອແລງແດດອ່ອນ    ມາແລ້ວ
ເຂົາກໍຍໍເຂົ້ານ້ຳ    ຖວາຍທ້າວບໍ່ສເວີຍ
ທ້າວຄັ່ງແຄ້ນ    ຄະນຶງນາດຈອມນາງ
ອັນວ່າໃນໃຈບາ    ກໍດັ່ງໄຟລົນໄໝ້
ເມື່ອຈັກໄປຫາລື    ກົວນາງບໍ່ເອົ້າຕໍ່
ກູກໍອາຍເຜົ່າເຊື້ອ    ຊາວບ້ານກ່າວຂວັນ
ບັດນີ້ກູຈັກເດີນຜັນຜ້າຍ    ອະຮັນຍາໃນປ່າ
ຫຼອນວ່າໄປພົບພໍ້    ຮັດສີເຈົ້າຢູ່ດົງ    ບໍ່ຮູ້
ກູຈັກຮຽນເອົາແກ້ວ    ອາຄົມສາດເພດ
ໄປກ່າວຕ້ານ    ນາງນ້ອຍຊີປາກດອມ    ບໍ່ຢ່າແລ້ວ
ຄ້ອນວ່າທ້າວຮ່ຳແລ້ວ    ເລີຍຄ່ຳຂີຮະຊອນ
ບາຄານຫຼັບ    ຊື່ອຍາມໃນຫ້ອງ

ພໍເມື່ອຮາຕີຂ້ອນ    ກຸດໂຕຕົບປີກ    ມາແລ້ວ
ເຂົາກໍຕົກແຕ່ງຕັ້ງ    ພາເຂົ້າພ່າງງາຍ
ອັນວ່າວໍຣະຈິດທ້າວ    ກຸມານເລີຍຕື່ນ
ທ້າວກໍລຸກສວ່າຍໜ້າ    ຄະນິງບ້ອງເລົ່າຊົງ
ພໍຄາວແລ້ວ    ມືຟາຍລ້າງລູບ
ຜ້າເຊັດໜ້າ    ເລີຍແລ້ວນົ້ງສາງງມ
ບໍຣະບອນແລ້ວ    ຂັນສລາຄັງອພາກ
ບາບ່າວທ້າວ    ຄະນິງບ້ອງຫາງ່ອນເທົງາ
ຮັກອີ່ຮ້ອນ    ຮີນຍິ່ງແສນຍໍາ
ປຸນຕັ້ງກືນກິນຂວານ    ປ່ອນລົງທັງດ້ານ
ມະໂນໃນຮ້ອນ    ຄືສອນສແອງສງບ
ສີແຈ່ມເຈົ້າ    ບໍ່ມີຕ້ານຕໍ່ໃຜ    ແທ້ແລ້ວ.
ແຕ່ນັ້ນທ້າວກໍບາຍເອົາຜ້າ    ຊີນອາດນຸງຄຸນ
ທັງເລົ່າສຸບກະໂຈມຫົວ    ເຄື່ອງດີທັງນ້າວ
ສຸບສອດເສື້ອ    ຊີນອາດກະດຸມທອງ
ທົງສັງວານ    ເຄື່ອງຄໍາເຫຼືອງເຫຼື້ອມ
ທ້າວກໍຫວາຍດາວແກ້ວ    ດວງດີສຸບສອດ
ລົງຈາກຫ້ອງ    ຕຽງແກ້ວບໍ່ນານ
ທ້າວກໍຕ້ານສັ່ງເຈົ້າ    ພໍ່ແມ່ທັງສອງ
ຍໍມືຫູບ    ສັ່ງລາຈອມເຈົ້າ

ຄ່ອຍຢູ່ດີເຢີປິຕາໄທ້ ມາດາພໍ່ແມ່ ຂ້ອຍເອີຍ
ລູກຈັກໄປທ່ຽວຫຼິ້ນ ໄພກວ້າງສວ່າງວອນ ກ່ອນແລ້ວ
ເມື່ອນັ້ນປິຕາໄທ້ ມາດາເອີ້ນສັ່ງ
ຄ່ອຍໄປດີເຢີບຸຕຣາດເຈົ້າ ນ້ອຍອ່ອນກຸມານ ແມ່ເອີຍ
ຄັນວ່າເຖິງວັນເຢັນ ໃຫ້ຕ່າວຄືນມາຫ້ອງ
ຄ້ອນວ່າແມ່ສັ່ງແລ້ວ ທ້າວຢ່າງລີລາ
ລົງສະຖານທອງ ບໍ່ນານມີຊ້າ
ແຕ່ນັ້ນຫາສາຂ້າ ທັງປວງແຫນແຫ່
ເຂົາກໍແຫນແຫ່ເຈົ້າ ກຸມານນ້ອຍອອກໄປ
ເຖິງປ່າໄມ້ ກາຍເຂດເມືອງຫຼວງ ແລເຢີ
ບາກໍພາພົນພັກ ຈອດເຊົາຄາວນ້ອຍ
ແຕ່ນັ້ນທ້າວສັ່ງໃຫ້ ເຂົາຕ່າວເມືອເມືອງ
ຂ້ອຍຈັກໄປຄົນດຽວ ທ່ຽວຮຽນຄໍາຮູ້
ອັນນຶ່ງສູຈົ່ງໄປບອກເຈົ້າ ພໍ່ແມ່ທັງສອງ ແດ່ເນີ
ພໍໃຫ້ເຫັນຫົນທາງ ທີ່ເຮົາມາພີ້
ຂ້ອຍຈັກໄປນານໄດ້ ສາມເດືອນທັດທ່ຽງ ຈຶ່ງແລ້ວ
ຈຶ່ງຈັກຄືນສູ່ຫ້ອງ ເມືອງກວ້າງແຫ່ງເຮົາ ແທ້ແລ້ວ
ອັນວ່າປິຕາເຈົ້າ ຢ່າໄດ້ຄອງຄຶດໂສກ
ຢ່າໄດ້ຄຶດໂສກຄ້ອຍ ນໍາຂ້ອຍທີ່ໄປ ວ່າເນີ
ຄ້ອນວ່າທ້າວສັ່ງແລ້ວ ເຂົາເລົ່າປະນົມກອນ

| | | |
|---|---|---|
| ລາກຸມານ | ດ່ອນຄືນມີຊ້າ | |
| ເຂົາກໍມາເຖິງຫ້ອງ | ທີຫອງພຸຣະບາດ | |
| ຂື້ນຂາບໄຫວ້ | ທູນເຈົ້າບອກກອບ | |
| ເທື່ອນີ້ຂ້າພຣະບາດໄຫວ້ | ຍັງຂມ່ອມເໜືອຫົວ | ພຣະເອີຍ |
| ອັນວ່າກຸມານບາ | ໄລ່ຄືນເສັງສັງງາ | |
| ກໍບໍ່ມີໃຜຄ້າງ | ນຳບາຈັກສນ່ອຍ | |
| ຝູງໄພ່ນ້ອຍ | ຄືນສັງງບໍ່ຫຼື | ພຣະເອີຍ |
| ທ້າວສັ່ງໃຫ້ | ຂ້າອີບຄືນມາ | |
| ອັນວ່າກຸມານພຣະ | ສັ່ງມາຄຳແຈ້ງ | |
| ບອກໃຫ້ພຣະພໍ່ເຈົ້າ | ທັງແມ່ນານດາ | |
| ຢ່າໃຫ້ມົວໃຈຄິດ | ສິ່ງໃດນຳທ້າວ | |
| ທ້າວຈັກໄປນານໄດ້ | ສາມເດືອນຄືນຄອບ | |
| ຢ່າໄດ້ຄຶດອ່າວໂອ້ | ຄະນຶງທ້າວທີ່ໄຍ | ເທາະເນີ. |
| ເມື່ອນັ້ນຣາຊາເຈົ້າ | ທັງສອງພໍ່ແມ່ | |
| ກໍຈິ່ງຄຶດຄັ່ງແຄັນ | ນຳເຈົ້າລູກຕົນ | |
| ໂອນໍບຸດຕາແກ້ວ | ສາຍໃຈເຈົ້າແມ່ | ກູເອີຍ |
| ວ່າຈັກໄປທ່ຽວຫຼິ້ນ | ວັນນີ້ຊິຕ່າວຄືນ | ວ່າເນ |
| ສັງວ່າເຈົ້າຊິເດີນໄປໜ້າ | ຄົນດຽວບໍ່ມີໄພ່ | |
| ເຈົ້າກໍດັ້ນປ່າໄມ້ | ໄພກວ້າງຜູ້ດຽວ | ແມ່ເດ |
| ດຽວວ່າເຈົ້າຊິໄປທ່ຽວຫຼິ້ນ | ພໍສວ່າງອາວອນ | |

ເຖິງຍາມແລງ ຕ່າວຄືນມາຫ້ອງ
ແມ່ກໍວາງໃຈດ້ອຍ ດອນບາເອົ້າຊີ້
ບັ້ນທີ່ແຫ້ ໃຈນ້ອຍເລົ່າຍັງ ແມ່ນໍ
ຄ້ອນວ່າເຈົ້າກ່າວແລ້ວ ຕົກແຕ່ງປຸນແປງ
ສອງກໍຍໍທຽນຕິດ ເທພຄຸນນໍາຫ້າວ
ຂໍຈົ່ງນໍາຊູຄ້ໍາ ຊາຍດຽວເດີນປ່າ
ທາຍເທດຮ້ອນ ໃພທຽ້ງທວ່າງທາງ ແດ່ທ້ອນ.
ບັດນີ້ມາຈັກກ່າວເຖິງທ້າວ ວໍຣະຈິດເດີນປະເທດ ກ່ອນແລ້ວ
ທ້າວກໍດັ້ນປ່າໄມ້ ໄປໜ້າປ່າໜາ
ບາຄານຜ້າຍ ໄພສົນບໍ່ມີຄູ່
ທ້າວກໍເຂົ້າປ່າໄມ້ ໄປໜ້າຊື່ໄກ
ຄອຍເຫັນຖັກຖັນໄມ້ ຊ້ອງຊີ້ພູເຂົາ ພັ້ນເຍີ
ບາຄານຫຼີງ ຊື່ດູໄປໜ້າ
ຄອຍດູໄມ້ ລໍາງານຫຼາຍສິ່ງ
ຄືດັ່ງແຂນປາດໃຫ້ ເຂົາເອົ້າຊ່າລື ພັ້ນເດ
ທ້າວຮ່ໍາແລ້ວ ດົ້ນດຸ່ງກາຍໄປ
ຟັງຍິນແຊວາສຽງ ຄ່າງຊະນີໂຕນເຕັ້ນ
ເຂົາກໍບັນກັນຮ້ອງ ດົງຫຼວງຊີຊວ່າ
ພູວະນາດທ້າວ ແຫງນໜ້າຊື່ດູ
(ເຫັນສ່ໍາເຊື້ອ ຊຸມຊາດວານອນ

ຫຼາຍໂຕຊິ　　ຊ່ວງຊີງແລທ້າວ)

ເຊົາກໍຄະວອກຄະແອກເຕັ້ນ　　ຕາມກັນເປັນໝູ່

ພູຣະບາດທ້າວ　　ເຫັນແລ້ວຢາກຫົວ

　　ລາງຕົວຂຶ້ນ　　ໂກນໂກເຕົ້າເດບ

ພຣະບາດທ້າວ　　ເຫັນແລ້ວຊື່ນໃຈ

ທ້າວເລົ່າດັ້ນ　　ເດີນດຸ່ງກາຍໄປ

ແຍງພູຜາ　　ປ່າຊວາງເຫວຫ້ວຍ

ຟັງຍິນຊະນີບັນຮ້ອງ　　ໃນດົງອີອ່ອນ

ວອນອ່ອນຮ້ອງ　　ຮຽວໄມ້ນ່ວງແຂວນ

　　ບາງພ່ອງແຈນໆຮ້ອງ　　ໂຕດຽວງວຍງ່າ

ບາບ່າວທ້າວ　　ເຫັນແລ້ວອິດູ

ແຕ່ນັ້ນທ້າວກໍເດີນດຽວຂ້າມ　　ພະຄີຣີຫຼາຍຍ່ານ

ດັ້ນປ່າໄມ້　　ໄປໜ້າບໍ່ເຊົາ

　　ພໍເມື່ອວັນລັ່ນຄ້ອຍ　　ລັບລ່ຽນເຂົາທອງ　　ແລເຢີ

ພູມີຢູດ　　ອື່ນງາມເຊົາຍັ້ງ

ພໍຄາວແລ້ວ　　ສູນແສງມົວມືດ

ທ້າວກໍຫັກພືດໄມ້　　ປູແລ້ວເລົ່ານອນ

　　ບາບຸນທ້າວ　　ຄະນຶງນາງໃຫ້ຢູ່

ຈິດທະຈອດຂ້ອງ　　ນຳນ້ອງບໍ່ລືມ

ເຈົ້າຍອດແກ້ວ　　ໄປເກີດໄກອົກ　　ອີຮຽນເອີຍ

ພີ່ຈັກໄປປອງເອົາ    ພຣະຍອດບາງອິນຊ້ອນ
ໂອນໍເຈົ້າຜູ້ດອກເກດແກ້ວ    ຊິໄປເກີດໄກອີກ    ພີ່ເດ
ກົກເຈົ້າຍັງຢູ່ພີ້    ໜີໄປບານບ້ານເພີ່ນ    ເສັ້ງນໍ
ຈິດພີ່ໄປຢູ່ພັ້ນ    ຍັງພີ້ແຕ່ຮ່າງຄີງ    ພີ່ແລ້ວ.
    ແຕ່ນັ້ນທ້າວກໍຍໍມືໄຫວ້    ເທວະດາທຸກແຫ່ງ
ຂໍໃຫ້ມາຮັກສາຂ້າພະເຈົ້າ    ປາງນີ້ຊອຍຊູ    ແດ່ທ້ອນ
ຄ້ອນວ່າທ້າວຈິ່ນແລ້ວ    ເລີຍເຊີອບນອນຫຼັບ
ວອຍໆພັດ    ພຣະຍອດບາງແພງລ້ານ
ເມື່ອນັ້ນຣາຕີຂຶ້ນ    ເຂົາທອງແຈ້ງຮຸ່ງ    ນາແລ້ວ
ບາບ່າວທ້າວ    ເລີຍຍ້າຍຍ່າງໄປ
    ເຂົ້າປ່າໄມ້    ດັ້ນດຸ່ງຂີຣີ
ຜູ້ມີພຣະ    ດຸ່ງເດີນໄປໜ້າ
ເຫັນແຕ່ຜາຊັນລ້ອນ    ພະຄີຣີສຸດຊື່ອ
ບາບ່າວທ້າວ    ເດີນດັ້ນລ່ອງເຄີງ
    ທ້າວກໍເຂົ້າຈີ່ນໃກ້    ເລາະລຽບຕີນເຂົາ
ເອົາຕີນເລາະ    ລຽບພະນອນແນມຍ້ຽມ
ກໍຈື່ງໄປເຫັນເຈົ້າ    ພຣະຮັດສີຕົນປະເສີດ
ທ້າວກໍຂໍຢູ່ຍັ້ງ    ດອນເຈົ້າພີ່ຮັດສີ
    ພຣະກໍພາທີຕ້ານ    ດອນບາເຈົ້າອ່ອນ
ເອົ້າຈ້ອຍໆ    ຖາມຖ້ອຍເທດກາບ

| | | |
|---|---|---|
| ເຈົ້າບິນມາແຕ່ກົ້ວ | ຫິນແຫ່ງຫາງໃດ | ພີ່ເດ |
| ເຈົ້າປະສົງມາສັງ | ຮອດເຮົາພາຍພີ້? | |
| ແຕ່ນັ້ນອໍຣະຈິດທ້າວ | ຂານຄໍາຮັບພາກ | |
| ບິນບອກແຈ້ງ | ຈອນເຈົ້າບໍ່ຍັ້ງ | |
| ຂ້າກໍຍັງປະສົງໄດ້ | ອາຄົມສາດເພດ | |
| ວິເສດແທ້ | ນໍາເຈົ້າພີ່ອັດສີ | |
| ຂ້າຈິ່ງດັ້ນປ່າໄມ້ | ຂຽວດຸ່ງພູຜາ | |
| ຫວັງຢາກຮຽນອາຄົມ | ເບື່ອງດີຂອນເຈົ້າ | |
| ເມື່ອນັ້ນອິງອັດສີຕ້ານ | ນໍາບາຄໍາຊອບ | |
| ຄັນວ່າເຈົ້າຢາກໄດ້ | ປະສົງແທ້ບໍ່ຂືນ | ພີ່ແລ້ວ |
| ເຈົ້າຢາກໄດ້ | ສິບເລກເປັນສັງ | ພີ່ເດ |
| ຕາມໃຈບາ | ບໍ່ຂືນສອນໃຫ້ | |
| ເມື່ອນັ້ນທ້າວກໍຍໍມືໄຫວ້ | ອິງອັດສີດິນປະເສີດ | |
| ຂ້າກໍຄຶດຢາກໄດ້ | ມົນຖອດຈິດເປັນ | ພຣະເອີຍ |
| ຄັນວ່າຖອດໃສ່ໄມ້ | ໃຫ້ປາກນໍາເປັນ | |
| ຖອດໃສ່ໝອນ | ໃຫ້ໝອນປາກເວົ້າ | |
| ຂໍໃຫ້ພຣະບາດເຈົ້າ | ສອນໃຫ້ເບື່ອງດີ | ແດ່ທ້ອນ. |
| ແຕ່ນັ້ນອິງອັດສີເຈົ້າ | ຈໍາບາຫາດອກ | |
| ເຈົ້າຈິ່ງຫາດອກໄມ້ | ມາທ້ອນພີ່ຊິສອນ | ລູກເອີຍ |
| ທ້າວກໍຫາດອກໄມ້ | ຖວາຍບາດບັງຄົມ | |

| | | |
|---|---|---|
| ອີງອັດສີວັບ | ອີບເອົາເລີຍໄດ້ | |
| ເມື່ອນັ້ນພຣະກິສອນມີນໃຫ້ | ບາຄານຜູ້ປະເສີດ | |
| ພຣະບອກແລ້ວ | ບາທ້າວຈົ່ມນຳ | |
| ສານທີແລ້ວ | ບາຄານຈຳຈື່ | |
| ທ້າວຈື່ໄດ້ | ໃຈເຈົ້າຊື່ນຊົມ | |
| ທ້າວກໍບົວຣະບັດເຈົ້າ | ແລງງາຍເຊົ້າຄ່ຳ | |
| ທັງເລົ່າຫາດອກໄມ້ | ບູຊາເຈົ້າຊູ່ວັນ | |
| ຕັກຕຸ່ມນ້ຳ | ປັດຕາດແລງງາຍ | |
| ພໍເມື່ອຫຼາຍວັນເລີຍ | ຮ່ຳຄະນຶງເຖິງນ້ອງ | |
| ໂອນໍປານນີ້ແພງແສນແກ້ວ | ນອນດຽວບໍ່ມີຄູ່ | ແລນໍ |
| ນ້ອງຈິ່ງຄອຍຖ້າອ້າຍ | ພາຍພີ້ຜູ້ດຽວ | ແດ່ເນີ |
| ກໍບໍ່ມີໃຜຊູ້ | ບຸນມີຊິເປັນຄູ່ | ນາງແລ້ວ |
| ມີແຕ່ຜົວເກົ່ານ້ອງ | ຂອງພັ້ນຊາດຫຼັງ | ພີ່ແລ້ວ |
| ຄ້ອນວ່າທ້າວກ່າວແລ້ວ | ເລີຍຄ່ຳອິຣະຊອນ | |
| ອີງອັດສີຫາ | ທູບທຽນຍໍໄຕ້ | |
| ອັນວ່າບາໄທທ້າວ | ບັນທົມເນຫເນ່ງ | |
| ຫຼັບໂຊດຊ້ອຍ | ມີຮູ້ເມື່ອຄີງ | |
| ເດິກຊັກໃຊ້ | ໃກ້ຮຸ່ງອິຣະຊອນ | |
| ບາຄານຫຼັບ | ຊ່ອຍານໃນຜ້າ | |
| ແມ້ງນຶ່ງດາຣາຊ້າຍ | ເຂົາທອງພົ້ນພຸ່ງ | ມາແລ້ວ |

ນີແຈ່ມເຈົ້າ ຍິນຄັ້ງຕື່ນຕົນ

ຟັງຍິນຂຸນລົວຮ້ອງ ແຄນສະພັງອ່ອນໆ ພຸ້ນເຍີ

ຈະນີຮ່ຳຮ້ອງ ປາຍໄມ້ສົ່ງສຽງ

ມີທັງນົກອີ່ອ້ຽງ ກີ້ກ່າງຂຸນທອງ

ເຂົາກໍພາກັນມາ ຮ່ຳໄຮນຳໄມ້

ວິຣະຈິດທ້າວ ມີໃຈຈິດທະຈອດ

ຄຶດຄ້ອຍໆ ຄະນຶງນ້ອງບໍ່ລືມ ພີ່ແລ້ວ.

ບັດນີ້ດູນານແລ້ວ ສາມເດືອນແຖມຖ່າຍ

ບາບ່າວທ້າວ ຈຳໄວ້ບໍ່ລືມ

ແຕ່ນັ້ນທ້າວກໍຮອາຍມົນແກ້ວ ຄຣູສອນລອງເບິ່ງ

ຖອດໃສ່ໄມ້ ຈຳເອົາປາກເປັນ

ເມື່ອນັ້ນທ້າວຈຶ່ງລາບາດເຈົ້າ ຄືນສູ່ເມືອງຫຼັງ

ບາຄານນົບ ສັ່ງລາອັດສີເຈົ້າ

ຄ່ອຍຢູ່ດີເຍີຕົນບຸນເຈົ້າ ຄຣູບາອົງປະເສີດ ຮຽນເອີຍ

ພຣະກໍສອນສັ່ງໃຫ້ ຄຳຮູ້ຊູອັນ

ບັດນີ້ຂ້າຈັກລາເມືອຫ້ອງ ເມືອງຫຼັງເສັ່ງກ່ອນ

ຂໍໃຫ້ພຣະພີ່ເຈົ້າ ເນົາຖ້າສຳຣານ ພໍ່ເອີຍ

ແຕ່ນັ້ນອົງອັດສີເຈົ້າ ຖວາຍຄະດີແລ້ວສັ່ງ

ຄ່ອຍໄປດີເຍີໂສມສເລົາທ້າວ ກຸມານນ້ອຍອ່ອນ ກູເອີຍ

ເຈົ້າຈຶ່ງເມືອສືບລ້າງ ເມືອງກວ້າງສຳຣານ ພໍ່ເນີ

ອັນນຶ່ງຢ່າໄດ້ມີເຂັນຂ້ອງ　　ອິນຕາຍບັງບຽດ
ໃຫ້ເຈົ້າຢູ່ສືບສ້າງ　　ເປັນເຈົ້າປົ່ງປອງ　　ພໍ່ເນີ
ຄ້ອມວ່າພຣະສັ່ງແລ້ວ　　ທ້າວຂາບປາທາ
ບາຄານເດີນ　　ອອກໄປມີຊ້າ
ທ້າວກໍອອຍໆຂ້ອນ　　ດົງຫຼວງເລີຍຄ່ຳ
ພໍເມື່ອສາມສີ່ມື້　　ເຖິງບ້ານເຂດເມືອງ
ອັນວ່າບາບຸນເຂົ້າ　　ໃນເມືອງຍາມຄ່ຳ
ທ້າວກໍເຂົ້າສູ່ຄຸ້ມ　　ປາງແກ້ວແຕ່ງດົນ
ເມື່ອນັ້ນມາດາແກ້ວ　　ບິດາເຕັນລູກ
ມາຮອດແລ້ວ　　ສອງເຈົ້າຊື່ນຊົມ
ມາລືສາຍໃຈແກ້ວ　　ບຸດຕາລູກອ່ອນ　　ກູເອີຍ
ເຈົ້າຫາກດັ້ນປ່າໄມ້　　ໄປກ້ຳຝ່າຍໃດ　　ແມ່ເດ
ກໍຫາກດູນານລ້ຳ　　ຄອງຫາລູກອ່ອນ
ທຸກຄ່ຳເຊົ້າ　　ບໍ່ເຕັນເຈົ້າຫງ່ອນເຫງົາ　　ແມ່ແລ້ວ
ເມື່ອນັ້ນອົງກະສັດນ້ອຍ　　ຂານຄຳຮັບພາກ
ຂ້ອຍກໍໄປພົບພໍ້　　ຮັດສີເຈົ້າຢູ່ດົງ
ຂ້ອຍກໍຮຽນຄວາມຮູ້　　ຫຼາຍປະການນຳທ່ານ
ຂ້ອຍກໍເນົາຢູ່ຍັ້ງ　　ນຳເຈົ້າປິ່ນປົວ
ແຕ່ນັ້ນສອງກໍຍິນດີແທ້　　ສົມພານຄຸນລູກ
ບາບ່າວທ້າວ　　ຈາຕ້ານພໍ່ດົນ

ບັດນີ້ລູກຈັກລາພໍ່ແມ່ເຈົ້າ ເດີນປະເທດຫາເມັງ ກ່ອນແລ້ວ
ອີງບິດາມາດາ ຢູ່ເມືອງຢ່າຮ້ອນ
ລູກຈັກໄປຫາແກ້ວ ພະຣິຍານາງນາດ
ເຈົ້າຄ່ອຍເນົາຢູ່ຫ້ອງ ເມືອງກວ້າງສຳຣານ ພໍ່ເອີຍ
ນາງນັ້ນຊື່ວ່າຈັນທະຈອນນ້ອຍ ພະຣິຍາແຕ່ຊາດກ່ອນ ມາແລ້ວ
ລູກຈັກລາຈາກພໍ່ແມ່ເຈົ້າ ໄປຕ້ານຕໍ່ກັນ ກ່ອນແລ້ວ
ເມື່ອນັ້ນບິດາໄຫ້ ມາດາຍັງກ່າວ
ພໍ່ກໍຂໍກ່ອນທ້ອນ ຈອນເຈົ້າຢ່າໄປ ພໍ່ທ້ອນ
ພໍ່ຈັກໂອນເອົາໃຫ້ ບຸດຕາທຽມພ່າງ
ຢູ່ລືບລ້າງ ເມືອງແກ້ວແທ່ງດິນ ພໍ່ທ້ອນ
ກິຫາກມີບໍ່ໄຮ້ ລູກທ່ານເສນາ ນັ້ນເດ
ຕາມໃຈນັກ ພໍ່ຊິໂອນເອົາໃຫ້
ເມື່ອນັ້ນວໍຣະຈິດທ້າວ ກຸມານຕ້ານຕອບ
ທູນພໍ່ເຈົ້າ ທັງເທົ້າແມ່ຄີງ
ອັນວ່າລູກສຳເຊື້ອ ສາວຖ່າວຊາວເມືອງ ເອົານີ້
ຂ້ອຍບໍ່ມີເອົາໃຜ ໃພ່ເມືອງມາຊ້ອນ
ຊາດທີ່ເປັນກະສັດນີ້ ຫາເອົາເມືອງອື່ນ
ບໍ່ຫ່ອນເອົາໃພ່ນ້ອຍ ມາຊ້ອນບໍ່ຄວນ ພໍ່ເອີຍ
ເມື່ອນັ້ນບິດາໄຫ້ ມາດາຍັງກ່າວ
ພໍ່ຂໍຫ້າມແຈ່ມເຈົ້າ ບາທ້າວກໍບໍ່ຟັງ ແລນໍ

ກໍຫາກຕາມທີທ້ອນ    ສາຍໃຈເຈົ້າແມ່    ກູເອີຍ
ຕາມແຕ່ເຈົ້າ    ຫາໄດ້ບໍ່ຂືນ    ແມ່ແລ້ວ
ຄ່ອຍໄປດີເຍີສາຍໃຈແກ້ວ    ກູພຍາພຽງເນດ    ຂ້ອຍເອີຍ
ໃຫ້ເຈົ້າໄດ້ໜີ່ຟ້າ    ຜູ້ປະເສີດໃຈເມືອງ    ພໍ່ເນີ
ສາຍໃຈກູ    ຢ່າເຄືອງຄໍາຮ້ອນ
ແຕ່ປັ້ນຫ້າວເຂົ້າຫ້ອງ    ປຸນແຕ່ງເອົາຂອງ
ທັງສັງວານ    ເຄື່ອງທອງເອົາມ້ຽນ
ດາດີຕັ້ງ    ປະດັບໄວແອນຫ່ຽວ
ຍໍພິກຜ້າ    ຄຽນແລ້ວຜູກແອວ
ແລ້ວເລົ່າເອົາແຫວນແກ້ວ    ທໍາມະໂລງສຸບສອດ
ທຸກທີ່ຖ້ອນ    ບາຫ້າວແຕ່ງດີ
ບໍຣະບອນແລ້ວ    ຕິດທຽນກົ້ມຂາບ
ໄຫ້ວຊູ່ດ້ານ    ດິນຟ້າຄູ່ຄອງ
ວິຣະຄຸນເທົ້າ    ເທພດາທຸກແຫ່ງ
ຂໍຈົ່ງນໍາຮັກສາຂ້າພະເຈົ້າ    ປາງນີ້ຊ່ອຍຊູ    ແດ່ທ້ອນ.
ຄ້ອນວ່າແລ້ວ    ຍໍພຣະຂັນສຸບສອດ
ເຂີ້ນສັ່ງຫ້ອງ    ປາງແກ້ວແຫ່ງຕົນ
ຄ່ອຍຢູ່ດີເຍີປາງທອງຂ້ອຍ    ມະຫາໄຊທໍາອາດ    ອີຮຽມເອີຍ
ຂ້ອຍຈັກໄປພາກຫ້ອງ    ວັນນີ້ຄ່ວາເດີນ    ກ່ອນແລ້ວ
ຄ່ອຍຢູ່ດີເຍີດຽງທອງແກ້ວ    ມະນີໂຊບໍ່ມີຄູ່    ອີຮຽມເອີຍ

ຂ້ອຍກິນອນລ້ອງຄ້ອງ ຕຽງແກ້ວຄູ່ບໍ່ມີ ພີ່ແລ້ວ
ບັດນີ້ຂ້ອຍຈັກລາຕຽງແກ້ວ ບັນທົມທິພອາດ
ລາທັງສາດເສື່ອມຸ້ງ ຮານຮ້າງຫ່າງນອນ ກ່ອນແລ້ວ
ຂ້ອຍຈັກເອົາຕີນເຂົ້າ ຂຽວຈອນທີ່ນເອດ
ຫຼອນວ່າວິເສດໄດ້ ເນັ່ງແກ້ວຊິຕ່າວຄືນ ເຈົ້າເອີຍ
ຄ້ອນວ່າຫ້າວສັ້ງແລ້ວ ລາຈາກສະຖານທອງ
ທອຍພຣະຂັນໄຊ ຍ່າງເຊິ່ງຍອງຍ້າຍ
ເສນາຂ້າ ມຸນຕີແຫນແຫ່
ຍົວຣະຍາດຍ້າຍ ກາຍຄຸ້ມຣາຊວັງ
ຍາບໆຍ້າຍ ລາຈາກນະຄອນສີ
ເສນາທັງມຸນຕີ ແຫ່ຕາມຕີນນ້ອຍ
ຂຽວວັນຂ້ອນ ພະຄີຣີດັ້ນດຸ່ງ
ວັນຍັ້ງມື້ ຂຽວເຂົ້າດ່ານດົງ
ກໍຈຶ່ງມັ້ນເຂດຫ້ອງ ນະຄອນໃຫຍ່ແດນຂວາງ
ເຖິງພົງໄພ ແກ່ວພູພະນັງກວ້າງ
ບາບຸນຫ້າວ ເຕີນພົນພັກເມື່ອຍ
ຢຸດຢູ່ຍັ້ງ ຖັນນັ້ນດ່ານໄພ
ແຕ່ນັ້ນວັນບ່ຽງຄ້າຍ ລັບລ່ຽນລີງຂອນ
ບາກິພາພົນນອນ ຢູ່ເນົາໃນຫັ້ນ
ພໍເມື່ອອາຕີແຈ້ງ ວັນອຽນມື້ໃໝ່ ມານັ້ນ

ອັນວ່າພິນພອກພ້ອນ ພຽງໜ້າຕື່ນມາ
ທ້າວກໍລຸກສ່ວຍໜ້າ ລ້າງອາບໂສງສີ
ສເວີຍສາລີ ຄາບງາຍເລີຍແລ້ວ
ແຕ່ນັ້ນບາລີຕ້ານ ເຕີນພິນພອກໄພ່
ສູຈິ່ງຄືນສູ່ຫ້ອງ ເມືອງບ້ານແຫ່ງເຮົາ ກ່ອນເຖີ້ນ
ຂ້ອຍຈັກເດີນປ່າໄມ້ ໄປທ່ຽວຄົນດຽວ ກ່ອນແລ້ວ
ເອົາຕົນຫາຍ ເຂື່ນພະນອນໄພກວ້າງ
ຂໍໃຫ້ທັງປວງພ້ອມ ພາກັນກັບຕ່າວ
ຄືນສູ່ຫ້ອງ ຫອມຕູ້ມລູກເມັງ ທ່ານເຖີ້ນ
ແຕ່ນັ້ນທ້າວສັ່ງແລ້ວ ເຂົາເລີກລາຄືນ
ແຊວໆສຽງ ຕ່າວຄືນມາບ້ານ
ສົນໆເຂົ້າ ຄືນນະຄອນຄ້ອນຄ່ຳ
ຂຶ້ນສູ່ຢ້າວ ເຂືອນຫ້ອງແຫ່ງຕົນ
ເທື່ອນີ້ໂຍຕິກາບັ້ນ ເສນານຳສິ່ງ
ລົງໄວ້ພຽງສ່ຳນີ້ ເມືອໜ້າກ່າວບາ ກ່ອນແລ້ວ.

## ບັ້ນທ້າວອໍຣະຈິດໄປຮອດຍ່າຈຳສອນ

ບັດນີ້ສັພກອດກ້ຽວ ກອນເກົ່ານາຖແລງ ກ່ອນແລ້ວ
ຊື່ວ່າທັມນອງກອນ ອາດຖແລງໃນກວ້າງ

ຈຽມແຕ່ປອງເຂົາຂ້າ ລາຄືນນະຄອນຣາດ

ພຣະນາງທ້າວ ເນົາຄ້າງຊູ້ດຽວ

ແຕ່ນັ້ນທ້າວຍ່າງຍ້າຍ ເດີນດຸ່ງພະຄີຣີ

ພູມີພຣະ ດຸ່ງເດີນໄປໜ້າ

ທ້າວກໍອອຍໆຂ້ອນ ດົງຫຼວງເລີຍຄ່ຳ

ຍາມເມື່ອແສງມືດອ້ຳ ບາທ້າວເລົ່ານອນ

ໃນຝຸ່ມໄມ້ ດົງໃຫຍ່ພະຄີຣີ

ບາສີນອນ ຣື່ນງາມເຊົາຍັ້ງ

ເດິກໆຂ້ອນ ອິຣະຊອນເຄົ້າອັນ

ສີແຈ່ມເຈົ້າ ຟາຍນ້ຳລູບຄີງ

ພໍເມືອຣາຕີຊັ້ນ ດາວພຣະກາຍພົ້ນພຸ່ງ

ພູອະນາງທ້າວ ຍິນຄ້ຳຕື່ນຕົນ

ຟັງຍິນສັກູນາຣ້ອງ ໄພໜາຫາຄູ່

ພູອະນາງທ້າວ ຄະນຶງນ້ອງແຈ່ມສມອນ

ໂອນໍແກ້ວເກີດຫຼ້າ ໄກອີກອີ່ພີ່ເອີຍ

ພີ່ບໍ່ທັນເຫັນໜ້າ ສັ່ງມາໄດ້ຍິນແຕ່ຂ່າວ ສາບໍ

ໄດ້ຍິນເພິ່ນຊ່າເອົ້າ ນາພີ້ຮອດອີ່ຮຽມ ພີ່ນາ

ຈຽມແຕ່ຮູ້ຂ່າວແກ້ວ ນ້ອງເກີດໄກຕາ

ອີກພີ່ຄືພູຜາ ລົ້ນເຕັງຕັນໄອ້

ດອງທັດໄທຂອງຂ້ອຍ ສອອຍໄອອະອີ່

ພີ່ກໍຄິດຄ້ອຍໆ　　ຄະນຶງນ້ອຍບໍ່ວາຍ　　ພີ່ແລ້ວ
　　ໂອນໍບໍ່ຊ່າຊິໃຫ້ອີ່ພີ່ຂື່ນງ່າຕ້ອງ　　ຄອຍນ້ອງຢູ່ບ່ອນໃດ　　ພີ່ເດ
ຄ້ອນວ່າທ້າວຮ່ຳແລ້ວ　　ແຈ້ງຮຸ່ງສອຍລອຍ
ບາຄານລຸກ　　ອາບສີໂສງນ້ຳ
ພໍຄາວແລ້ວ　　ບາຄານຍ້າຍຍ່າງ
ດົ້ນປ່າໄມ້　　ໄປໜ້າບໍ່ເຊົາ
ພໍເມື່ອຫຼາຍວັນແລ້ວ　　ຫຼາຍຄືນຄາວຄີບ
ກໍຈື່ງເຖິງແຕ່ງຫ້ອງ　　ເມືອງກວ້າງພຣະຍອດນາງ
　　ທ້າວຈື່ງເດີນໄປພໍ້　　ເຮືອນຍ່າຈຳສອນ
ບາຄານຂໍ　　ຢູ່ນຳນາຍເຖົ້າ
ເຊົານຳເຈົ້າ　　ນາຍຍ່າຈຳສອນ
ພໍເມື່ອສອງສາມວັນ　　ຢູ່ເຢັນນີຮ້ອນ
ແຕ່ນັ້ນທ້າວກໍພາທີຕ້ານ　　ໄອຍະກາບຕີນຍ່າ
ເຂົາວ່ານາງນາດໃຫ້　　ບຸນກວ້າງພຣະຍອດເມືອງ
　　ງາມຍິ່ງແຍ້ມ　　ສເມີດັ່ງອິນຂຽນ
ແລລອງໃດ　　ໄປມີໃຜພຽງ
ແຕ່ວ່ານາງຄານນ້ອຍ　　ມີຈາຕ້ານປາກ
ນາງບໍ່ເອົ້າ　　ດອມແທ້ເພດຊາຍ
　　ຄຳຊ່າເຮືອງ　　ເປັນສິ່ງສັນໃດ
ໂສມນາງເປັນ　　ດັ່ງໃດເດເຈົ້າ?

24/VII
ຫ້າມຈຳໜ່າຍ

ເມື່ອນັ້ນໄອຍະກາເຈົ້າ　　ໄຂຄຳຕ້ານບອກ
ກິຫາກງານເລີດລ້ຳ　　ເຂົາຍ້ອງຊູ່ຄົນ
　　ແຕ່ວ່ານາງນາດນ້ອຍ　　ບໍ່ປາກນຳຊາຍ
ອັນວ່າຣາຊາເຕີນ　　ໄພ່ພົນທັງຄ້າຍ
ໃຫ້ເຂົາມາຖາມນ້ອຍ　　ນາງງາມບໍ່ປາກຕໍ່
ກິຫາກໝົດຊູ່ບ້ານ　　ເສັງສັງງຊູ່ພາຍ　　ແມ່ແລ້ວ
　　ຄັນວ່ານາງຈາຕ້ານ　　ດອນໃຜເປັນແມ່
ພຣະບາດເຈົ້າ　　ຊິວາງໃຫ້ບໍ່ຂືນ　　ແມ່ແລ້ວ
ເມື່ອນັ້ນຈອມກະສັດທ້າວ　　ຖແລງຄຳບົນບອກ
ຄວາມປະສົງແຕ່ງເຈົ້າ　　ດອນເຖົ້າຍ່ານາຍ
　　ຂ້ອຍຢາກໄປຈາເອົ້າ　　ດອນນາງຈັກສນ່ອຍ　　ດູທ້ອນ
ຫຼອນວ່າບຸນຄາດໄດ້　　ນາງນ້ອຍປາກດອນ　　ບໍ່ຮູ້
ຂ້ອຍບໍ່ລືມຄຸນເຈົ້າ　　ມາດາເປັນແມ່　　ສັງແລ້ວ
ຂໍຍ່າໄປຂາບໄຫ້ວ　　ພຍາເຈົ້າຂາບທູນ　　ກ່ອນທ້ອນ
ບາດວ່າບຸນນຳໃຫ້　　ທົງເມືອງສເວີຍຣາດ　　ບໍ່ຮູ້
ຂ້ອຍຈັກພາຍ່າເຈົ້າ　　ຍູສ້າງສ່ຳຣານ　　ຍ່າເອີຍ
　　ເມື່ອນັ້ນໄອຍະກາແກ້ວ　　ຟັງຫຼານເອົ້ານ່ອນ
ຍ່າກໍຕົກແຕ່ງແລ້ວ　　ດາເບື້ອອອກໄປ
ເຂົ້າຊຸ່ຄຸ້ມ　　ວັງຣາດຣາຊາ
ໄອຍະກາຕາຍ　　ຂາບທູນຈອມເຈົ້າ

ຍັງມີຫຼານຊາຍນ້ອຍ ຄົນພອຍພັດພາກ
ມາຢູ່ຍັ້ງ ນຳຂ້າທີ່ສອນ ພຣະເອີຍ
ຫົວອກິຄິດຢາກໄດ້ ທິພຍອດໃຈເມືອງ
ບາກິຈຈຳຂ້າມາວານຂໍ ພຣະຍອດເມືອງບຸນກວ້າງ
ເມື່ອນັ້ນອົງກະສັດເຈົ້າ ຈອມເມືອງຂານຕອບ
ຂ້ອຍບໍ່ຂືນແຈ່ມເຈົ້າ ເອົາແທ້ແຕ່ບຸນ ຕົ້ນທ້ອນ
ຄັນຫາກບຸນຄາດໄດ້ ຫາກຊິໃດ່ຄອຍເຫັນ
ຂ້ອຍບໍ່ຂືນບູຮານ ແຕ່ງໃຍເຄີຍໄດ້
ຄັນໃຜມາຈາຕ້ານ ລືມນາງຢາກຕີ່ ດັ່ງນັ້ນ
ຂ້ອຍຈັກປຸນປູກປ້ອງ ຄົນນັ້ນບໍ່ຂືນ ຍ່າເອີຍ
ໃຫ້ຍ່າໄປບອກຫົວອ ທີ່ອາດຫຼານຕົນ ກ່ອນເທີ້ນ
ມາຈາຖາມ ພຣະຍອດນາງແພງລ້ານ
ພີ່ອານາງຂານຂໍ້ ຄຳບາເອົ້າຕີ່ ດັ່ງນັ້ນ
ເອົາຈັກຍໍຍົກຫົວອ ແທນສ້າງສືບເມືອງ ເຈົ້າເອີຍ
ແຕ່ນັ້ນໄອອະການຕ້ານ ບ້າງຄົນລາເລີກ
ລາຈາກເຈົ້າ ເມືອຟ້າວຂຶບພະລັນ
ເມືອເຖິງຫ້ອງ ເຄຫາເຊົາຈອດ
ເປື້ອງເຄື່ອງແລ້ວ ນາຍເຖົ້າຢູ່ສາງງມ
ແຕ່ນັ້ນຫົວອກ່າວຕ້ານ ຖາມຍ່າແອນເປືອງ
ດູຮາໄອຍະກາກູ ຍ່າແພງເປັນເຈົ້າ

ຢ່າກີໄປຫຸບໄຫ້ວ ຣາຊາກົ້ມຂາບ

ພຣະບາດເຈົ້າ ຈາຕ້ານສິ່ງໃດ ແມ່ເອີຍ?

ເມື່ອນັ້ນໄອຍະກາເຖົ້າ ຂານບາຄຳຊອບ

ບິນບອກທ້າວ ຫາຍຕັຽນບໍ່ຍັ້ງ

ຢ່າກີໄປໄຫ້ວເຈົ້າ ຈອມຣາຊຣາຊາ

ພູມີພຣະ ບໍ່ຂືນຫຼານນ້ອຍ

ໃຫ້ຫຼານໄປຈາຕ້ານ ດອມນາງດູກ່ອນ

ຄັນວ່ານາງປາກເອົ້າ ດອມທ້າວບໍ່ຂືນ

ເຈົ້າຈິ່ງຕົກແຕ່ງເນື້ອ ເອວອີບປຸນເປືອງ

ວັນນີ້ອຸດໂມມີ ໂຊກໄຊເຊັ້ງກ້າ

ມະຫາໄຊພ້ອມ ດູດີດາປະເສີດ

ຢຽວຈັກສິນເຈດເຈົ້າ ຈອມໄທ້ປາຖນາ ແມ່ແລ້ວ

ເຈົ້າຢ່າໄດ້ຢູ່ຊ້າ ຈອມຣາຊຫຼານຮັກ ແມ່ເອີຍ

ຫຼອນວ່າບຸນເຄີຍເຖິງ ພຣະຍອດນາງແພງລ້ານ

ຈິ່ງໃຫ້ສົມພານທ້າວ ບາບຸນແຂງຂນາດ

ໄດ້ນາດນ້ອງ ເປັນເຈົ້າມິ່ງແທນ ແມ່ທ້ອນ.

ເມື່ອນັ້ນທ້າວນຸ່ງຜ້າ ຫືນອາດເອົາໂສມ

ຫົງສ້າງວານ ເຄື່ອງຄຳດູຣະຫ້ອຍ

ຫອຍຫົງເສື້ອ ກະດູມທອງດູອາດ

ຊະດາເກດເກົ້າ ສອນເຂົ້າໃສ່ສຽບ

ກິຫາກດູຄ່ອງແທ້ ງາມເງື່ອນອິນສວັນ
ວັນສີໃສ ຄ່ອງງາມຄືຊິຍ້ອຍ
ບາກີລີລາຍ້າຍ ລົງທໍເຮືອນຍ່າ
ເຂົ້າສູ່ຄຸ້ມ ວັງເຈົ້າພຣະຍອດເມືອງ
ແຕ່ນັ້ນເສນາທ້າວ ທັງຫຼາຍເຫັນອ່ອນ
ເຈົ້ານີ້ລູກປະເທດທ້າວ ໃດແທ້ຫ່ງອມາ
ດູເພດໜ້າ ສົນສິ່ງອິນຂຽນ
ພືອຂາວເຫຼືອງ ຕ່າງຄົນເມືອງນີ້
ເມື່ອນັ້ນຈອມທັບທ້າວ ພາທີຕ້ານຕອບ
ຂ້ານີ້ຫຼານຍ່າເຈົ້າ ນາຍເຖົ້າຢູ່ສອນ
ຂ້າຈັກຂານເປັນແກ້ວ ບຸດຕາເທົ້າຊື່ ຊິວັງແລ້ວ
ຕານແຕ່ພຣະບາດໃຊ້ ການເຈົ້າບໍ່ຂືນ ທ່ານເອີຍ
ເມື່ອນັ້ນເສນາຟັງວ ເມືອທູນພູວະນາດ
ອັນວ່າຫຼານຍ່າເຖົ້າ ນາແລ້ວຮອດເຮົາ ພຣະເອີຍ
ວ່າຈັກຂໍເພິ່ງເຈົ້າ ພື້ນບາດປາທາ
ທ້າວຈັກຂໍໄປຈາ ພຣະຍອດນາງແພງລ້ານ
ເມື່ອນັ້ນຈອມເມືອງເຈົ້າ ຕັດຄວາມແວນຊອບ
ບອກໃຫ້ທ້າວ ໄປຕ້ານຕໍ່ນາງ ຫັ້ນທ້ອນ
ຄັນວ່ານາງຈາຕ້ານ ດອມບານ້ອຍອ່ອນ
ເຮົາບໍ່ຂືນທ່ານແທ້ ຊິຍໍໃຫ້ປູກແປງ ທ່ານເອີຍ

ເມື່ອນັ້ນເສນາກົ້ມ ລາລົງແອບຂີບ

ເຖິງແຈ່ມເຈົ້າ ບາທ້າວໝື່ນເມືອງ

ເສນາຕ້ານ ເຕີນບານ້ອຍອ່ອນ

ບັດນີ້ພຣະບາດເຈົ້າ ຊາຍໂຊດຄຳງາມ

ວ່າໃຫ້ຈອມຫັນໄປ ກ່າວຖາມນາງນ້ອຍ

ຄັນວ່ານາງຈາຕ້ານ ດອມບາເປັນແນ່

ພຣະຈັກວາງບາດນ້ອຍ ຍໍໃຫ້ບໍ່ຂືນ ທ້າວເອີຍ

ພຣະຈັກວາງປຸກປ້ອງ ເຈົ້າອ່ອນແທນເມືອງ

ໃຫ້ເຈົ້າໄປຈານາງ ຢ່ານານດຽວນີ້

ແຕ່ນັ້ນທ້າວແຕ່ງເນື້ອ ທົງເຄື່ອງສັງວານ

ບໍຣະບອນເລີຍ ອອກໄປນີ້ຊ້າ

ພຣະກໍເຕີນໄຫຄ້ອງ ທັງກອງແກນປີ່

ໄປພ່ຳພ້ອມ ຟັງນ້ອຍປາກຈາ

ບາບຸນທ້າວ ເຖິງປາງນາງບາດ

ເຂົ້າຈິ່ມໃກ້ ຂັ້ນໄດແກ້ວເສກນິນ

ທ້າວກໍຖອດຈິດໄວ້ ຂັ້ນໄດນາງບາດ

ພຣະບາດເຈົ້າ ບຸນກວ້າງກ່າວຖາມ

ດຣາຂັ້ນໄດແກ້ວ ຈອມພຣະນາງຫງອທ່ອງຮຽນເອີຍ

ພີ້ຊວຂຶ້ນ ໄປໄດ້ດັ່ງລື ບໍ້ເດ?

ເມື່ອນັ້ນຂັ້ນໄດຕ້ານ ຂານບາບີນບອກ

ເຈົ້າພີ່ຂຶ້ນ ໄປຫ້ອນບໍ່ຂືນ ເຈົ້າເອີຍ
ຄ້ອນວ່າແລ້ວ ທ້າວຖອດຈິດຄືນ
ບາຄານພາຍ ຂຶ້ນໄປມີຊ້າ
ທ້າວກໍຫຼຽວເຫັນແກ້ວ ກະສັດຕີນາງນາດ
ເນົາບົ່ງເທົ້ງ ຕຽງແກ້ວຢູ່ສາງຽມ
ອັນວ່າສິນສີນ້ອຍ ງາມຍິ່ງປານທອງ
ບາຄານເຫັນ ຫຼູດໃຈພິລົ້ນ
ທ້າວກໍຮວາຍມິນແກ້ວ ຄາຖາອິນອ່ານ
ຖອດຈິດວາງໃສ່ພອນນາດນ້ອຍ ນາງແກ້ວເອື່ອຍອີງ.
ແຕ່ນັ້ນທ້າວກໍເດີນລ່ອງເຂົ້າ ໄປນັ່ງຖາມນາງ
ໄຂຫວານເອີຍ ຕື່ນາງແພງລ້ານ
ດັ່ງລືໂສມສເລົາສ້ອຍ ກະສັດຕີນາງນາດ ອີ່ຮຽມເອີຍ
ພີ່ຂໍເດີນລ່ອງເຂົ້າ ໄປໄດ້ດັ່ງລື ນີ້ເດ?
ແຕ່ນັ້ນພອນກ່າວຕ້ານ ຈາຕີ່ບາຄານ
ເຊີນຈອມຫົວ ຫ່ຽວເດີນມາພີ້
ກໍບໍ່ເປັນສັງແລ້ວ ເຊີນອີງເດີນລ່ອງ ມາທ້ອນ
ເຊີນເຈົ້າມານັ່ງເອົ້າ ຕຽງແກ້ວສ່ຳຮານ ທ່ານເອີຍ
ແຕ່ນັ້ນທ້າວຕອບຕ້ານ ຂານຕອບພອນນາງ
ພອນເອີຍຂ້ານີ້ເປັນຊາຍແທ້ ສັງຊິໄປເດີນລ່ອງ ໄດ້ເດ
ເຮົາຊິເຂົ້າແທບໃກ້ ຮຽງນ້ອງບໍ່ຄວນ ເຈົ້າເອີຍ

ບໍ່ໄດ້ເປັນນຶ່ງແທ້ ບໍ່ຄອນນັ່ງຮຽງສອງ
ບໍ່ທັນເປັນເນັ້ຽແພງ ກໍບໍ່ຄອນຮຽງຊ້ອນ
ແຕ່ນັ້ນໝອນກໍພາທີຕ້ານ ລົມບາຍັງແອ່ວ
ຄັນວ່າມາບໍ່ໄດ້ ເຊີນທ້າວນັ່ງລົງ ຫັ້ນທ້ອນ.
ທ້າວຈຶ່ງພາທີຕ້ານ ຈາໝອນກອຍກ່າວ
ຊຸ່ຄົນຊຸ່ທາກເຊື້ອໜໍ່ຟ້າ ຊີມານັ່ງກາງໂຮງ ນີ້໑
ຊາດທີ່ເປັນກະສັດຕາ ນັ່ງເຊົາອີງເທົ້າ
ໝອນກໍພາທີຕ້ານ ຂານບາຄໍາຊອບ
ໂອນໍທ້າວເອີຍຮຽມນີ້ຈົນໃຈແທ້ ທະລອນຈາຕ້ານປາກ
ກໍທາກຕີນບໍ່ໄດ້ ທະລອນເອື້ອນປາກດອມ ພີ່ເອີຍ.
ເມື່ອນັ້ນນາງກະສັດໃຫ້ ຄະນຶງໃຈດຸຫຼາກ
ໝອນນີ້ມາປາກເວົ້າ ເປັນແທ້ສິ່ງຄົນ ນີ້໑
ອັນວ່າຄາວຫຼັງນັ້ນເສນາທ້າວ ຊາວເມືອງທັງໄພ່
ມາກ່າວຕ້ານ ຍັງບໍ່ເວົ້າປາກເປັນ · ນັ້ນ໑
ຄ້ອນວ່ານາງຮະນຶກແລ້ວ ຍໍມືຊີ້ບອກ
ຝູງໝູ່ຄົນຊ່ວາງໃຊ້ ເຂົາຟ້າວແລ່ນມາ
ນາງກໍຈໍາເຂົາໃຫ້ ເອົາໝອນທັງເສື່ອ
ຂັນໝາກພ້ອມ ໄປຟ້າວຮີບປຸ
ນີທັງຂັນຫອງພ້ອມ ພຸ້ນໝາກຈີບ
ທັງນໍ້າເຕົ້າ ຕຽມພ້ອມຊຸ່ອັນ

ເຂົາກໍຍໍໄປຕັ້ງ　　ຮຽງພອນທຸກສິ່ງ
ເຂົາກໍແຕ່ງເຄື່ອງແລ້ວ　　ໜີພ້າວຫຼີກໄກ
　　ແຕ່ນັ້ນພອນກໍເຊີນບາທ້າວ　　ໂສມສເລົາຂຶ້ນນັ່ງ
ທ້າວບໍ່ຊ້າ　　ເລີຍຂຶ້ນເອື່ອຍອີງ
ມືກໍາເຕົ້າ　　ຄັນທີນ້ອນປາກ
ທຸກສິ່ງແລ້ວ　　ຍໍຄ້ຽວໝາກພູ
　　ເມື່ອນັ້ນບຸນຊູນ້ອຍ　　ນາງງາມຫຼີງລ່ຳ
ເຫັນຊູບທ້າວ　　ງາມຍ້ອຍດັ່ງຂຽນ
ນາງນາດນ້ອຍ　　ຕາເຫຼືອດຫຼີງແລ
ເຫັນບາຄານ　　ຄຶກຫອງດາດີ້ນ
ອັນນີ້ຈັກແມ່ນໂສມສເລົາທ້າວ　　ເມືອງໃດດົ້ນດຸ່ງ　　ມາບີ້
ກູກໍດູຊູບໜ້າ　　ເໝືອນທ້າວໜໍ່ເມືອງ　　ແທ້ບໍ
　　ເມື່ອວ່າກູຈັກກອຍກ່າວແກ້　　ຄໍາຄອນຕ້ານຕອບ　　ດັ່ງນັ້ນ
ອັນວ່າຊາດກ່ອນພຸ້ນ　　ກູໄດ້ແລ່ງເວນ　　ແທ້ແລ້ວ
ຄ້ອນວ່ານາງຮະນຶກແລ້ວ　　ມິດຢູ່ມິຕິງ
ບາຄານຖາມ　　ພຣະຍອດນາງແພງລ້ານ
ໂອນໍນາງເອີຍອັນວ່າຈຽນປາງແກ້ວ　　ເຮືອນເຮົາຍັງຄ່ອຍຢູ່　　ດີລື
ພີ່ຢາກມາຢູ່ຍັ້ງ　　ນໍານ້ອງເພິ່ງພາ　　ແດ່ທ້ອນ?
　　ເມື່ອນັ້ນນາງກະສັດໄຫ້　　ບໍ່ມີຈາຕ້ານຕອບ
ນາງກໍອິດຢູ່ຍັ້ງ　　ຄະນຶງຂໍ້ຊາດຫຼັງ

ນາງກໍປາກບໍ່ໄດ້ ສງັດຢູ່ມິດີງ
ພໍແຕ່ຕາຊອນຫຼີງ ລ່ຳດູບາຫ້າວ
ເມື່ອນັ້ນບາຄານຫ້າວ ຖາມໝອນນ້ອຍນາດ
ໝອນເອີຍເປັນສັງແທ້ ນາງງາມບໍ່ປາກຕໍ່ ຮຽນບໍ
ລືວ່າຂ້ອຍບໍ່ສົມເຕົ່າເຊື້ອ ນາງຫຼ້າບໍ່ປາກດອມ ນັ້ນລື
ລືວ່າຍົດບໍ່ສົມກະສັດໄທ້ ຈອມພຣະນາງໃຫ້ໝອນວ່ານາທ້ອນ
ລືວ່າຮູບຂ້ອຍຮ້າຍ ບໍ່ສົມນ້ອງຜູ້ງາມ ນັ້ນລືະ
ເມື່ອນັ້ນໝອນກໍພາທີຕ້ານ ຂານບາຄຳຊອບ
ພີ່ເອີຍນ້ອງນີ້ລອນທີ່ ເອົ້າຈ້ອຍໆນຳຫ້າວແຕ່ຄວາມ ນີ້ແລ້ວ
ສ່ອນວ່າໃຈນາດເຈົ້າ ເປັນສິ່ງສັນໃດ
ໃນໃຈນາງ ດັ່ງໃດມີຮູ້
ແຕ່ນັ້ນຫ້າວກໍພາທີຕ້ານ ຈາໝອນຖາມທີ່
ຖາມນັ້ນນີ້ ໝອນແກ້ວຕໍ່ໄປ
ໝອນເອີຍແຕ່ກ່ອນພຸ້ນເສນາພ້ອມ ຊາວເມືອງຝູງໄພ່
ເຂົາໄດ້ມາປາກຕ້ານ ໝອນເທົ້າປາກຕາງ ນັ້ນລືະ
ເມື່ອນັ້ນໝອນກໍພາທີຕ້ານ ດອມບາບົນບອກ
ຂ້ອຍບໍ່ມີປາກເອົ້າ ຈາຕ້ານຕໍ່ໃຍພີ່ເອີຍ
ເທື່ອນີ້ນ້ອງກໍເຫັນຮູບຫ້າວ ງາມຍິ່ງແອນສນິດ
ຂ້າກໍໄຂວາຈາ ຕໍ່ບາຕາງນ້ອຍ
ເມື່ອນັ້ນຫ້າວກໍພາທີຕ້ານ ຈາໝອນຄຳນ່ອນ

ພອນເອີຍເທື່ອນີ້ສຸດກິໃຈແລ້ວ　ຈາງນາງບໍ່ປາກຕໍ່　ເສັ່ງແລ້ວ
ແສນຊິເວົ້າຈ້ອຍໆ　ນາງນ້ອຍບໍ່ປາກດອມ　ພີ່ແລ້ວ
ເທື່ອນີ້ເຮົາຈັກພາທີຕ້ານ　ຈາກັນຫຼັ້ນຊື່ນ
ເວົ້າພາກພື້ນ　ຄຳຫຼັ້ນຕໍ່ກັນ　ພອນເອີຍ
ອັນວ່າຫາບຸນນີ້　ອັນໃດແອບປະເສີດ
ຂໍແກ່ເຈົ້າ　ພອນແກ້ວຮ່ຳເພີງ　ພີ່ທ້ອນ.
ເມື່ອນັ້ນພອນກໍພາທີຕ້ານ　ດອມບາອິງອາດ
ອັນວ່າຫາບຸນນີ້　ໃຈໃສແອບປະເສີດ
ແມ່ນວ່າທານເຂົ້າຖ້ອຍ　ເກືອກ້ອນກິຫາກບຸນ　ເຈົ້າເອີຍ
ຄັນບໍ່ມີສັງແຫ້　ຍໍມືນຳເພີ່ນ　ກໍດີດາຍ
ແຕ່ວ່າຍັງປະເສີດແທ້　ກະຖີນໃຫ້ທອດທານ
ເໝືອນດັ່ງໄດ້ອາບນ້ຳ　ອະນິນໃຫຍ່ອັງໃສ
ໃນຄີງຫາຍ　ໜີ່ນພອງເສັ່ງສັ່ງງ
ໃຫ້ຊູ້ໃຈໃສ່ແທ້　ເປັນບຸນອັນຍິ່ງ　ຈິງແລ້ວ
ແສນວ່າຫາບາບຮ້າຍ　ຫາຍສັ່ງງບໍ່ມີ　ພີ່ເອີຍ.
ເມື່ອນັ້ນພູມີຕ້ານ　ຖາມພອນຊ້ຳອີກ
ພອນເອີຍຜີວ່າຫາບາບນີ້　ອັນໃດບາບກວ່າ　ກັນນັ້ນເດ
ຂໍແກ່ເຈົ້າ　ພອນແກ້ວຈີ່ງຈາ　ແດ່ທ້ອນ?
ແຕ່ນັ້ນພອນກໍພາທີຕ້ານ　ດອມບາຊ້ຳກ່າວ
ເວົ້າຕໍ່ທ້າວ　ເປັນຂໍ້ຕໍ່ໄປ

24 / ຫົ
ຫ້າມຈຳໜ່າຍ

| | | |
|---|---|---|
| ອັນວ່າທຳບາບນີ້ | ຫຼາຍຢ່າງນາໆ | |
| ເວຣານີ | ຕ່າງກັນຈິງແທ້ | |
| ອັນວ່າບາບນຶ່ງນັ້ນບາຍຫົວເຖົ້າ | ຕານາຍພໍ່ແມ່ | |
| ກໍຫາກເປັນບາບແທ້ | ສເມີພຽງທໍ່ຄວາຍ | ເຈົ້າເອີຍ. |
| ເມື່ອນັ້ນບາບຸນທ້າວ | ພາທີຊ້ຳກ່າວ | |
| ຖາມໃຫ້ແຈ້ງ | ເມືອໜ້າຕໍ່ໄປ | |
| ອີວ່າໄປຊິງຊີ້ | ເຮືອນຊານຂອງເພິ່ນ | |
| ເອົາລູກເຕົ້າ | ເປັນຂ້ອຍແຫ່ງເຂົາ | ນັ້ນເດ |
| ມັນຈັກໄດ້ບາບແທ້ | ປະມານທີ່ປານໃດ | |
| ຕາມໃຈໝອນ | ຮ່ຳເພິງດູແຈ້ງ? | |
| ແຕ່ນັ້ນໝອນຊ້ຳພາທີຕ້ານ | ດອນບາຊ້ຳກ່າວ | |
| ກໍຫາກເປັນບາບແທ້ | ປະມານຊ້າງທີ່ກັນ | ເຈົ້າເອີຍ |
| ໃຜຜູ້ຄິດຢາກໄດ້ | ຂອງເພິ່ນມາໂຊ | |
| ຊິງເອົາຂອງ | ເພິ່ນມາດາຍດູ້ | |
| ພາຍລຸນໃຊ້ | ຂອງເຂົາພັນຊາດ | |
| ພັດເລົ່າກັບຕ່າວຕັ້ງ | ເປັນຂ້ອຍແຫ່ງເຂົາ | ເຈົ້າເອີຍ. |
| ເມື່ອນັ້ນທ້າວເລົ່າຕ້ານ | ຖາມໝອນຊ້ຳອີກ | |
| ໝອນເອີຍອັນວ່າຍິງຫຼີ້ນຊູ້ | ກັບຜົວບາບບໍ່ | |
| ຂໍແກ່ເຈົ້າ | ໝອນແກ້ວຮ່ຳເພີງ | ທັ້ນທ້ອນ |
| ແຕ່ນັ້ນໝອນກໍພາທີຕ້ານ | ຂານຄຳຊ້ຳກ່າວ | |

ອັນວ່າຜົວເມັງນີ້ ມັນມີຫຼາຍສ່ຳ
ກໍຫາກເປັນບາບແທ້ ມີໜ້ອຍບໍ່ຫຼາຍ ທ່ານເອີຍ
ສ່ຳນຶ່ງນັ້ນ ຍິງບໍ່ສງວນເອົາ
ມັນກໍຮວາຍຄາຖາ ໃສ່ເອົານາຊ້ອນ
ມັນສະກົດໃຫ້ ເປັນເມັງກິ້ງກ່ອນ
ຄັນວ່າສາມສີ່ນີ້ ເມັງປີ້ນຕ່າອຊັ້ງ
ມັນກໍໄປມີຊູ້ ຊົມສອງເສັ້ງຈາກ
ບາບບໍ່ມີດີໆ ກັນຊິໄດ້ແກ່ຜົວ ທ່ານເອີຍ
ສ່ຳນຶ່ງສອງຮາເອົ້າ ເປັນກັນໄດ້ແຕ່ງ ສັນນັ້ນ
ກໍຫາກເປັນບາບແທ້ ໜັກເກິ່ງພາຍສານ ທ່ານເອີຍ
ສ່ຳນຶ່ງເຫັນວ່າຕົວເປັນເຈົ້າ ທົງເມືອງສເວີຍອາດ
ໄປຊິງເອົາໄພ່ນ້ອຍ ມາຊ້ອນບາບຫຼາຍ ທ່ານເອີຍ
ແສນວ່າມັນຊິມີຄູ່ຊ້ອນ ຊົມສອງລັກເສບ ກໍດີແລ້ວ
ບາບບໍ່ມີດີໆ ກັນຊິໄດ້ແກ່ພຍາ ທ່ານເອີຍ
ເມື່ອນັ້ນທ້າວກ່າວຕ້ານ ຖາມໝອນຕື່ມອີກ
ໝອນເອີຍອັນວ່າຂ້າພໍ່ແມ່ນີ້ ໜັກເກິ່ງປານໃດ ທ່ານເອີຍ
ຕາມໃຈໝອນ ຮ່ຳເພິ່ງດູແຈ້ງ?
ເມື່ອນັ້ນໝອນກໍພາທີຕ້ານ ຂານບາຊ້ຳກ່າວ
ເອົ້າຕໍ່ທ້າວ ຄຳຍັງນທີ່ມີ
ອັນວ່າຂ້າພໍ່ແມ່ນັ້ນ ໜັກເກິ່ງດິນດານ ຢູ່ແລ້ວ

| | | |
|---|---|---|
| ຄັນວ່ານິຣະບາຕາຍ | ສ່ອນຈິມລົງພື້ນ | |
| ແຕ່ນັ້ນທ້າວກ່າວຕ້ານ | ຖາມທີ່ຍັງໝອນ | |
| (ດູຣາໝອນ | ບ່ອນອີງນາງນ້ອຍ) | |
| ຂ້ອຍຈະຂໍຖາມເຈົ້າ | ຫຼາຍອັນຕິດຕໍ່ | ໄປນັ້ນ |
| ພໍໃຫ້ໄດ້ | ຄໍາຮູ້ສືບໄປ | ເຈົ້າເອີຍ |
| ອັນວ່າຄົນຜູ້ມ້າງ | ເພສາສນາທັມ | |
| ມີເວນກັມ | ທີ່ໃດຂໍແຈ້ງ | |
| ເມື່ອນັ້ນໝອນກໍພາທີຕ້ານ | ດອນບາແກ້ໂຫດ | |
| ອັນວ່າຄອງໝູ່ນີ້ | ໝັກເກື່ງພູເຂົາ | ຢູ່ແລ້ວ |
| ແສນທໍາບຸນປານໃດ | ກໍບໍ່ມີໝາຍໄດ້ | |
| ຄັນວ່າຕາຍໄປແລ້ວ | ທັງສອງເປັນເຜດ | |
| ຜົວແບກແບ້ນ | ເມັງຊ້ໍາແບກຕີ | ທ່ານເອີຍ |
| ຄັນຫາກພົ້ນທີ່ນັ້ນແລ້ວ | ຊ້ໍາຕົກຈຸ່ມນາຣົກ | ທ່ານເອີຍ |
| ຟັງເຢີບຸດຕີແກ້ວ | ຫຼານເຫຼັ້ນຫຼາຍສ່ໍາ | ຟັງເຢີ |
| ກັບທັງສາວພີ່ນ້ອງ | ຟັງທ້ອນຊູ່ຄົນ | |
| ແມ່ນວ່າຜູ້ຊາຍເຖົ້າ | ບໍ່ມີເມັງຊ້ອນຄູ່ | ກໍດີ |
| ຜູ້ນີ້ເປັນບາບແທ້ | ທາງເສັ້ນຈຸ່ມອະບາຍ | ແທ້ແລ້ວ. |
| ເມື່ອນັ້ນທ້າວກ່າວຕ້ານ | ຊ້ໍາເລົ່າຍັງຖາມ | |
| ໝອນເອີຍຄັນວ່າຜົວຫຼິ້ນຊູ້ | ກັບເມັງບາບບໍ່ | |
| ຂໍແກ່ເຈົ້າ | ໝອນແກ້ວຮ່ໍາເພິງ | ຫັ້ນທ້ອນ? |

ແຕ່ນັ້ນພອນກິພາທີຕ້ານ    ດອນບາດແລງຕອບ

ບໍ່ຫ່ອນມີບາບແທ້    ຮີດແຕ່ບູຮານ    ທ່ານເອີຍ

ຊາດທີ່ເປັນຄົນຊາຍ    ກິຫາກມີຫຼາຍຊ້ອນ

ອັນໃຫ້ສົນກິໃຈແທ້    ສິບເມັງຊ້ອນເສື່ອ

ທຽມພ່າງຂ້າງ    ຂວາຊ້າຍກອດນອນ

ທັນນະດາຍິງແທ້    ຜິວດຽວເທົ້າຊື່

ທຽມແທບເນື້ອ    ຜິວເຖົ້າຜູ້ດຽວ    ພີ່ເອີຍ

ເມື່ອນັ້ນນາງກະສັດໄຫ້    ຟັງຄຳພອນກ່າວ

ນາງນາດນ້ອຍ    ກ່ຳກ່ຳປັ້ນຟາດພອນ

ມຶງນີ້ຈັ່ງໃຮຮ້າຍ    ພາໂລລົມຕ່າງ

ສັງເລົ່ານາກ່າວຊ້າ    ລົມຮ້າຍໃຫ້ແກ່ຍິງ    ນີ້ດໍ

ເມື່ອນັ້ນບາສີທ້າວ    ເຫັນໃຈນາງນາດ

ຄຶດຮະນຶກໄວ້    ນາງນ້ອຍຊິປາກນຳ    ບໍ່ຢ່າແລ້ວ

ເມື່ອນັ້ນທ້າວກິພາທີຕ້ານ    ຈາພອນຖາມອີກ

ພອນເອີຍຂ້ອຍກິສຸດໃຈແລ້ວ    ຊິລາເມືອເສັງກ່ອນ

ຂ້ອຍກິເວົ້າຈ້ອຍໆ    ນາງນ້ອຍບໍ່ປາກດອນ    ພີ່ແລ້ວ

ເມື່ອນັ້ນພອນກິພາທີຕ້ານ    ເຊີນບາຍັງກ່ອນ

ຄັນເຈົ້າເວົ້າບ່ອນຈ້ອຍ    ນາງນ້ອຍຊິປາກດອນ    ບໍ່ຢ່າແລ້ວ

ເມື່ອນັ້ນຈອມໃຈແກ້ວ    ບາບຸນຕ້ານຕອບ

ແສນຊິເວົ້າຈ້ອຍໆ    ນາງນ້ອຍບໍ່ປາກນຳ    ພີ່ນາ

ຊາດທີ່ເປັນກະສັດເຊື້ອ　　ເດີນເຖິງຖານຂ່າວ　　ກັບດາຍ
ນາບໍ່ເປືອງປີ່ນໜ້າ　　ຄອຍຍັ້ງນປາກດອນ　　ນີ້ເດ
　　ຂ້ອຍກໍອົດຢູ່ເຍື້ອນ　　ເປັນເຫບາອົກ　　ໜອນເອີຍ
ແສນຊິໄຂວາຈາ　　ຕໍ່ນາງບໍ່ມີເຂື້ອ
ແຕ່ນັ້ນໜອນກໍນ້ອມນ່ຽວທ້າວ　　ຍັ້ງຢູ່ພໍຄາວ　　ກ່ອນທ້ອນ
ຂ້ອຍຈັກໄຂວາຈາ　　ຕໍ່ປາງຕາງນ້ອຍ　　ດອກນາງ
ທ້າວຈຶ່ງອົດຢູ່ຍັ້ງ　　ຊານນັ່ງເລີຍຈາ
ໜອນເອີຍຕັນຫາຍິງຊາຍນີ້　　ຄົນໃດແຮງກວ່າ　　ກັບນັ້ນ
ຂໍແກ່ເຈົ້າ　　ໜອນແກ້ວຮ່ຳເພິງ　　ຕັ້ນທ້ອນ?
　　ແຕ່ນັ້ນໜອນເລົ່າຕ້ານ　　ຮັບພາກພອຍຂານ
(ຕາມຕຳນານ　　ທີ່ມີມາອ້າງ)
ອັນວ່າຕັນຫານີ້　　ແນວຍິງແຮງຍິ່ງ　　ຈິງແລ້ວ
ແສນວ່າຮືວຢູ່ຊ້ອນ　　ຫຽນຂ້າງກໍບໍ່ພໍ　　ທ່ານເອີຍ
ອັນວ່າເປັນຊາຍນີ້　　ສົງສານກໍຍັງຜ່ອນ
ແສນວ່າໄປຂອບຟ້າ　　ກໍຍັງໂອ້ຮອດເມັ້ງ　　ແທ້ແລ້ວ.
　　ເມື່ອນັ້ນນາງກະສັດໄທ້　　ຟັງຄຳໜອນປາກ
ນາງກໍຄິດຄຽດໃຫ້　　ໜອນເວົ້າສຽດດູ
ນາງກໍຍໍເອົາຕົ້າ　　ພູສານາຟາດ
ບາບ່າວທ້າວ　　ຕາສົ້ງລ່ຳດູ
　　(ທ້າວກໍຄິດຣະນຶກໄອ້　　ຈິງເຈຕນາໝາຍ

ອັນວ່າຄວາມປະສົງກູ　　ສ່ວນຊິສົມມະໂນແນ້ງ
ເຫດທີ່ຈອມແພງນ້ອງ　　ໃນຫອງຫິນທະເວດ　ຈິງແລ້ວ)
ຜິວ່າເວົ້າຖືກຂໍ້　　ນາງນ້ອຍຊິປາກນຳ　ແນ່ແລ້ວ.
　　ເມື່ອນັ້ນທ້າວກໍພາທີຕ້ານ　　ຖາມໝອນຊ້ຳອີກ
ໝອນເອີຍເຂົາວ່າຄົນເມືອງນີ້　　ບໍ່ຕ້ານປາກນຳຊາຍ　ມີບໍ່
ມັນຫາກມີຄຳລື　　ຮອດເມືອງເຮົາພຸ້ນ?
ເມື່ອນັ້ນໝອນກໍດັບປາກປີ້ງ　　ກົວນາດນາງຕີ
ກໍບໍ່ພາທີຂານ　　ຕອບບາບຸນກວ້າງ
ທ້າວກໍນ່ຳໆຕ້ານ　　ກະສັນໂສກດົນຖາມ
ເປັນລືແກ້ວ　　ໝອນເອີຍບໍ່ປາກຕໍ່　ຮຽນນີ້
ແຕ່ກ່ອນຍັງກ່າວແກ້　　ນຳໄດ້ຊູຄວາມ　ນັ້ນເດ
　　ທີນີ້ເຈົ້າກໍດັບປາກໄວ້　　ບໍ່ໄຂເງື່ອນຄຳຈາ
ເຈົ້າຫາກກົວຄົນໃດ　　ບອກມາພີ່ຊູ?
ເມື່ອນັ້ນໝອນກໍພາທີຕ້ານ　　ຈາບາບົນບອກ
ເວົ້າຕໍ່ເຈົ້າ　　ເປັນຂໍ້ບ່ອນບັງ
ພີ່ເອີຍເທື່ອນີ້　　ມັນກໍຈົນໃຈຂ້າ　ຕີເຫຼັກຕໍ່ໜ້າຊ່າງ
ຂ້ອຍກໍເວົ້າບໍ່ໄດ້　　ກົວຍ້ານທ່ານຕີ　ພີ່ເອີຍ
　　ແຕ່ນັ້ນທ້າວກ່າວແກ້　　ຄວາມດີຕ້ານຕອບ
ໝອນເອີຍອັນວ່າເປັນຍິງນີ້　　ບໍ່ຕ້ານປາກນຳຊາຍ　ດັ່ງນີ້
ອັນວ່າເມືອງເຮົາພຸ້ນ　　ກໍຍັງມີຄົນປີ່ງ

ມັນຈັກເປັນເຫດດ້ວຍໃດແທ້　　ພອນແກ້ວຮ່ຳເພິງ　　ຫັ້ນທ້ອນ.<br>
　　ແຕ່ນັ້ນພອນກໍພາທີຕ້ານ　　ນຳບາແກ້ເຫດ<br>
ອັນວ່າຍິງຜູ້ນັ້ນ　　ກັນແຕ່ພາຍຫຼັງ　　ທ່ານເອີຍ<br>
ຍັງມີພຣະສົງເຈົ້າ　　ເດີນທາງມາຈອບ<br>
ເຈົ້າກໍຖາມຂ່າວຂໍ້　　ທາງບ້ານອອກໄປ<br>
　　ອັນວ່າຍິງຜູ້ນັ້ນ　　ບໍ່ມີບອກຫົນທາງ<br>
(ມັນກໍທຳເປັນເໝືອນ　　ບໍ່ເຫັນສົງເຈົ້າ<br>
ມັນຫາກທຳກັນໄວ້　　ເປັນການອັນຊື່)<br>
ກັນທີ່ນັ້ນ　　ນຳໃຊ້ຊາດລຸນ　　ທ່ານເອີຍ.<br>
　　ກໍບໍ່ຄິດຢາກເວົ້າ　　ນຳຊາດຄົນຊາຍ　　ແທ້ແລ້ວ<br>
ບັດນີ້ເຄືອງໃຈເຈົ້າ　　ກະສັດຕີນາງນາດ<br>
ຟັງພາກຖ້ອຍ　　ພອນເວົ້າສຽດທູ<br>
ນາງກໍຍໍຍັງນີ້ວ　　ດຶງພອນຊັກຊື້ນ<br>
ບາບ່າວທ້າວ　　ເຫັນແລ້ວຊື່ນຊົມ<br>
ເມື່ອນັ້ນທ້າວກໍແຂງໃຈຕ້ານ　　ຖາມນາງຫາເຫດ<br>
ໂອນໍນາງເອີຍເປັນສັງເຈົ້າ　　ຊົມຊູເສົ້າຫ່ວມເຫງົາ　　ພີ່ເດ<br>
ເຈົ້າສັງບໍ່ປາກເວົ້າ　　ຄະນຶງຊູ້ແຕ່ແນນ　　ພີ່ລະ<br>
ບັດນີ້ພີ່ກໍຍືນອາຍໜ້າ　　ເມັ້ງແພງຂອງເພິ່ນ　　ນາງເອີຍ<br>
ດຽວວ່າສາວຈ້ອຍໆ　　ທາງຂ້ອຍກໍຈິ່ງມາ　　ພີ່ນາ<br>
　　ເທື່ອນີ້ພີ່ຊິລາເມືອຫ້ອງ　　ເມືອງຫຼັງເສັ່ງກ່ອນ　　ນາງເອີຍ

ເຈົ້າຈິ່ງດັບປາກປີ້ງ ຄອຍເວົ້າຕໍ່ຜົວ ຫັ້ນທ້ອນ.

ແຕ່ນັ້ນທ້າວກໍຍົວຣະຍາດຍ້າຍ ລົງຈາກປາງທອງ

ໝອນກໍພາຫິຍາຍ ບ່ຽວບາເຊີນຍັ້ງ

ຂໍໃຫ້ພຣະບາດເຈົ້າ ຍັ້ງຢູ່ພໍຄາວ ກ່ອນທ້ອນ

ຊາດທີ່ແນວຣາຊາ ບໍ່ທ່ອນຍອມໃຈນ້ອຍ

ເມື່ອນັ້ນທ້າວຕ່າວໜ້າ ຄືນນັ່ງສນາພຽງ

ພາທີຈາ ຕໍ່ໝອນຖແລງຊ້ຳ

ອັນວ່າຄຳສນຸກນີ້ ອັນໃດຍິ່ງກວ່າ ກັນນັ້ນ

ຂໍແກ່ເຈົ້າ ໝອນແກ້ວຮ່ຳເພີງ ຫັ້ນທ້ອນ?

ແຕ່ນັ້ນໝອນກ່າວແກ້ ບາຄານຕ້ານຕອບ

ອັນວ່າຄວາມສນຸກນີ້ ຍັງມີຫຼາຍສິ່ງ ຈິງແລ້ວ

ຕົ້ນວ່າໄປກິນເຫຼົ້າ ເມົາມົວຟ້ອນແອ່ນ

ປາກເລົ່າຮ້ອງ ທັງອ່ານໜັງສື

ຕາຊອນຫຼຽວ ຢອກໄຍສາວຫຼິ້ນ

ອັນນີ້ກໍຫາກດູສນຸກແທ້ ແຕ່ຍັງໄປທັນເຖິງ ທ່ານເອີຍ.

ອັນນຶ່ງພາສາວເຊົ້າ ອະຣັນຍາໃນປ່າ

ຄັນວ່າເຫັນພຸ່ມໄມ້ ກໍຈຳຊູ້ນັ່ງລົງ

ມືເລົ່າຮ້ອຍດອກໄມ້ ທາງປາກຈາກັນ

ພ່ອງກໍມືບາຍນົມ ກອດຄໍດົມແກ້ມ

ອັນນີ້ດູສນຸກແທ້ ແຕ່ຫາກໄປທັນເຖິງ ທ່ານເອີຍ

ຄັນວ່າໄດ້ເຂົ້າຫ້ອງ ຮຽງຮ່ວມພຣະໄນຕີ
ສອງພໍກັນ ຮ່ວມສະນອນໃນມຸ້ງ
(ມືຊາຍຊວ້ານ ຄໍນາງນ້າວຈູບ
ມືອ່ອນນ້ອງ ນຽນໄລ້ໄຫຼ່ຊາຍ)
ອັນນີ້ສນຸກຍິ່ງລົ້ນ ໃນໂລກເມືອງຄົນ ພີ່ເອີຍ
ຄັນວ່າໃຜບໍ່ທັນເຄີຍເຫັນ ກໍສ່ອນກັນມີແທ້
ຄັນວ່າຕາຍໄປແລ້ວ ວິນອຽນບໍ່ໄດ້ເກີດ
ໃຜຜູ້ໄດ້ຈອບແລ້ວ ກັນຮ້າຍບໍ່ມີ ທ່ານເອີຍ.
ເມື່ອນັ້ນນາງກະສັດໄທ້ ຟັງຄຳໝອນກ່າວ
ທ້າວກໍເປື້ອງປິ່ນໜ້າ ຈາຕ້ານຕໍ່ນາງ
ໂອນໍນາງເອີຍພີ່ຢາກເຈາະເອົາແກ້ວ ຫົວໃຈນ້ອງມາເບິ່ງ ດູເດ
ພີ່ຢາກຈົກອອກໄດ້ ມາຖົ້ມໃສ່ໄຟ ດອກນາ
ລືວ່າມີສັງຫ້າມ ຫົວໃຈນາງຕັນຢູ່ ຄຳເອີຍ
ສັງມາຢາກບໍ່ໄດ້ ລືລົ້ນບໍ່ມີ ນັ້ນລື
ລືວ່າຍົດອີ່ພີ່ນັ້ນບໍ່ສົນກະສັດໄທ້ ນາງແພງໃຫ້ນ້ອງວ່າ ມາຫ້ອນ
ພີ່ຢາກຂໍຍົດນ້ອງນາຕື່ນຕັ້ງ ຍັງຊິເຍື້ອນປາກດອນ ບໍ່ເດ?
ພີ່ກໍຫຼີງໂສນໜ້າ ກະບອນນາງຄືຊິປາກ ເປັນນາ
ນາວ່າເປັນສະເພີ້ ຫູຊົ້ໝອກໝາ ນີ້ເດ
ໂອນໍນາງເອີຍພີ່ກໍມາເສັ້ງດາຍໂສນສເລົາສ້ອຍ ນາງງງານຄືຊິປາກເປັນນາ
ພີ່ກໍເວົ້າຈ້ອຍໆ ກໍປານເອີ້ນໃສ່ດີ ແລນໍ

ເມື່ອນັ້ນນາງກໍອິດຢູ່ເອື້ອນ　　ເປັນເວທນາຈິດ　　ແລນໍ
ພໍແຕ່ໄຂວາຈາ　　ຖ່ອງຄຳບໍ່ພໍຮ້າຍຸ
ໂອນໍເສັງແຮງພີ່ຫາກເດີນດຽວຂ້ອນ　　ພະຄີຣີດັ້ນຍາກ　　ນາງເອີຍ
ພີ່ກໍມາກ່າວຕ້ານ　　ສັງບໍ່ເວົ້າປາກນຳ　　ນີ້ເດ
ຊຸ່ຄືນຊຸ່ຫາກເປັນກະສັດແທ້　　ປະສົງເດີນມາຮອດ ,　　ນາງເອີຍ
ສັງບໍ່ເບື້ອງບື່ນໜ້າ　　ຫົວແຍ້ມປາກດອນ　　ພີ່ເດ?
ເມື່ອນັ້ນນາງກະສັດໄທ້　　ແຂງໃຈເລີຍບໍ່ປາກ
ຫ້າວກໍເວົ້າຈ້ອຍໆ　　ນາງນ້ອຍກໍບໍ່ອື　　ຕັ້ນແລ້ວ
ມີແຕ່ພອນຈາຕ້ານ　　ຂານບາແກ້ຕອບ
ນາງກໍຊັບແຊບໃຫ້　　ພອນເທົ້າປາກຕາງ
ບັດນີ້ພິດທີ່ຄວາມດີແລ້ວ　　ບາຄານຄຸມຄຽດ
ພິດທີ່ບັ້ງນ້ຳອ້ອຍ　　ພາກນາວສັ້ນຊິປ່ອຍໄປ　　ພີ່ແລ້ວ.
ແຕ່ນັ້ນນາງກະສັດໄທ້　　ຟັງຄຳພອນກ່າວ
ນາງກໍຍືນແນ່ນແນ້ງ　　ກໍໃຈນ້ອຍເລົ່າຫົວ
ນາງນາດນ້ອຍ　　ມືລູບຊົມພອນ
ຕາຊອບຫຼຽວ　　ເຫຼືອດແລດູຫ້າວ
ນາງກໍອິດເອົາໄວ້　　ໃນໃຈແຄ້ນຄັ່ງ
ເມື່ອຊິປາກຕໍ່ຫ້າວ　　ກໍຍັງຊ້ຳເລົ່າອາຍ
ແຕ່ນັ້ນບາຄານຫ້າວ　　ເຫັນໃຈນາງນາດ
ຄັນວ່າກູຫາກເວົ້າຄືກຂີ້　　ນາງນ້ອຍຊິປາກນຳ　　ບໍ່ຢ່າແລ້ວ

24/VII
ห้ามจำหน่าย

ເມື່ອນັ້ນທ້າວກໍກອຍປະສົງນ້ອມ    ໂລມນາງຄຳຊອບ
ໂອນໍນາງ ເອີຍພີ່ກໍຂໍສຸກຍ້ອນ    ສິນພານຍັ້ງຂນ່ອມ    ນາງ ເອີຍ
ພີ່ນີ້ເໝືອນດັ່ງຄົນກ່ຳພ້າ    ຂໍເຂົ້າ ເພິ່ງບຸນ    ແດ່ທ້ອນ
ຂໍໃຫ້ນ້ອງປົງຈິດຕັ້ງ    ດອນຮຽມພົສນ່ອຍ    ແພງ ເອີຍ
ພໍແຕ່ໄຂປາກຕ້ານ    ດອນອ້າຍຖ່ອງຄວາມ    ແດ່ແນ.
ແຕ່ນັ້ນນາງກະສັດໄຫ້    ຍິນກະສັນອິກສັ່ນ
ຄຶດຢາກເວົ້າຕໍ່ອ້າຍ    ແພງລ້ານກໍເລົ່າອາຍ
ນາງຄຶດພໍ້    ປາງ ເກົ່າພາຍຫຼັງ
ນຶງຄານຂຳ    ຂື່ນໃຈແຂງໄວ້
ເມື່ອນັ້ນທ້າວກໍພາທີຕ້ານ    ຈາໝອນແລ້ວສັ່ງ
ໝອນເອີຍຂ້ອຍກໍສຸດໃຈແລ້ວ    ແສນຊືອອຍອ້ອຍອື່ນ    ກໍດີແລ້ວ
ນາງນາດໄຫ້    ບໍ່ມີເຍື້ອນປາກດອນ    ແລນາ
ບັດນີ້ພີ່ຈັກລາ ເມືອຫ້ອງ    ເມືອງຫຼັງ ເສັງກ່ອນ    ໝອນເອີຍ
ຂໍແກ່ເຈົ້າ    ໝອນແກ້ວສ່ຳຣານ    ແດ່ທ້ອນ
ແຕ່ນັ້ນໝອນກໍຜາຍຄຳຕ້ານ    ໂດຍບາຄຳຊອບ
ຄ່ອຍເມືອດີ ເຍີເຈົ້າໜໍ່ຟ້າ    ເມືອງ ໃຫຍ່ກາສີ    ຂ້ອຍເອີຍ
ເທື່ອນີ້ສຸດກໍໃຈທ້າວ    ປະສົງ ເດີນດັ້ນຍາກ    ແພງ ເອີຍ
ທ້າວກໍມາປາກຕ້ານ    ນາງນ້ອຍກໍບໍ່ຈາ    ພີ່ເອີຍ
ຂ້ອຍກໍເວົ້າຕໍ່ທ້າວ    ຕາງນາດນາງແພງ
ກໍຫາກຮຸນແຮງ ເຮົາ    ຊູ່ຄົນແຄວນແລ້ວ

ເທື່ອນີ້ເຊີນທ້າວຄືນເມືອຫ້ອງ　　ເມືອງຫຼັງບ້ານເກົ່າ
ນາງໜຸ່ນເໜົ້າ　　ເມືອງພຸ້ນກໍຫາກມີ　　ພີ່ເອີຍ.
　　ຄ້ອນວ່າໝອນກ່າວແລ້ວ　　ທ້າວສັ່ງນາງແພງ
ຄ່ອຍຢູ່ດີເຢີເຈົ້າຢູ່ກັບຍາມແລ້ງ　　ເດືອນສາມບໍ່ມີປາກ　　ຮຽມເອີຍ
ພີ່ກໍມານັ່ງເວົ້າ　　ພໍໃຫ້ປອດແຂວ　　ພີ່ແລ້ວ.
　　ຢຽວວ່າຄົນດີແທ້　　ປະລົງມາຖາມຂ່າວ　　ແພງເອີຍ
ຍີວ່າຄົນສະເພີ້　　ບໍ່ມີດັ້ນດຸ່ງເດິງ　　ດອກນາ
ທ້າວກ່າວແລ້ວ　　ລຸກຈາກຕຽງທອງ
ອັນວ່ານາງງາມຫຼຽວ　　ຍີ່ດູນາທ້າວ
ແຕ່ນັ້ນນາງກໍຢຽວມືຢີ້　　ດຶງໝອນຊັກຊັ່ນ
ນາງກໍຊັບແຊບໃຕ້　　ໝອນເຂີນຕ່າວຄືນ.
　　ແຕ່ນັ້ນໝອນກໍແຈນໆເອີ້ຍ　　ເຊີນນາຄືນກ່ອນ
ຂໍມາຊັກເອື່ອງພື້ນ　　ນິທານເວົ້າສູ່ຟັງ　　ແດ່ທ້ອນ
ອັນວ່າຄາວຫຼັງພຸ້ນ　　ຈາກັບເຊິງອື່ນ
ບໍ່ໄດ້ຊັກເອື່ອງພື້ນ　　ນິທານໃຫ້ສູ່ຟັງ
ບັດນີ້ຂາກໍຂໍໃຫ້ທ້າວ　　ເຊີນຕ່າວຄືນມາ　　ກ່ອນທ້ອນ
ຂ້າຢາກຟັງນິທານ　　ເອື່ອງດີນຳທ້າວ.
　　ເມື່ອນັ້ນພູມີເຈົ້າ　　ດຽງຄຳຕ້ານຕອບ
ຂ້ອຍກໍຄືນບໍ່ໄດ້　　ອາຍໜ້າເພີ່ນຊິຫຽນ　　ເຈົ້າເອີຍ
ໄດ້ວ່າຍ້າຍທີ່ແລ້ວ　　ຊິເຂີ້ນຕ່າວໄປສັງ　　ນີ້ດ

ຮຽນບໍ່ມີໃຈຄິດ ຊິຫາກຄືນໄປຕ້ານ
ນັ້ນທ່າກໝາຫູນ້ອງ ນາງແພງຊິຊັງຕື່ມ ບໍ່ຮູ້
ແສນຊິເອົ້າຈ້ອຍໆ ນາງນ້ອຍກໍບໍ່ຈາ ແລນາ
ຊາດທີ່ໃຈຊິກູນານີ້ ຫຼຽວເຫັນກໍຫົວຕໍ່ ກັນນາ
ໄປນັ້ງໃກ້ ປະສົງເອົ້າຕໍ່ກັນ ນ້ອງເອີຍ
ເມື່ອນັ້ນພອນກໍພາທີຕ້ານ ຂານປາຄຳຊອບ
ຂ້າຂໍເຊີນປາດຫ້າວ ລົງນັ້ງສນາພຽງ ກ່ອນທ້ອນ
ຢ່າໄດ້ຢືນກົວອາຍ ພຣະຍອດນາງຄິນໃບ້
ເອົາຈິ່ງມາຈາຕ້ານ ນຳກັນໃຫ້ນັ້ນຊື່ນ
ຊັກເອື່ອງພື້ນ ນິທານຫຼັ້ນປາກຫົວ ພີ່ເອີຍ
ລາງເຫື່ອເປັນບ່ອນນັ້ນ ນາງນາດຊິເຈັບໃຈ ບໍ່ຮູ້
ນາງຈັກໄຂວາຈາ ຕໍ່ປາໄທຫ້າວ
ຊາດທີ່ເປັນກະສັດນີ້ ຢ່າໄດ້ຍອມໃຈງ່າຍ
ຄັນວ່າເອົ້າຖືກຂໍ້ ນາງຮູ້ຊິປາກນຳ ດອກນາ
ຄັນວ່ານາງບໍ່ໄຂປາກຕ້ານ ນຳປາດປາບູນ ດັ້ງນັ້ນ
ຂ້າຜູ້ເປັນໝອນໝູ ນອບພຣະອອນຫາຍຜ້ຽນ
ຢ່າໄດ້ເອົາຮຽນໄວ້ ນາງອີງລຳປາກ
ຂໍໃຫ້ພຣະບາດເຈົ້າ ເອົາຖັ້ນໃສ່ໄພ ຫັ້ນທ້ອນ.
ເມື່ອນັ້ນທ້າວອວ່າຍໜ້າ ຄືນນັ້ງຕຽງທອງ
ອັນວ່ານົງນາງຄານ ຊື່ນຊົມຫົວແຍ້ມ

ແຕ່ນັ້ນພອນກໍພາທີຕ້ານ    ຈຳບາເວົ້າເອື້ອງ
(ໃຫ້ຫ້າວເວົ້າພາກພື້ນ    ນິທານເຄົ້າເກົ່າຫຼັງ)
ຂ້າກໍຄຶດຢາກຮູ້    ນິທານແຕ່ບູຮານ    ພີ່ເອີຍ
ຂ້າຈັກເອົາໃຈຟັງ    ຊູອັນຈຳໄວ້
ແຕ່ນັ້ນບາຄານຕ້ານ    ນຳພອນຄຳຊອບ
ຄັນວ່າເຈົ້າຢາກຟັງທ່ຽງແທ້    ພຣະອອນອ້າຍກໍບໍ່ຂືນ    ແທ້ແລ້ວ
ຟັງເຢີໂສມສເລົາສ້ອຍ    ພອນນາງອີງພ່າງ    ອີຣຽມເອີຍ
ບັດນີ້ພີ່ຊິໄຂເອື້ອງຂໍ້    ນິທານພື້ນສູ່ຟັງ    ກ່ອນແລ້ວ.
ບັດນີ້ຍັງມີນົກຈອກນ້ອຍ    ເປັນຄູ່ຜົວເມັຽ    ນາງເອີຍ
ສອງກໍແປງຮວງຮັງ    ຢູ່ນຳຮັດສີເຈົ້າ
ອັນວ່າຜົວເມັຽເຜົ້າ    ໃນຮັງພັກໄຊ່
ຕົວຜົວບິນລ່ອງຜ້າຍ    ໄປແທ້ທ່ຽວຫາ
ໄດ້ເຫຽື່ອແລ້ວ    ມາສົ່ງເມັຽກິນ
ເຖິງວັນລູນ    ທ່ຽວບິນໄປແທ້
ປົກກະຕິຜ້າຍ    ດົງດອນຫາເຫຽື່ອ
ຄັນວ່າໄດ້ເຫຽື່ອແລ້ວ    ບິນຟ້າວຮີບຄືນ
ເອົາມາໃຫ້    ເມັຽກິນທັງລູກ
ມື້ສິບມື້    ມັນນັ້ນທ່ຽວໄປ
ບັດນີ້ສັກກຸນານ້ອຍ    ໃນຮັງເບາະອອກ
ເມັຽກໍຕຸ້ມລູກນ້ອຍ    ຮັກສາຢູ່ໃນຮັງ

| | |
|---|---|
| ຕົວພົວບິນໄປຫາ | ເທິ່ງຂນາບຸນລັງງ |
| ລາງວັນໄດ້ | ຄືນມາດ້ອຍງ່າຍ |
| ລາງມື້ນັ້ນ | ເຖິງເທົ້າຄ່ຳຈອນ |
| ພໍເມື່ອຫຼາຍວັນແລ້ວ | ບິນໄປຫາຍາກ |
| ເມັ້ງກໍຕູ້ມລູກນ້ອຍ | ຄອຍຖ້າຄ່ຳດາຍ |
| ອັນວ່າຕົວພົວຜ້າຍ | ບິນໄປເຕາະທອບ |
| ກໍຈຶ່ງໄປຈອບພົ້ | ຍັງດອກບົວບານ |
| ບິນເຂົ້າໃນໄກສອນ | ຊອກກິນແມງໄມ້ |
| ພໍເມື່ອຕາວັນຂຶ້ນ | ພາງາຍແດດແກ່ ນາບັ້ນ |
| ບົວກໍຫຸບທີ່ໄວ້ | ພົວບັ້ນກໍເລົ່າຄາ |
| ນົກກໍຄາໃນຫັ້ນ | ບົວບານຫຸ້ມທີ່ |
| ພົວກໍອອກບໍ່ໄດ້ | ເຖິງເທົ້າຄ່ຳຈອນ |
| ແຕ່ນັ້ນນາງນາດນ້ອຍ | ຍິນສະເດືອກການຫຼັງ |
| ນາງຄານຄິດ | ຢູ່ຫິນທອງແຄ້ນ |
| ຫົວປີ້ຫາກແມ່ນເປັນພົວແກ້ວ | ກູມາແຕ່ຊາດກ່ອນ ຈິງແລ້ວ |
| ອັນວ່ານາງນາດນ້ອຍ | ເຫັນຫົວປອດກະສັນ |
| ນາງກໍອິດໃຈຕັ້ງ | ຟັງດູຖ້ອນຖີ່ |
| ພູຂະນາດຫົວ | ຈາຕ້ານຕີ່ໄປ |
| ຟັງເຢີໂສມສເລົານ້ອຍ | ໝອນນາງຮຽງພ່າງ ອີຮຽນເອີຍ |
| ລາງເທື່ອເປັນບ່ອນບັ້ນ | ໝອນເຈົ້າຊິຢາກຫົວ ບໍ່ຮູ້ |

ແຕ່ນັ້ນຫຼາຍວັນແລ້ວ    ຣະດູເຖິງເດືອນສີ່    ມາແລ້ວ
ໄຟເລົ່າໄໝ້ປ່າໄມ້    ມາແທ້ຄື່ນເຄງ
ອັນວ່ານົກຈອກນ້ອຍ    ທັງສອງຢ້ານສັ່ນ
ໄຟເລົ່າໄໝ້ປ່າໄມ້    ມາໃກ້ຈື່ມຈົບ
ສອງກໍແຈບໆເວົ້າ    ຈາກັນນີ່ນຳ
ເມື່ອຈັກບິນອອກແທ້    ອິດູແກ້ວລູກຕົນ
ສອງກໍສັດຈະເວົ້າ    ຂັນຕາຍນຳລູກ
ໃຜຢ່າອອກກ່ອນແທ້    ຕາຍໝື່ພ່ຳກັນ
ເມັ່ງກໍສັດຈະຕັ້ງ    ດອມຜົວເປັນແມ່
ນາງກໍນ້ອມນຶກໄວ້    ມະໂນນ້ອຍໃສ່ໃຈ
ຄັນວ່າຜົວຫາກກົວໄຟໄໝ້    ບິນໜີເສັ່ງກ່ອນ
ປະລູກນ້ອຍ    ທັງຂ້ອຍຢູ່ຮັງ    ດັ່ງນີ້
ຊາດໜ້ານັ້ນ    ຂໍເກີດເປັນຄົນ
ໃຜຊູ້ເປັນຄົນຊາຍ    ກໍບໍ່ມີຈາຕ້ານ
ຄ້ອນວ່າສອງຈາແລ້ວ    ພາກັນລີ້ຢູ່
ໄຟເລົ່າໄໝ້    ມາໃກ້ຈື່ມຈົບ
ແຕ່ນັ້ນຕົວເມັ້ງຢ້ານ    ບິນໜີເສັ້ງກ່ອນ
ກໍຈື່ງໃລລູກນ້ອຍ    ທັງຂ້ອຍບໍ່ຄອຍ    ເຈົ້າເອີຍ
ອັນວ່າໄຟລາມໄໝ້    ສອງເຂືອພໍ່ລູກ
ຕາຍນອດເມັ້ງນ    ໄຟໄໝ້ເຜົ່າຮັງ    ແທ້ແລ້ວ.

| | | |
|---|---|---|
| ເມື່ອນັ້ນນາງກະສັດໄທ້ | ເຈັບໃຈປານຖືກຫອກ | |
| ນາງກໍອົດບໍ່ໄດ້ | ຈາຕ້ານຕອບບາ | |
| ຄຳນີ້ເຈັບກໍໃຈແທ້ | ບາຄານຢ່າໄດ້ກ່າວ | ມາທ້ອນ |
| ຜົວຫາກໜີກ່ອນແທ້ | ຊິມາປີ້ນໃສ່ເນັ້ງ | ນີ້ເດ |
| ເຈົ້າກໍໄລຕົວຂ້ອຍ | ບຸດຕາທັງລູກ | |
| ໄຟເລົ່າໄໝ້ | ຕາຍມັຽນຢູ່ຮັ້ງ | ນັ້ນເດ |
| ສັງເລົ່າມາຈາເອົ້າ | ຄຳບໍ່ມີຫາໃສ່ | ເປັນເດ |
| ມາບໍ່ອາຍແກ່ເທພດາຢູ່ຟ້າ | ຄອຍຢັ້ຽມພີ່ດູ | ນັ້ນເດ? |
| ເມື່ອນັ້ນໄທກອງຄັອງ | ໄດ້ຍິນສຽງນາງປາກ | |
| ເຂົາກໍຕີພາດຄັອງ | ທັງຊ້ຳຕ່ອຍກອງ | |
| ອັນວ່າຣາຊາເຈົ້າ | ບີຕາຊ້ອຍຊື່ນ | |
| ຝູງໝູ່ເສເນດທ້າວ | ເຂົາໂຫ້ລັ່ງມາ | |
| ກັບທັງຍິງຊາຍພ້ອມ | ຊາວເມືອງນ້ອຍໃຫຽ່ | |
| ເຂົາກໍໄຫຼລັ່ງເຂົ້າ | ມາຄຸ້ມພຣະຍອດນາງ | |
| ຝູງສາວນ້ອຍ | ຊອນຝາຢັຽມປ່ອງ | |
| ເຂົາກໍເຫັນຮູບທ້າວ | ງາມຍ້ອຍດັ່ງຂຽນ | |
| ເຂົາກໍຊີງກັນເຂົ້າ | ບັງຝາຢັຽມເບິ່ງ | |
| ເປັນທີ່ອົກເມື່ອຍມ້າງ | ເຫັນທ້າວປອດກະສັນ | |
| ໂອນໍເຈົ້າຜູ້ແກ້ວລອດຟ້າ | ລົງເກີດໃນມະນຸດ | ອີຣຽມເອີຍ |
| ຍາມເມື່ອຢູ່ນຳຍ່າຈຳສອນ | ແຫ່ງເອົາບໍ່ມີຮູ້ | |

ໂອນີ້ບຸນບໍ່ເຄີຍຊົມແກ້ວ　　ມະຫາບົນລູກປະເສີດ
ບາດຊິໄດ້ຢູ່ຊ້ອນ　　ນາງແກ້ວລົດແມ່ນບາ　　ແລນໍ.
　　ແຕ່ນັ້ນນາງກໍລົງແທ່ນແກ້ວ　　ມາສູ່ບາຄານ
ນາງກໍຍໍມືແປະ　　ໃສ່ຫົວຄຸນອມໄທ້
ຊິດໆນ້ຳ　　ຕາຫຼັ່ງໄຫຼຕົກ
ຍົມມະນາຄິດ　　ຢູ່ທົນທອງແຄ້ນ
ແຕ່ນັ້ນຂຸນຫຼວງຂື້ນ　　ເມືອຫູນເຫອະອາດ
ພອະບາດເຈົ້າ　　ຈາຕ້ານຊື່ນຊົມ
　　ພອະກໍຂອາງໆຕ້ານ　　ເສນາກອຍກ່າວ
ບັດນີ້ເຮົາຈັກອຸບພິເສກເຈົ້າ　　ນ້ອຍໜໍ່ແທນເມືອງ
ກໍຫາກບຸນມີເຖິງ　　ຄາດມາເຄີຍໄດ້
ເທື່ອນີ້ຫຼາບນາຍເຖົ້າ　　ຈາໍສອນຄົນຍາກ
ນາປາກເອົ້າ　　ນາງນ້ອຍປາກດອນ　　ແທ້ແລ້ວ
　　ຫາກແມ່ນບຸນບານ້ອຍ　　ທັງນາງເຄີຍຮອດ　　ກັນແລ້ວ
ສອງຫາກຄາດແຕ່ແຄນ　　ແນນຫາກຄາດແຕ່ຟ້າ　　ມາໃຫ້ຮອດກັນ
ອັນວ່າເສນາທ້າວ　　ຊາວເມືອງພ້ອມໄພ່
ມາປາກຕ້ານ　　ນາງນ້ອຍກໍບໍ່ຈາ
　　ບຸນບໍ່ເຄີຍຄາດໄດ້　　ນາງບໍ່ປາກດອນໃຜ
ເທື່ອນີ້ທ້າວຕ່າງບ້ານ　　ເດີນປະເທດທາງໄກ
ນາງງາມເຫັນ　　ປາກດອນບາທ້າວ

ເທື່ອນີ້ເຮົາຈຶ່ງເດີນກັນຫ້າງ    ປັນນາການຕົກແຕ່ງ
ຫາອີກໄດ້    ວັນນີ້ແມ່ນຍາມ    ເຈົ້າເອີຍ
ຄ້ອນວ່າແລ້ວ    ເຂົາແຕ່ງພາຂວັນ
ນາໆນີ    ເຄື່ອງດີປຸນຕັ້ງ
ຣາຊາໃຫ້    ໄຫໃນຕັ້ງແຕ່ງ
ເຂົາຟັ່ງຟ້າວ    ດາຫ້າງແຕ່ງແປງ    ແຫ້ແລ້ວ.

## ບັ້ນພຍາເມືອງສີລາອຸບພິເສກທ້າວອໍຣະຈິດກັບນາງຈັນທະຈອນໃຫ້ເປັນຜົວ ເມັຽກັນ.

ບັດນີ້ຈັກກ່າວເຖິງທ້າວ    ທັງນາງນ້ອຍອ່ອນ    ກ່ອນແລ້ວ
ນາງກໍລົງແທ່ນແກ້ວ    ມາໃຫ້ຕີ່ຜົວ
ພີ່ເອີຍນ້ອງບໍ່ຮູ້ວ່າທ້າວ    ຈອມມິ່ງສາມີໂກ
ສາຍໃຈເອີຍ    ກໍເພື່ອເວນພາເອັ້ນ
ພຣະພີ່ເຈົ້າ    ໄປເກີດເມືອງໃດ
ກໍຈຶ່ງເດີນຄີຣີ    ປ່າໄພພົງກວ້າງ
(ຕົນດຽວແທ້    ໄກເມືອງຫາໝ່ອນ)
ອັນວ່າພຣະບາດເຈົ້າ    ມາພີ້ຮອດດີ    ແດ່ລໍ?
ແຕ່ນັ້ນບາບຸນທ້າວ    ຂານຄຳນາງນາດ
ກໍຫາກຍັງຄ່ອຍສ້າງ    ສິນຊ້ອຍສ່ຳຣານ    ນ້ອງເອີຍ

ຍາມເມື່ອສອງເຮົານັງນ ໄຜເອົາດັບຊາດ ປາງນັ້ນ
ອັນວ່າພີ່ແລະນ້ອງ ໄກຂ້າງຕ່າງກັນ
ພີ່ກໍໄປເກີດກ້ຳ ນຳພໍ່ພຍາເມືອງ
ຍູສະບາຍສຸກ ສ່ຳຣານມີຮ້ອນ
ທົງເມືອງລ້າງ ຕອນພົບພ້ອມໄພ່
ແມ່ນວ່າພີ່ແມ່ອ້າຍ ກໍຍັງໝັ້ນຢູ່ດີ ນ້ອງເອີຍ.
ຂອບເມື່ອເຂົາກ່າວເລື່ອງ ນາງນາດໄປເຖິງ
ພີ່ຄະນຶງຈອມແພງ ກໍຈຶ່ງເດີນມາພີ້
ພອຍເລົ່າບຸນມີແທ້ ເທວະດາຊູຊ່ອຍ
ກໍຈຶ່ງມາຮອດນ້ອງ ຈອມສ້ອຍມິ່ງເມືອງ ພີ່ແລ້ວ
ເຈົ້າຄ່ອຍຢູ່ດີລືໂສມສເລົາສ້ອຍ ພຍານາງຍອດຍິ່ງ ຮຽມເອີຍ
ອ້າຍກໍທົນບໍ່ໄດ້ ດຽວດັ້ນດຸ່ງມາ ພີ່ແລ້ວ
ກໍຈຶ່ງມາພົບພີ້ ເມືອງໃຫຽ່ສີລາ ນີ້ແລ້ວ
ພີ່ກໍເນົາຢູ່ເຮືອນນຳຍ່າຈຳສອນ ນອກເມືອງພາຍໃຕ້
ເພີ່ນກໍລືຊາໃທ້ ຈອມພຣະນາງບໍ່ປາກຕໍ່ ໃຜນັ້ນ
ຂ້ອຍກໍວານຍ່າເຖົ້າ ມາເອົ້າການທູນ
ພຣະກໍໂອງການໃຫ້ ຈຳສອນຄຳຊອບ
ບອກໃຫ້ຂ້ອຍ ມາຕ້ານຕໍ່ນາງ ພີ່ແລ້ວ
ບັດນີ້ສຸດໃຈແລ້ວ ນາງແພງກໍຈຶ່ງປາກ
ພີ່ຫາກຊັກເລື່ອງພື້ນ ນາງແກ້ວກໍຈຶ່ງຈາ ພີ່ນາ.

ເມື່ອນັ້ນນາງກະລັດໃຫ້ ພາທີຕ້ານຕອບ
ນ້ອງບໍ່ຮູ້ ກັບຊາດເປັນຄົນ
ຍາມເມື່ອສອງເປັນນົກ ຊາດຫຼັງກໍຍັງຮູ້
ຜີວ່ານ້ອງຫາກຮູ້ແຕ່ເຄົ້າ ພຸອະນາດສາມິໂກ
ນ້ອງບໍ່ມີຂີນຂັດ ຊິຄ່ອຍຈາດອນທ້າວ
ເມື່ອນັ້ນນາງກໍຍໍມືໄຫວ້ ຖາມບາທາຊື່
ພຣະບາດເຈົ້າ ບຸນກວ້າງຊື່ໃດ ພີ່ເອີຍ?
ແຕ່ນັ້ນບາບຸນທ້າວ ໄຂກອນບອກຊື່
ພີ່ນັ້ນຊື່ວ່າວໍຣະຈິດທ້າວ ບຸດຕາພຍາຣາດ
ພີ່ກໍທົງຢູ່ສ້າງ ເມືອງໃຫຍ່ກາສີ
ກໍບໍ່ມີເທວີ ຢູ່ເຜືອແຜງຂ້າງ
ພີ່ກໍໄດ້ຍິນຂ່າວນ້ອງ ເມືອງໃຫຍ່ສີລາ
ພີ່ຈຶ່ງເດີນໄພນາ ເພື່ອປະສົງຫານ້ອງ
ໂອນໍເຈົ້າຜູ້ຮືອເຫຼືອງເຫຼື້ອມ ພີລາບານຍາມຄ່ຳ ຮຽມເອີຍ
ບັດນີ້ພີ່ກໍມາຮອດນ້ອງ ໂດຍໄດ້ດັ່ງປະສົງ ພີ່ແລ້ວ.
ບັດນີ້ຈັກກ່າວເຖິງຣາຊາເຈົ້າ ເຕີນເຂົາຕົກແຕ່ງ
ຈັດແຈ່ງທ້າງ ກະບວນຕັ້ງແຕ່ງແປງ
ບໍຣະບອນແລ້ວ ເສນາທັງໄພ່
ເຂົາກໍມາພ່ຳພ້ອມ ໂຮມສັງງາບໍ່ຫຼີ
ຝູງໝູ່ຊາຍໂຖງພ້ອມ ສາວຮາມນ້ອຍໝຸ່ນ

ເຂົາກໍໄຫຼລົ່ງເຂົ້າ

ເຂົາຢາກເຫັນຮູບທ້າວ

ເຂົາກໍໄຫຼລົ່ງລົ້ນ

ຍາບໆເຂົ້າ

ເຂົາກໍພາກັນນອງ

ເມື່ອນັ້ນຣາຊາເຈົ້າ

ເອົາແມ່ລ້ຽງ

ແຕ່ນັ້ນຂຸນກໍໂດຍຄຳເຈົ້າ

ເຖິງຍ່າເຈົ້າ

ບັດນີ້ຣາຊາໃຫ້

ເພິ່ນຊິເອົາຫຼານນາຍ

ເມື່ອນັ້ນໄອຍະກາເຖົ້າ

ຕົກແຕ່ງເນື້ອ

ພູສາຜ້າ

ນຽມປິ່ນແປ້ງ

ບໍຣະບອນແລ້ວ

ຂຸນກໍພາຍ່າເຈົ້າ

ເມື່ອນັ້ນຈອມເມືອງເຈົ້າ

ສາວຮາມຕົກແຕ່ງເນື້ອ

ເຂົາກໍທົມໆພ້ອມ

ເຕັມຄຸ່ມຂອງນາງ

ບາບຸນຫຼານຍ່າ

ມາລ່ຽງຊູພາຍ

ເມືອງໃຫຍ່ສີລາ

ລົ່ງມາປານນໍ້າ

ຈັດຂຸນໄປບອກ

ນາຍເຖົ້າດ່ອນມາ ທ່ຽວເທີ້ນ

ລາລົງໂດຍຮີບ

ນາຍເຖົ້າບອກກອນ

ທັນນາຍໂດຍຮີບ

ບົ່ງເມືອງເປັນເຈົ້າ

ດີໃຈຊ້ອຍຊື່ນ

ທົງສັ້ນເຄື່ອງດີ

ສີນອນບົງບ່ຽງ

ທາເນື້ອລູບຄີງ

ລົງເຮືອນຍ້າຍຍ່າງ

ເດີນເຂົ້າສູ່ວັງ

ເດີນສາວໃຊ້ຊ່ວາງ

ດາທ່າງແຕ່ງດີ

ເດີນກັບຕົກແຕ່ງ

ຫົງເຄື່ອງຍ້ອງ　　ງາມຣະຫ້ອຍຊູ່ນາງ
ພຣະບາດເຈົ້າ　　ສະເດັດສູ່ຫໍຂວາງ
ຫົງພາຂວັນ　　ແຫ່ໄປປຸນຕັ້ງ
ຣາຊາໃຫ້　　ຝູງສາວໃຊ້ຊວ່າງ
ນໍາແຫ່ເຈົ້າ　　ນາງນ້ອຍຢ່ານານ
　　ເຂົາກໍຍາບໆຍ້າຍ　　ຝູງໝູ່ນາງສນົມ
ຫັງເຫວີ　　ແມ່ເມືອງຈູງນ້ອຍ
ອັນວ່າໄອຍະກາເຖົ້າ　　ຈູງບາໄປກ່ອນ
ກໍຫາກຄັກຄ່ຽນຄົ້ວ　　ສອງນ້ອຍແປກັນ
ອໍຣະນ່ອຍເນື້ອ　　ເໝືອນດັ່ງຫຽນສີງ
ສອງສີງາມ　　ແປກັບປານແຕ້ນ.
　　ເມື່ອນັ້ນສອງສີເຂົ້າ　　ຮຽງພາພ້ອມພ່ຳ
ຊຸມແວດລ້ອມ　　ພາເຂົ້າສູ່ຂວັນ
ອັນວ່າສະສ່ອນໜ້າ　　ຫຽມພີ່ໂສມງາມ
ເໝືອນດັ່ງເທພາຍາຍ　　ຫຼີ່ລົງມາຕັ້ງ
ເມື່ອນັ້ນພາມນາເຖົ້າ　　ຖວາຍພອນໂດຍອ່ອນ
ສູດຈ້ອຍໆ　　ພາມເຖົ້າສູ່ຂວັນ
ເຊີນຂວັນເຈົ້າ　　ກຸມອີນ້ອຍໜີ່　　ຮຽມເອີຍ
ໃຫ້ເຈົ້າມາພ່ຳພ້ອມ　　ໂຮມເຂົ້າສູ່ຄີງ　　ແດ່ເນີ
ບັດນີ້ສຸພະມັງຄະລະພ້ອມ　　ໄຊໂຍແຂງຂີ່ນ

ໃຫ້ເຈົ້າສຸກຢູ່ສ້າງ　　ສິນຊ້ອຍຜາບມານ　　ແດ່ທ້ອນ
　　ຢ່າໄດ້ມີເຂັນຕ້ອງ　　ອິນຕາຍບ້າງບຽດ
ຂໍໃຫ້ສອງໝື່ໄຫ້　　ແທນສ້າງສືບເມືອງ
ຂໍໃຫ້ບຸນເຮືອງໄດ້　　ແສນເມືອງມາຊ່ອຍ
ທຸກແຫ່ງໃຕ້ລຸ່ມຟ້າ　　ມານ້ອມສ່ອຍສິນ　　ເຈົ້າເອີຍ
　　ຄ້ອມວ່າບໍຣະບອນແລ້ວ　　ພານມາຖອຍອອກ
ພຣະພີ່ເຈົ້າ　　ຍໍຟ້າຍຊູກແຂນ
ມາເຢີຂວັນນາງນ້ອຍ　　ບຸດຕີລູກອ່ອນ　　ກູເອີຍ
ກັບທັງຂວັນແຈ່ມເຈົ້າ　　ບາທ້າວໝື່ເມືອງ
　　ເຈົ້າຈິ່ງມາເປັນແກ້ວ　　ບຸດຕາຕົນລູກ　　ເອົາເທີ້ນ
ໃຫ້ລູກແທນສືບສ້າງ　　ເມືອງກວ້າງສ່ຳຣານ　　ພີ່ເນີ
ບັດນີ້ອາວະໂຫແລ້ວ　　ປີຕາຖອຍອອກ
ແມ່ແຈ່ມເຈົ້າ　　ຍໍຟ້າຍຊູກແຂນ
　　ບໍຣະບອນແລ້ວ　　ມານດາຖອຍອອກ
ພຣະແມ່ລ້ຽງ　　ຍໍຟ້າຍຊູກແຂນ
ມາເຢີຂວັນບາທ້າວ　　ບຸດຕາຕົນລູກ　　ຂ້ອຍເອີຍ
ກັບທັງຂວັນໝື່ໄຫ້　　ນາງແກ້ວມິ່ງເມືອງ
　　ບັດນີ້ບຸດຕີນ້ອຍ　　ທັງສອງເປັນຄູ່　　ກັນແລ້ວ
ໃຫ້ເຈົ້າຍູຢູ່ສ້າງ　　ເປັນເຈົ້ານັ່ງປອງ　　ແມ່ເນີ
ອັນວ່າອາການຮ້ອນ　　ອັນໃດຢ່າໄດ້ບຽດ

ຂໍໃຫ້ສອງແຈ່ມເຈົ້າ ຢືນໝັ້ນໝື່ນປີ ແດ່ທ້ອນ.
ບັດນີ້ບໍຣະບວນແລ້ວ ພາຂວັນຖອຍອອກ
ພີ່ກໍວາງນອບບ້ານ ເມືອງໃຫ້ແກ່ບາ
ແຕ່ນັ້ນເສນາທ້າວ ທັງຫຼາຍລາເລີກ
ຝູງໄພ່ນ້ອຍ ເມືອບ້ານຊູ່ຄົນ
ອັນວ່າມາດາແກ້ວ ບິດາຕົນພີ່
ສອງກໍລາລູກແກ້ວ ເມືອຫ້ອງແຫ່ງຕົນ
ຄ່ອຍຢູ່ດີເຢີສອງແຈ່ມເຈົ້າ ນ້ອຍໜີ່ສາຍໃຈ ພີ່ເອີຍ
ຈົ່ງຄ່ອຍຢູສະບາຍສຸກ ສໍ່າຣານຫາຍຮ້ອນ
ສອງຄ່ອຍພຽນທົງສ້າງ ທີປາງຕູ້ນໄພ່
ພີ່ແມ່ຫວັງເພິ່ງເຈົ້າ ສອງຫຼ້າລູກລຸນ ແຫ້ແລ້ວ.
ຄ້ອນສັ່ງແລ້ວ ພຣະພີ່ລາລົງ
ທັງມາດາ ສັ່ງລາສອງນ້ອຍ
ເຈົ້າກໍຄືນເມືອຫ້ອງ ສະຖານທອງຂອງເກົ່າ
ຍັງທີ່ສອງແຈ່ມເຈົ້າ ທົງສ້າງຢູ່ປາງ
ນາງກໍຮັກຊູບທ້າວ ຫຽນແຫບບາບຸນ
ບາບຸນຮັກ ຍອດນາງປານແກ້ວ
ສອງສີເຈົ້າ ເນົາປາງຍາສາດ
ສາວສນິມຊວ່າງໃຊ້ ຮຽງຂ້າງແກວ່ງວີ
ເຖິງເມື່ອຍາມຄ່ໍາຄ້ອຍ ອ້ຽງອ່ອຍລົງແລງ

ສຸຣິໂຍທັນ          ລັບເຂົາສເນນກວ້າງ
ຝູງໝູ່ໄຫຄົວຫ້າງ          ພາພານຖອ່າຍບາດ
ລູກພຣະເຈົ້າລຸ່ມຟ້າ          ພຽງໜ້າພ່າງເພົາ
ການສເດັດສຽງ          ພາແລງລາເລີກ
ນ້ຳດອກໄມ້          ຈັບທະຄູ່ສ່ອຍມື
ນາງນາດນ້ອຍ          ຍໍຍື່ນຂັນສລາ
ບາຄານເທີອຍ          ພາກພູເລີຍແລ້ວ
ດີແກ່ຈັບທະຈອນຕັ້ງ          ໃສແສງເຮືອງເຮື່ອ
ຍາມຈູດໄຕ້          ເຮືອງຫ້ອງຮຸ່ງປາງ
ເສເນດນ້ອມ          ນັບເສບສອານໄລ
ຄວານໆສຽງ          ເສບບັນສອງເຈົ້າ .
ແຕ່ນັ້ນພູມີຫ້າວ          ພານາງເຂົ້າບ່ອນ
ສອງກ່ອນກິ້ງ          ເພືອຟັ້ນພ່າງພຣະໄນ
ຍູເລີດລ້ຳ          ໃນແຫ່ງຄວາມສຸກ
ສເນຫາຮັກ          ກ່ອນກັນອຳອີ້ງ
ນູເນືອເນື້ອ          ຊົມກັນກອງເສື່ອ
ທ້າວແນບນ້ອງ          ປະໂລມອ້ອຍອື່ນອອຍ
ສນຸກເລີດລ້ຳ          ປຸນປຽບເມືອງສວັນ
ຫາຍກາງວົນ          ບໍ່ມີໂພຍຮ້ອນ
ພໍເມື່ອເດິກໆຂ້ອນ          ອໍຣະຊອນໄກ້ທ່ຽງ          ນາບັ້ນ

| | |
|---|---|
| ທ້າວກອດນ້ອງ | ໃນຫ້ອງນິດທາ |
| ສອງກໍຫຼັບໂຊດຊ້ອຍ | ໃນທີ່ບັນທົມ |
| ຫົວຮຽງໝອນ | ທີ່ມແຄງພີຕູ້ມ |
| ຂອບເນື່ອວິຄາງຄ້າຍ | ກອງຄິວຄ້ອມຕື່ນ |
| ສອງພີ່ນ້ອງ | ພຽງໜ້າຕື່ນມາ |
| ແລ້ວສ່ວຍໜ້າ | ລ້າງອາບໂສງສີ |
| ຄັນທີຫອມ | ໂສດສົງເລີຍແລ້ວ |
| ພູມີທ້າວ | ທັງນາງຜັດປ່ຽນ |
| ຫວາຍນຸ່ງຜ້າ | ຍືນເລັ້ມຄ່າເມືອງ |
| ນູເນືອດເນື້ອ | ສະເດັດສູ່ເກີບຂວາງ |
| ຝູງໝູ່ນາງໃນຫູນ | ນອບສລາສອງເຈົ້າ |
| ກໍຫາກປົກກະຕິແທ້ | ທັງສອງອິນປູກ |
| ສນຸກຢູ່ລ້າງ | ເມືອງກວ້າງສ່ຳຮານ |
| ເຈົ້າກໍບໍ່ເດືອດຮ້ອນ | ສັພສິ່ງການໃດ |
| ໂພຍພັຍສັງ | ກໍບໍ່ມີມາຕ້ອງ |
| ຢູທ່າງທັງທັມສ້າງ | ສີລາຕູ້ມໄພ່ |
| ອຳນາດກວ້າງ | ແດນທົ້ວຂ່າວຂາມ |
| ທຸກຂອບນີ້ | ເທຫອດທານສິນ |
| ຄອງເນືອເມືອງນິຣະພານ | ນຸ່ງເນີນໃຈແຈ້ງ |
| ທັສຣາຊະທັມເຈົ້າ | ສິບປະການເກື້ອກໍ່ |

ຫູກຫ່ອຍໃຕ້ລຸ່ມຟ້າ　　ຍໍຍ້ອງຍອດຄຸນ　　ແທ້ແລ້ວ.

## ບັ້ນທ້າວອໍຣະຈິດພານາງຈັນທະຈອນເມືອຢາມພໍ່ແມ່

ຄັນວ່າຫຼາຍຂວບເຂົ້າ　　ປີເລົ່າແຄມເຖິງ　　ມານັ້ນ
ບາຄານຄິດ　　ຫຸ່ງຫາເມືອງບ້ານ
ເຈົ້າກໍຄະນຶງເຖິງໃຫ້　　ສອງພຣະອົງພໍ່ແມ່
ຢງວ່າປິຕຸເຣດເຈົ້າ　　ຫີວໃຫ້ຫຸ່ງຫາ　　ບໍ່ຮູ້
ທ້າວຈິ່ງເມືອລາໃຫວ້　　ສອງພຣະອົງຕົນປະເສີດ
ຂໍບ່ງອນ້ອມ　　ຢາມຫ້ອງແຫ່ງຫຼັງ
ອັນນຶ່ງທ້າວກໍຂໍອ່ອນນ້ອຍ　　ນາງນາດເດີນດອນ
ເມືອວັນຫາ　　ພໍ່ແມ່ຕົນພາຍພຸ້ນ
ເພື່ອໃຫ້ສອງເຫັນໜ້າ　　ກັລຍານາງນາດ
ຮູ້ຂ່າວຂີ້　　ດີຮ້າຍຈິ່ງມາ
ແຕ່ນັ້ນຣາຊາເຈົ້າ　　ສີລາຕົນອາດ
ກັບທັງພຣະແມ່ເຈົ້າ　　ຟັງທ້າວຊື່ນໃຈ
ສອງກໍອະນຸຍາດໃຫ້　　ນິອາດຂີນຂັດ
ໂມທະນາດອນ　　ລູກແພງສອງເຈົ້າ
ຈິ່ງຄ່ອຍເມືອງໆທ້ອນ　　ສາຍສມອນຕົນລູກ　　ກູເອີຍ
ເຈົ້າກໍພັດພາກບ້ານ　　ມາພີ້ພໍ່ນານ　　ພໍ່ແລ້ວ

ຢງອວ່າສອງດອງພຸ້ນ ຄອງຫາເຊົ້າຄ່ຳ ບໍ່ຮູ້
ເຈົ້າຈຶ່ງເອົານ້ອງແກ້ວ ເມືອພ້ອມເພື່ອນໃຈ ພໍ່ຫ້ອນ
ຊອບເນື້ອເນືອຮອດແລ້ວ ຫູນບາດປາຫາ
ຄວາມສະບາຍສຸກ ສ່ຳອານເຫັນແຈ້ງ
ກໍຈຶ່ງລາສອງໄທ້ ຄືນມາເຮອຮີບ
ພໍ່ແມ່ຫວັງເພິ່ງເຈົ້າ ສອງຫຼ້າລູກແພງ ແທ້ແລ້ວ.
ອັນນຶ່ງຢູ່ຊ້າງມ້າ ບ່າວໄພ່ໂຍທາ ກໍດີ
ທັງຂອງຄວນ ເຄື່ອງປຸນປອງຕ້ອນ
ສອງຫາກມີປະສົງແທ້ ເອົາໄປນ້ອຍມາກ
ຕາມແຕ່ເຈົ້າເລືອກເລັ້ນ ເອົາທ້ອນພໍ່ບໍ່ຂືນ ລູກເອີຍ.
ຄ້ອມວ່າແລ້ວ ທ້າວຂາບລາລົງ
ເຖິງນາງແພງ ກ່າວຈາດອມນ້ອງ
ບັດນີ້ພີ່ກໍເມືອຫູນໄຫວ້ ສອງພຣະອົງພໍ່ແມ່
ຂໍນ້ອງເມືອເພື່ອນອ້າຍ ຢາມແກ້ວພໍ່ແມ່ຮຽມ
ເພິ່ນກໍອະນຸຍາດໃຫ້ ມີອາດຂືນຂັດ
ນ້ອງຈັກເມືອນຳອວນ ກໍຈຶ່ງເອວພະລັນຟ້າວ
ນ້ອງຈຶ່ງເດົາດາຕ້າງ ກາຍາເຍື້ອນແຕ່ງ
ຂອງທີ່ທົງນຸ່ງເອ້ ເອົາພ້ອມແຕ່ງດາ ພີ່ຫ້ອນ
ທ້າວກ່າວແລ້ວ ນາງນາດຍໍມື
ໂມທະນາດອມ ພີ່ແພງອົງອ້າຍ

ນາງກໍເອວພະລັນຟ້າວ　　ໄວວາອີບແຕ່ງ

ຈັດແຈ່ງຫ້າງ　　ເອົາແຫ້ເຄື່ອງຄອນ.

　　ແຕ່ນັ້ນທ້າວກ່າວຕ້ານ　　ເຕີນທ່ານເສນາ

ບອກໃຫ້ເດົາດາຕົກ　　ແຕ່ງການໄວຟ້າວ

ເອົາຈັກເມືອຍາມຫ້ອງ　　ກາສີເມືອງເກົ່າ　　ພາຍພຸ້ນ

ເອົານຶ່ງເທົ້າງາ　　ເມືອພ້ອມທ່ຽວຍາມ

　　ທ່ານຈຶ່ງຈັດຊ້າງມ້າ　　ພົນໄພ່ໂຍທາ

ເອົາແຕ່ສົມຄວນພໍ　　ແຫ່ຫາງເດີນດ້າວ

ຝູງຄອນເຝົ້າ　　ເມືອງເອົາໃຫ້ຢູ່

ຜູ້ທີ່ຄອນດ່ຽງດັ້ນ　　ເຕີນໃຫ້ແຕ່ງການ

　　ອັນນຶ່ງເງິນຄຳແກ້ວ　　ປັນນາການຂອງຝາກ

ເມືອຂາບໄຫວ້　　ພາຍພຸ້ນແຕ່ງເອົາ

ອັນນຶ່ງສາວບ່າວພ້ອມ　　ເອົາທີ່ໂສພາ

ໂຣຄາຜອມ　　ຈ່ອຍໂຊຄອນເອັ້ນ

ເຫດທີ່ຫາງໄກລ້ຳ　　ເດີນແຄວນລຳບາກ

ເຈັບປ່ວຍໄຂ້　　ຮານຊ້າເຄີກຫາງ

　　ອັນວ່າຄົນຂາຫ້ານ　　ປູມພອງທ້ອງໃຄ່　　ຍາເອົາ

ທົດກາກເຮື້ອນ　　ມະເຮງຮ້າຍຮ່າງແມວ

ສົບແຫວ່ງໂຫວ້　　ຕາເຫຼືອກເບືອນບິດ　　ຍາເອົາ

ຜົນຫຽງອງແດງ　　ກູດງໍທັງລ້ານ　　ຍາເອົາ

ห้ามจำหน่าย

| | | |
|---|---|---|
| ຄິງສູງພົ້ນ | ສັກກະຈັງເຕັ້ງຕ່ຳ | ຍາ ເອີ |
| ຮູບຮ່າງຮ້າຍ | ບໍ່ລືມຜູ້ເຖົ່າຄົນ | ຍາ ເອີ |
| ຝູງໃດອອດຫຼອດເບື້ອ | ສິນສິ່ງນາງຊຸນ | |
| ຜິວຂາວເຫຼືອງ | ນຸ່ຍແດງດູກັງງ | |
| ຜົມດຳເຫຼື້ອມ | ສີເທົາທັ້ນມະຊາດ | |
| ຄີ້ວກົ່ງຄ້ອມ | ໃບໜ້າຜ່ອງໃສ | ຈິງ ເອີ |
| ກໍຈິ່ງສົມແທ່ເຈົ້າ | ເນືອສູ່ເນືອງຕົນ | |
| ຊາວນະຄອນເຫັນ | ຊື່ນຊົມຍໍຍ້ອງ | |
| ຢ່າໃຫ້ເສັ້ງສະກຸນໜ້າ | ນາງງາມຜູ້ປະເສີດ | ເອີເຫີ້ນ |
| ຕາງໃຫ້ຄົນຊ່າຍ້ອງ | ລືເທົ້າທົ່ວແດນ | |
| ຜັດວ່າມື້ອື່ນເຊົ້າ | ຍາມຊອບກອງງາຍ | |
| ເອີຈັກຍໍພົນຫຼວງ | ລ່ອງເມືອຢາມຫ້ອງ | |
| ທ່ານຈິ່ງເອວພະລັນແທ້ | ກະທຳການກູ້ຣາດ | |
| ຢ່າໃຫ້ເຂີນຂາດຂ້ອນ | ຂນັບຕັ້ງແຕ່ງການ | ຫ່ຽວເຫີ້ນ. |
| ແຕ່ນັ້ນຂຸນຫຼວງຜູ້ | ພະລັນໂດຍດອນອາດ | |
| ຄ້ອນຟາດຄ້ອງ | ສຽງທ້າວປ່າວພົນ | |
| ຂຸນກໍເຕີນບອກໃຫ້ | ທຸກໝູ່ນາຍບັກການ | |
| ເສີນໆສຽງ | ປ່າວກັນດາທ້າງ | |
| ຈັດພົນຊ້າງ | ພົນລວາມ້ານິ່ງ | |
| ພົນຮົດຕັ້ງ | ຕຽມພ້ອມຊູ່ພາຍ | |

ສາວບ່າວພ້ອມ　　　ຈັດພວກປັນຝູງ

ຊຸມໃຜເປັນຊຸມມັນ　　　ຕ່າງກະບວນການຍ້ອງ

ເຂົາກໍໂມທະນາຊ້ອງ　　　ສາທຸການຊີຊ່ວາ

ຄິດຢາກເຫັນຕ່າງບ້ານ　　　ຍິນພ້ອມຊື່ນບານ

ອັນວ່າຄົນຫານຫ້າວ　　　ທັງເມືອງພີເພີກ

ຫວັງຈັກໄດ້ດຸ່ງດັ້ນ　　　ເດີນຍ້າຍຕ່າງເມືອງ　ແທ້ແລ້ວ.

ຄ້ອນວ່າຊຸມແຕ່ງແລ້ວ　　　ທຸກທີ່ບໍຣະບອນ

ກໍຈຶ່ງທູນບາຄານ　　　ບອກການກອຍແຈ້ງ

ບຸນມີຫ້າວ　　　ທັງນາງຊ້ອຍຊື່ນ

ແມ້ງບຶ່ງແສງຕ່ຳຄ້ອຍ　　　ແລງເຂົ້າຂອບເຂົາ

ສອງແຈ່ມເຈົ້າ　　　ເນຫເນົ້ງໃນປາງ

ຣາຕີເລີຍ　　　ຮຸ່ງນາຍານເຊົ້າ

ພຣະສເວີຍງາຍແລ້ວ　　　ຕຽມການເດີນດຸ່ງ

ທົງເຄື່ອງຍ້ອງ　　　ດູຣະຫ້ອຍຮູບຂຽນ

ແມ່ນວ່າຕະແປ່ນໜ້າ　　　ກັລເຍດທຽນອົງ　ກໍດີ

ນາງກໍເດົາດາຕົກ　　　ແຕ່ງຕົນຕຽມພ້ອມ

ຖບິມພອນພັຽງ　　　ພັນແສງສີນາດ

ຕະເກີງກອບເກົ້າ　　　ເພີງມ້າວສອດສະເອ້ງ

ທັງເລົ່າສຸບເກີບແກ້ວ　　　ບີງບ່ຽງແພກະສາ

ສັງວານຄໍປະຈິດ　　　ຄ່າເມືອງຄຽນເກົ້າ

ສອງພຣະອົງເຈົ້າ　　ຄືອິນເຫຼົາຫຼີ່
ກໍຫາການເລີດລໍ້　　ດູພັຽງເພດດຽວ　　ແທ້ແລ້ວ.
ແຕ່ນັ້ນທື່ນໆຫ້າງ　　ພົນພອກໂຍທາ
ກອງທານເຂົາ　　ຢູ່ຢາຍຢັ້ງຖ້າ
ຂຸນຫຼວງເຂົ້າ　　ປະນົມເນືອງນົບນາດ
ເຊີນມະຫາຣາຊເຈົ້າ　　ສອງເທົ້າອອກວັງ　　ທ່ຽວເທີ້ນ
ບັດປີ້ຊຸດໂນແມ້ງ　　ຍາມປະເສີດມະຫາໄຊ　　ແທ້ແລ້ວ
ຄອນພຣະໄລປາງຫຼວງ　　ລ່ອງທາງຫາຫ້ອງ
ແຕ່ນັ້ນສອງພຣະອົງຂຶ້ນ　　ພານຄໍາຊ້າງເຄື່ອງ
ເພື່ອງໆຍ້າຍ　　ລາຫ້ອງແຫ່ງປາງ
ອັນວ່າພຣະພໍ່ເຈົ້າ　　ປິຕຸເຣດນາບດາ
ພຣະກໍເມືອຊານມົນ　　ຢື່ຄອຍສອງນ້ອຍ
ເຈົ້າກໍຫ່ຽວຍໆໜ້າ　　ຕາຕອນເຕັ້ນຫຼັ່ງ
ເຍີ້ນສັ່ງລູກອ່ອນນ້ອຍ　　ສຽງຊ້ອຍຊອບຄະດີ.
ຈົ່ງຄ່ອຍໄປດີເປີສອງສີສ້ອຍ　　ບຸດຕາສເມີເບດ　　ກູເອີຍ
ຢ່າໄດ້ມີເຫດຮ້າຍ　　ອົນເຮົ້າຮອດຄີງ　　ແດ່ທ້ອນ
ສອງຈົ່ງຫວ້າຍຍ່ານຟ້າ　　ເມືອຮອດກາສີ　　ທີ່ພຸ້ນ
ຢ່າໄດ້ມີໂຣຄາ　　ບຽດບຽນຕໍາຕ້ອງ
ເຈົ້າຈົ່ງຫອມພົນຕ້າຍ　　ອະຣັນຍາຮອດຢ່າ　　ດີເນີ
ເມືອເຫັນໜ້າປູ່ເຈົ້າ　　ພາຍພຸ້ນສໍາຣານ　　ແດ່ທ້ອນ.

ອັນນຶ່ງລູກຈຶ່ງທູນຂ່າວໃຫ້ ສອງໜໍ່ກະສັດຕາ
ບອກວ່າທາງສິລາ ຊື່ນຊິມດອນດ້ອຍ
ພາຍເຮົາພີ້ ຂໍເປັນເຍີ້ງປ່ຽງ
ສອງຝ່າຍກໍ້ ຄືແປັນແຜ່ນດຽວ ວ່າເນີ
ຊອບເມື່ອໄດ້ປໂຍດແລ້ວ ທຸກສິ່ງສະເດັດການ ເມື່ອໃດ
ຂໍໃຫ້ສອງກຸມານ ຮີບຄືນມາຟ້າວ
ອັນວ່າສິລາຫ້ອງ ຂອງເຮົາຮານຫວ່າງ
ເໝືອນດັ່ງແຫວນຂາດແກ້ວ ສິເສົ້າໝົ່ນພອງ ແທ້ແລ້ວ.
ແຕ່ນັ້ນສອງແຈ່ມເຈົ້າ ເມີນຕໍ່ສິລາ
ເຫັນບິດາ ພ່ຳມາດາແກ້ວ
ສອງກໍຍໍມືໄຫວ້ ວັນທາກົ້ມຂາບ
ເຫິງແຍ່ງຊ້າງ ວອນໄຫວ້ສັ່ງລາ
ຄ່ອຍຢູ່ດີເຢີບິດາໃຫ້ ທັງສອງຕົນປະເສີດ ຂ້ອຍເອີຍ
ຈົ່ງຄ່ອຍຫອນໃພ່ຟ້າ ຄອງຖ້າຢູ່ດີ ແດ່ທ້ອນ
ບັດນີ້ລູກຈັກຮານຂາບໄຫ້ວ ທູນທອດສິອະສາ
ໄກພາຮາ ພາກເມືອງຮານຮ້າງ
ກໍບໍ່ມີນານແທ້ ທັງສອງຊິຄືນຄອບ
ຂໍໃຫ້ສອງແຈ່ມເຈົ້າ ຍືນໝັ້ນສຳຣານ ນັ້ນເນີ.
ຄ້ອນວ່າແລ້ວ ພົນພອກກີຫາ
ເສີນໆພາຍ ລ່ອງທາງເດີນດັ້ນ

ແຍງຫີນຫ້ອງ　　ກາສີເບັດໃສ່
ນີ້ສີບນີ້　　ໄປໜ້າຄ່ຽນຄາວ
　　ແມ້ງບື່ງ ເຖິງ ເຂດຄ້າຍ　　ເຂົ້າຂອບແດນເມືອງ
ຊາວນິຄົມ　　ຊ່ວາແຊວຍິນຫ້ອງ
ເຂົາກໍເນືອງນັບເອົ້າ　　ບາບຸນມາຮອດ
ໄດ້ຍອດແກ້ວ　　ມາພ້ອມອຸ່ນເມືອງ
　　ຄົນຊ່າຫ້ອງ　　ເຊັ່ງແຊ່ສຽງໃສ
ໃຫກາສີ　　ບ່າວສາວສງວນສູ້
ເຂົາຫາກເຫັນສາວກໍ້　　ສີລາດູຕ່າງ
ລາງຄົນເອົ້າຍອກເຢີ້ຍ　　ພຍາສັງນຊ່າງຖແລງ
　　ໂອນໍນ້ອງສາວ ເອີຍອ້າຍກໍມາພົ້ນກໍ້　　ໃສສ່ອງໃນສະພັງ
ສົມກະໃຈຮຽມ　　ວ່າຢາກລົງລອຍຫຼີ້ນ
ພໍໄດ້ມີແຮງຍ້ອນ　　ຫາຍແຄວນຊິໄດ້ບໍ່?
ລືວ່າສະໃຫງ່ມີແຕ່ແຂ້　　ງູຮ້າຍຢູ່ຫວງ　　ນັ້ນເດ?
　　ແຕ່ນັ້ນສາວໜຸ່ມນ້ອຍ　　ກໍ້ຟ່າຍກາສີ
ແຈນໆສຽງ　　ຕອບຊາຍຄໍາເອົ້າ
ໂອນໍພີ່ເອີຍອັນວ່າສະວັງນ້ໍ　　ກາສີແສນຊຸ່ມ
ມັນບໍ່ສົມທີ່ອ້າຍ　　ສະກຸນກວ້າງຢ່າຈາ　　ນັ້ນຫ້ອນ
ຖ້າວ່າ ເຈົ້າບໍ່ເຫັນແກ່ຮ້າຍ　　ກໍ້ຟ່າຍກາສີ　　ດັ່ງນັ້ນ
ກໍບໍ່ມີແນວຫວງ　　ເງືອກງູໃນຫັ້ນ

ອັນວ່າສະອັງນ້ຳ ຕາມໃຈເຈົ້າຊິອາບ ເອົາທ້ອນ
ອ້າຍຢາກຝຸນຍັ້ງນີ້ ໃຜຊິຫ້າມແຫ່ງຂອບ ນັ້ນເດ.
ຄ້ອນກ່າວແລ້ວ ຝູງບ່າວຫົວແຊວ
ເຂົາກໍຍິນກະສັນຈິດ ປອດໃຈນຳຊູ້
ແມ່ນວ່າສາວຮາມເບື້ອງ ກາສີສເມີພາກ
ເຂົາກໍດັ້ນໆຕີ້ນ ດອນຊູ້ປອດສະຄືວ.
ແມ້ງບື່ງຄັບຄາຄ້າຍ ກາຍແດນບ້ານນອກ
ເຂົ້າສູ່ຄຸ້ມ ເມືອງກວ້າງຈື່ນຈົບ
ພູຣະນາດຫ້າວ ເຕີນພຸ່ມຸນຕີ
ເຊົາພົບພັກ ຢູ່ພໍຄາວນ້ອຍ
ແລ້ວຈຶ່ງປຸນສານໃຊ້ ຄົນໃນຂ້າມະຫາດ.
ນຳຂ່າວຂໍ້ ທູນໃຫ້ພໍ່ພຣະອົງ
ບອກຂ່າວແຈ້ງ ຍັງເຫດກີຍາ
ຣາຊາທົງກາສີ ພ່ຳເທວີແກ້ວ
ຍິນຂ່າວບາບຸນນ້ອຍ ຄືນມາເມືອງຣາດ
ພຣະບາດເຈົ້າ ສອງເຕົ້າຊື່ນພຣະໄທ
ແລ້ວຈຶ່ງເຕີນແຕ່ງໃຫ້ ແສນພື່ນມຸນຕີ
ຕຽມການຫຼວງ ຮີບພະລັນເຣວຟ້າວ
ເດົາດາຫ້າງ ພົນແພນຄາດເຄື່ອງ
ໄປຮັບຕ້ອນ ສອງນ້ອຍລູກແພງ ທ່ຽວເຫີນ.

ແຕ່ນັ້ນຂຸນບໍ່ຊ້າ　　ເຮອຮີບປຸນເປືອງ
ເອົາກັບຕົກ　　ແຕ່ງດີດາຫ້າງ
ນຳພົນຍ້າຍ　　ແຍງເຖິງບຸດຣາດ
ເຊີນແຈ່ມເຈົ້າ　　ຂວານນ້ອງສູ່ວຽງ
ຟັງຍິນຄື້ນໆກ້ອງ　　ກອງເສບສວານໄລ
ນົບຕີປະດັບ　　ກ່ອນຊໍຊູງໃຄ້
ມີທັງແຄເຖີບທ້າວ　　ແກກົມແກມປີ່
ພັງຮາດຕີກ່ອນຄ້ອງ　　ສັງໂອ້ອິ່ນສໄນ
ພຣະບາດທ້າວ　　ທັງນາດນາງຄານ
ເສີນໆສະເດັດ　　ດ່ວນພາຍເຖິງຄຸ້ມ
ຄົບຫຼາຍລົ້ນ　　ຕາມຕີນແຫນແຫ່
ສາວບ່າວກ້ຽວ　　ກັນຫຼັ້ນມ່ອນຣະງົມ
ຄ້ອນຮອດແລ້ວ　　ທໍຣາດວັງຫຼວງ
ບາຄານທັງນາງງານ　　ຈອດພົບເຊົາຊ້າງ
ສອງພຣະອົງຍ້າບ　　ລົງພາຍພາກແຍ່ງ
ຂຶ້ນສູ່ທໍ່ຊໍ່ຟ້າ　　ປາງແກ້ວພີ່ພຣະອົງ　　ຫັ້ນແລ້ວ
ເມື່ອນັ້ນພຣະພີ່ເຈົ້າ　　ທັງແມ່ມະເຫສີ
ເທັນບາຄານ　　ຍອດຊາຍບຸນກວ້າງ
ກັບທັງນົງເຍົາຫຼ້າ　　ກັລຍາສະໃພ້ມິ່ງ
ນາຮອະຫ້ອງ　　ສອງເຈົ້າຊື່ນໃຈ

ເຊືອນດັ່ງໄດ້ວາບນ້ຳ    ອັງໃຫຍ່ອະນິມມາ
ຫາຍຈາກໂຣຄາທຸກ    ຍາກແຄວນແສນຊັ້ນ
ສອງພຣະອົງເຈົ້າ    ສະເດັດເຖິງບຸດຣາດ
ຖາມຂ່າວຂີ້    ດອນແກ້ວລູກຕົນ
ມາລືເຈົ້າລູກແກ້ວ    ຕົນປະເສີດສາຍໃຈ    ພໍ່ເອີຍ
ເຈົ້າຄ່ອຍໄປມີໄຊ    ໂຊກດີລືເຈົ້າ
ອັນນຶ່ງເຈົ້າໄປເອົານາງແກ້ວ    ເມືອງໃດມາເພື່ອນ
ຫາກແມ່ນລູກສະໃພ້    ສອງເຖົ້າດັ່ງລື    ພໍ່ເດ?
ອັນວ່າພໍ່ແມ່ນ້ອຍ    ນົງນາດນາງສວັນ    ທີ່ພຸ້ນ
ເພິ່ນກໍຍັງສະບາຍສຸກ    ສ່ຳອານລືເຈົ້າ
ສອງຄ່ອຍເອົາພົນຕ້າຍ    ມາເຖິງເອົາພໍ່    ພາຍພີ້
ກໍບໍ່ຕ້ອງທີ່ຮ້າຍ    ໃດແທ້ຮອດດີ    ແດ່ລືໍ?
ເມື່ອນັ້ນພູເບດຫ້າວ    ຂານຕອບບິດາ
ທັງມາດາ    ຊູ່ອັນເອົາໄຕ້ວ
ລູກກໍໄປເຖິງຫ້ອງ    ສີລາລືເດດ    ພາຍພຸ້ນ
ກໍຫາກໄດ້ດັ່ງແມ້ງ    ໝາຍໝັ້ນປາຖນາ
ຄັນວ່າໄປຈານ້ອງ    ນາງງາມປາກຕີ່
ເພິ່ນກໍຍິນຍອບບ້ານ    ເມືອງໃຫ້ນັ້ງປອງ
ອັນແຕ່ກົງນະຄອນຫ້ອງ    ສີລານະຄອນຣາດ
ລູກກໍໄດ້ຜ່ານພື້ນ    ເປັນເຈົ້ານັ້ງປອງ

ອັນນຶ່ງນ້ອງແກ່ນແກ້ວ    ໂສມສະອາດຈັນທະຈອນ

ກໍຫາກເປັນມະເຫສີ    ນຶ່ງຂວັນຂອງຂ້າ

ນັບວ່າບຸດຕີໃພ້    ທັງສອງພໍ່ແມ່    ຈິງແລ້ວ

ນາງກໍມາຂາບໄຫ້ວ    ຈອນຊ້ອຍປູ່ພຍາ    ປີ້ແລ້ວ

ອັນນຶ່ງຣາຊາເຈົ້າ    ທັງສອງພໍ່ແມ່    ນາງນັ້ນ

ເພິ່ນກໍຍັງຄ່ອຍສ້າງ    ສິນຊ້ອຍສ່ຳຣານ    ພໍ່ເອີຍ

ແຕ່ນັ້ນນ່າຍໆໜ້າ    ພຍາໃຫຍ່ກາສີ

ທັງເທວີ    ແມ່ເມືອງເປັນເຈົ້າ

ສອງກໍຍິນດີແທ້    ບາຍແຂນສະໃພ້ນຶ່ງ

ມືລູບເກົ້າ    ໂລມໄລ້ລອດດາ

ມາລືສເນຫາແກ້ວ    ບຸດຕີຕິນເນດ    ແມ່ເອີຍ

ແມ່ກໍເຫັນໜ້ານ້ອຍ    ຫາຍແຄ້ນສວ່າງໂພຍ    ແມ່ແລ້ວ

ບັດນີ້ກາສີທ້ອງ    ກາຍເປັນສວັນໂລກ    ເສັ້ງແລ້ວ

ຂໍໃຫ້ລູກຄ່ອຍປ້ອງ    ເມືອງບ້ານຊ່ອຍບາ    ແມ່ທ້ອນ

ພໍ່ແມ່ເຖົ້າແກ່ແລ້ວ    ຂໍເພິ່ງສິນພານ    ລູກແລ້ວ

ຂໍແກ່ນິງຄາບກູ    ຢູ່ຍືນຍາຮ້ອນ

ສວັສດີສ້າງ    ເມືອງເຮົາຕູ້ມໄພ່

ອາຍຸໄດ້    ພັນເຂົ້າໝື່ນອະສາ    ນັ້ນທ້ອນ

ແຕ່ນັ້ນນາງນາດນ້ອຍ    ກົ້ມຂາບຍໍມື

ຂໍພອນສຸກ    ເພິ່ງບຸນຄຸນແກ້ວ

ຂໍໃຫ້ປາຣະມີເຈົ້າ ທັງສອງງອໍເຫຼື່ອມ ລູກທ້ອນ
ລູກນີ້ຂໍເພິ່ງເງື້ອມ ບຸນເຈົ້າເຫຼື່ອມງອໍ ແທ້ແລ້ວ.
ເມື່ອນັ້ນພຣະບາດເຈົ້າ ຕົບຜ່ານກາລີ
ພຣະຈຶ່ງມີຄໍາຈາ ລູກແພງພອຍຕ້ານ
ລູກຈິ່ງເມືອທໍແກ້ວ ວິໄຊຍົນຜາສາດ ບາທ້ອນ
ເຈົ້າຈິ່ງພາບາດບ້ອງ ເມືອຫ້ອງພັກເຊົາ ພີ່ເນີ.
ຄ້ອນວ່າແລ້ວ ບາບ່າວທັງນາງ
ທູນທັນຍາໍ ພຣະຍອດເມືອງສອງເຈົ້າ
ເອົາຕົບຂື້ນ ວິໄຊຍົນຂອງເກົ່າ
ເນົາຢູ່ຜາສາດກວ້າງ ຫາຍຮ້ອນສວ່າງອອນ ແທ້ແລ້ວ
ອັນວ່າພວກໄພ່ຟ້າ ທຸກທີ່ເຂົາຂຸນ
ທັງຍິງຊາຍ ຊູ່ຂຸນຄົບໜ້າ
ເຂົາກໍພາກັນພ້ອມ ເຊົາແຮງພັກຈອດ
ຝູງຊ້າງມ້າ ນາຍແກ້ເຄື່ອງຄອນ
ນາຍນັກການກົ້ ກາສີຈັດແຈ່ງ
ໃຫ້ພັກຍັ້ງ ຫຼາຍຮ້ານຕ່າງໂຮງ
ຕັ້ງຫາກຄືກຄື້ນແທ້ ກຸງເທດກາສີ
ຄົນຫຼາຍເຫຼືອ ອື້ງອໍກັນແໜ້ນ
ຍູສນຸກລົ້ນ ຍິງຊາຍສາວບ່າວ
ຍູ່ຫ່າງເຂົາຫ່ງອຫຼົ້ນ ລືມຊູ້ຕ່າງເມືອງ

ຫ້າມຈຳໜ່າຍ

ນັບແຕ່ພຣະບາດທ້າວ　　ຄືນຄອບນະຄອນຂວາງ
ກໍຫາກອຸດົມໂດຍ　　ດັ່ງດາວດິງຟ້າ
ຄົນບໍ່ມີອຶດຂ້ອງ　　ຊິງກັນຍາດເຂດ
ນັຄເຣດກວ້າງ　　ຍູສ້າງສ່ຳຣານ
ບໍ່ເດືອດຮ້ອນ　　ປະການສິ່ງສັນໃດ
ໂພຍໄພສັງ　　ກໍບໍ່ມີມາໃກ້
ແມ່ນວ່າການເຈັບໄຂ້　　ໂຣຄາເຫີນຫ່າງ
ຢູ່ຫ່າງຝູງໄພ່ນ້ອຍ　　ກະທຳສ້າງໄຮ່ນາ
ພວກພໍ່ຄ້າ　　ລົງຕລາດຂາຍຂອງ
ສັມມະນາສົງ　　ສູດຮຽນທັມຮູ້
ຝູງໝູ່ຄົນຊະຣາເຖົ້າ　　ຈຳສິນຟັງເທດ
ລະເຫດຮ້າຍ　　ຫາຍຮ້ອນຢູ່ເຢັນ　　ແທ້ແລ້ວ.

## ບັ້ນທ້າວອໍຣະຈິດພານາງຈັນທະຈອນກັບຄືນພຣະນະຄອນສີລາ.

ຈຽມແຕ່ບາບ່າວທ້າວ　　ທັງນາດນາງຄານ
ມາຢາມເມືອງ　　ຢູ່ບານຫຼາຍມື້
ປີກະຕິນ້ອຍ　　ທັງສອງອິນປູກ
ທຽວຂາບໄຫ້ວ　　ສອງໄທ້ຂາບປະນົມ
ເຖິງເມື່ອຍາມຮຸ່ງເຊົ້າ　　ຂຶ້ນສູ່ຫໍປາງ

ວັນທາຫຸນ ຂາບຕີນຈອມເຈົ້າ
ກໍທາກເທິງນານແລ້ວ ຫຼາຍວັນແອນຂນາດ
ສອງຈິ່ງຫຸນບາດພື້ນ ລາເຈົ້າຈາກຄືນ
ຝູງຂ້ານ້ອຍ ມາຮອດເທິງນານ ພຣະເອີຍ
ຍຽວວ່າທາງສີລາ ເລົ່າຄອງເທັນໜ້າ
ເພືອຂ້າຂໍລາໃຫ້ ທັງສອງພໍ່ແມ່
ເມືອສູ່ບ້ານ ພາຍພຸ້ນພາກຄືນ ກ່ອນແລ້ວ.
ແຕ່ນັ້ນພຣະພໍ່ເຈົ້າ ທັງແມ່ມາດາ
ກໍບໍ່ຂືນບາຄານ ລູກຕົນທັງໃພ້
ຄັນຈັກຂືນຂັດໄວ້ ສອງພຣະອົງນ້ອມນ່ຽວ
ຄຶດເຫັນສອງຜູ້ເຖົ້າ ທັງພຸນສ່ວນຊິຄອງ
ກໍຈິ່ງຕ້ານສັ່ງເຈົ້າ ສອງອ່ອນກຸມານ
ນົງຄານເອີຍ ໃຫ້ຄ່ອຍເມືອດີທ້ອນ
ຄັນວ່າປີເດືອນຕັ້ງ ລູນເລີຍແຖມຖ່າຍ ມານັ້ນ
ສອງຄ່ອຍຫວ້າຍຍ່ານຟ້າ ມາພີ້ຢ່ອງຢານ ແດ່ເນີ
ອັນວ່າເມືອງຝ່າຍພີ້ ນອນນອບສອງສີ ແຫ້ແລ້ວ
ບໍ່ກວ່າບຸນມີກູ ຄອບຄອງເປັນເຈົ້າ
ພໍ່ແມ່ຈອນເຖິງເທົ້າ ຊະຣາການເຖົ້າແກ່ ມາແລ້ວ
ຈັກຊິມໍຣະນາດມັ້ຽນ ຕາຍແຫ້ເມື່ອໃດ ບໍ່ຮູ້
ອັນນຶ່ງຄັນເຈົ້າຮູ້ຂ່າວຮ້າຍ ກ້າວຝ່າຍການສີ ເມື່ອໃດ

ໃຫ້ລູກພາກັນມາ ເບິ່ງແຍງໄວຟ້າວ
ການດີຮ້າຍ ເອົາກັນຟັງຂ່າວ
ສ່ວນວ່າເມືອງຝ່າຍພຸ້ນ ທັງພີ່ເພິ່ງບາ ພໍ່ແລ້ວ.
ຄ້ອນວ່າພໍ່ສັ້ງແລ້ວ ທ້າວຂາບອັນຫາ
ທັງນາງງາມ ຂາບລາສອງເຈົ້າ
ເອົາກັນຍ້າຍ ລົງປາງຍາສາດ
ຂຶ້ນສູ່ຫ້ອງ ຫໍແກ້ວແຕ່ງຕົບ
ສະເວີຍໂພດແລ້ວ ງາຍເລີກບໍຣະບອນ
ບາຄານເຕີນເສນາ ແຕ່ງການໄວຟ້າວ
ບອກໃຫ້ຊາວຂຸນກໍ້ ສີລາຕົກແຕ່ງ
ຫ້າງຊ້າງມ້າ ພົບພ້ອມຮີບພະລັນ
ຈັກຕ່າວຕັ້ງ ຄືນຄອບສີລາ
ຍານກອງແຄ ອອກເມືອງຍວງຍ້າຍ
ແຕ່ນັ້ນເສນາຫ້າງ ເດົາດາຕົກແຕ່ງ
ຂຸນເຄົ່ງຂ້ຽວ ການຟ້າວປ່າວເປືອງ
ຈັດພອກພ້ອມ ທຸກສ່ຳເສນາ
ໄວວາຕົກ ແຕ່ງເສັດເລີຍແລ້ວ
ຄົບບື່ງວັນວຽນຂຶ້ນ ກອງແຄແຄນຮອດ
ພຣະບາດທ້າວ ອວານນ້ອງຫ່ຽວລົງ
ຂຶ້ນແຍ່ງຊ້າງ ສານອາດພາຍອັນ

ສອງກໍຍໍມືທູນ ສົ່ງປາວປາງແກ້ວ
ຄ່ອຍຢູ່ດີເຢີສິງຫິນຫ້ອງ ກາສີລີໂລກ ກູເອີຍ
ເຂືອຈັກໄດ້ພາກຮ້າງ ວັນນີ້ຕ່າວຄືນ ກ່ອນແລ້ວ
ຜັດວ່າຫຼາຍຂອບມື້ ຈັກຄືນຄອບຄອຍເຫັນ
ກຸງນະຄອນກາສີ ໃຫ້ຢູ່ເຢັນຍາເສົ້າ
ອັນນຶ່ງສອງກະສັດເຈົ້າ ປີຕານາຕຸອອດ ກໍດີ
ກັບທັງເສເນດພ້ອມ ພິນຂ້າໄພ່ເມືອງ
ຂໍຈົ່ງສຸກຢູ່ສ້າງ ເຮືອງຮຸ່ງກະເສີນສີ ແດ່ທ້ອນ
ຢ່າໄດ້ມີໂພຍເຂັນ ບຽດບຽນຕຳຕ້ອງ
ຈົ່ງໃຫ້ຄອງເມືອງລ້າງ ສວັສດີເຫົ້າຊື່
ຄວາມເຈັບຂໍຢ່າໄດ້ ຄວາມໄຂ້ຢ່າໃຫ້ມີ ແດ່ທ້ອນ.
ຄ້ອນວ່າສອງສົ່ງແລ້ວ ສງັດຢູ່ມີຈາ
ເສນາອວານພິນແພນ ລ່ອງທາງຍອງຍ້າຍ
ຍືດໆເຂົ້າ ຂວ້ານເລົ່າດອນເລົາ
ຫຼາຍວັນຄືນ ຄຽນຄາວເດີນດ້າວ
ດີທີ່ບຸນມີທ້າວ ຫອມພິນເດີນດຸ່ງ
ຫວ້າຍຫວ່າງໄມ້ ແສນຫ້ອຍແງ່ພະນອມ
ກໍຈົ່ງເມືອຮອດຫ້ອງ ນະຄອນໃຫຍ່ສີລາ
ບາຄານທັງນາງງາມ ຮອດເມືອງເຊົາຍັ້ງ
ອັນວ່າເສນາພ້ອມ ພຽງເຖິງທຸກໝູ່

| | | |
|---|---|---|
| ຄົນແລ່ນຕ້ອນ | ເຫັນໜ້າລູກເມັງ | |
| ອັນວ່າພຣະພໍ່ເຈົ້າ | ທັງແມ່ນະເທວີ | |
| ຍິນດີໂດຍ | ດັ່ງໄດ້ເນົາວິມານຟ້າ | |
| ເພື່ອວ່າໄດ້ເຫັນໜ້າ | ບຸດຕາມາຮອດ | |
| ເຈົ້າກໍອຸ້ມກອດແກ້ວ | ສອງຫຼ້ອນເລົ່າຖາມ | |
| ມາລືສາຍໃຈຂ້ອຍ | ບຸດຕາຕົນລູກ | ຂ້ອຍເອີຍ |
| ເຂືອຄ່ອຍພາໄພ່ຂອ້ານປ່າໄມ້ | ມາພີ້ຮອດດີ | ແດ່ລື |
| ອັນວ່າພູມິເຈົ້າ | ສອງດອງກໍ້ຝ່າຍ | ພາຍພຸ້ນ |
| ຍັງຄ່ອຍສຸກຢູ່ສ້າງ | ສິນຊ້ອຍເພິ່ງບຸນ | ແດ່ລືະ |
| ເມື່ອນັ້ນນ່າຍໆໜ້າ | ພຣະບາດບາໄທ | |
| ຈາສຽງໃສ | ຕອບອີງສອງເຈົ້າ | |
| ລູກຄ່ອຍເອົາພົນຫ້າຍ | ມາດີໂດຍສະດວກ | |
| ກໍບໍ່ຕ້ອງທີ່ຮ້າຍ | ບຸນເຈົ້າເຫຼື່ອນາງວໍ | ແທ້ແລ້ວ |
| ອັນປື່ງຕົນພຣະເຈົ້າໜີ່ຟ້າ | ກໍ້ຝ່າຍກາສີ | ທີ່ພຸ້ນ |
| ສອງກໍມີຄວາມສຸກ | ສ່ຳຮາບຫາຍຮ້ອນ | |
| ເພີ່ນຍັງມີຄວາມໃຫ້ວ | ມາເຖິງຖານຂ່າວ | |
| ຂໍໃຫ້ສອງໜີ່ແກ້ວ | ທັງພີ້ຄ່ອຍສະບາຍ | ວ່າອັນ |
| ຊອບເມື່ອການສະເດັດສ້ຽງ | ໄຂຂ່າວຖາມເຖິງ | |
| ບິດາທັງມາດາ | ຊື່ນໃຈດອນນ້ອຍ | |
| ບາຄານຫ້າວ | ທັງນາງມັ້ງນປາກ | |

ແລ້ວຈຶ່ງລາພີ່ຂຶ້ນ     ທີ່ແກ້ວຢູ່ສະຖຽນ
ແມ່ນວ່າເສເນດບ້ອມ     ພົນໄພ່ເດີນດອມ     ກໍດີ
ເຂົາກໍເອົາກັນຈັດ     ແຕ່ງຂອງຂົນມ້ຽນ
ກຸນຊະໂຣຊ້າງ     ພັ້ງພາຍມ້ານຶ່ງ
ລົດເຄື່ອງໄວ້     ເອົາມ້ຽນທີ່ຄອນ
ເຂົາກໍລາສູ່ຫ້ອງ     ເຮືອນແຫ່ງໃຍມັ້ນ
ບໍຣະບອນເລີຍ     ຊຸ່ຊຸມຫາຫ້ອງ
ອັນວ່າສອງກະສັດເຈົ້າ     ເນົາບະຄອນຕຸ້ມໄພ່
ຍົດໃຫຍ່ກວ້າງ     ກອນພື້ນໂລກລື
ຄັນວ່າຮອດຂອບຕັ້ງ     ປີໃໝ່ມາແຖມ     ເມື່ອໃດ
ບາກໍພາເມ້ຽຂວັນ     ຫ່ຽວຍາມເມືອງບ້ານ
ກໍຫາກປີກກະຕິແທ້     ເປັນມາບໍ່ໄດ້ຂາດ
ເມືອງໃຫຍ່ສອງຝ່າຍຟ້າ     ບາຫົວອົ້ງສເອີຍ     ແທ້ແລ້ວ.
ກໍຫາກຢູ່ເລີດລ້ຳ     ສນຸກຍິ່ງເຫຼືອຫຼາຍ
ສີລາທັງກາສີ     ດັ່ງດຽວໂດຍດ້ານ
ດ້ວຍເດດບຸນສອງເຈົ້າ     ປາຣະມີມາຍມາກ
ສອງຫາກໄດ້ກໍ່ສ້າງ     ຫຼາຍຊັ້ນຊາດຫຼັງ     ເຈົ້າເອີຍ.
ໂລກຈຶ່ງເຮືອງຮຸ່ງດ້ວຍ     ໂດຍເພື່ງສົມພານ
ກີຢຸກການໃດໆ     ບໍ່ໄດ້ມາຕໍ່ຕ້ອງ
ອາຍຸຖອງເຖິງຖ້ວນ     ຂັນທະມານມ້າງມຸ່ນ     ເມື່ອໃດ

ສອງກໍໄດ້ຂື້ນຟ້າ ຫາຫ້ອງບ່ອນກະເສີມ ແທ້ແລ້ວ

ກໍທາງແລ້ວທີ່ນີ້ ນິກຈອກນິທານ

ຕຳນານເດີມຂອງລາວ ກ່າວມານີໄວ້

ຮຽນເອົາໃຈກອຍແກ້ ດັດແປງແສງສິ່ງ

ສຳເຣັດລົງຮຽບຮ້ອຍ ພຽງນີ້ບ່ອນຄອນ ກ່ອນແລ້ວ./.

----==00 ຈົບແລ້ວບໍຣິບູນ 00==--

ວັນທີ່ ໑ ກໍຣະກະດາ ໑໙໗໐

ກ່າຍ ແລະ ກອດ

ໂດຍ ມະຫາຈູມ ຈິດຕະພິດ

ພິມ ໂດຍ ທ້າວ ອ່ອນຈັນ ຈັນສວັດ

ອັດສຳເນົາ ໂດຍ ທ້າວ ອຸທັຍ

ພິມທີ່ໂຮງພິມແຫ່ງຊາດ ວຽງຈັນ